# ກໍ່ສ້າງພັກ

**ວາລະສານເຜີຍແຜ່, ແນະນຳວຽກງານຈັດຕັ້ງ, ກໍ່ສ້າງພັກ-ພະນັກງານ**
**ຂອງຄະນະຈັດຕັ້ງສູນກາງພັກ**

## ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກໃຫ້ປະກົດຜົນເປັນຈິງ

ສະຫາຍນາງສີໃສລືເດດມູນສອນກຳມະການກົມການເມືອງສູນກາງພັກ,ເລຂາທິການສູນກາງພັກ,ຫົວໜ້າຄະນະຈັດຕັ້ງສູນກາງພັກ
ພ້ອມດ້ວຍຄະນະ ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ ເມືອງແມດ ແຂວງວຽງຈັນ

(ວັນທີ 15-16 ພະຈິກ 2023)

**ສະບັບ: 262** **ປະຈຳເດືອນ ທັນວາ 2023**

Korsangphakmagazine@gmail.com

ໃນລະຫວ່າງວັນທີ 22-23 ພະຈິກ 2023 ສະຫາຍ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ ພ້ອມດ້ວຍຄະນະ ລົງຊຸກຍູ້ຕິດຕາມວຽກງານກໍ່ສ້າງພັກ-ພະນັກງານຢູ່ແຂວງບໍລິຄຳໄຊ ໃຫ້ກຽດຕ້ອນຮັບຢ່າງໂດຍສະຫາຍ ປອ ກອງແກ້ວ ໄຊສົງຄາມ ກຳມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງບໍລິຄຳໄຊ ພ້ອມດ້ວຍການນຳຫຼັກແຫຼ່ງຂອງແຂວງ, ເມືອງ ຕະຫຼອດຮອດສະມາຊິກພັກ-ພະນັກງານ ແລະ ພໍ່ແມ່ປະຊາຊົນ ຊາວແຂວງບໍລິຄຳໄຊ.

ວັນທີ 05 ທັນວາ 2023 ຄະນະຈັດຕັ້ງສູນກາງພັກ ໄດ້ຈັດກອງປະຊຸມ 2 ວາລະວຽກງານບໍລິຫານ-ການເງິນແລະບຸກຄະລາກອນພາຍໃນສຳນັກງານຂອງຕົນ ໂດຍການເປັນປະທານຂອງສະຫາຍ ນາງ ສີໃສ ລືເດດມູນສອນ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ເລຂາຄະນະພັກ, ຫົວໜ້າຄະນະຈັດຕັ້ງສູນກາງພັກ, ມີຄະນະພັກ ຄະນະຈັດຕັ້ງສູນກາງພັກ, ບັນດາຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ, ຫົວໜ້າກົມ, ຮອງຫົວໜ້າກົມ ແລະ ພະນັກງານ-ລັດຖະກອນທົ່ວສຳນັກງານຄະນະຈັດຕັ້ງສູນກາງພັກເຂົ້າຮ່ວມຢ່າງພ້ອມພຽງ.

ໃນລະຫວ່າງເດືອນພະຈິກຫາຕົ້ນເດືອນທັນວາ ກະຊວງສາທາລະນະສຸກ, ຄະນະຈັດຕັ້ງສູນກາງພັກ, ທະນາຄານແຫ່ງສປປລາວ ໄດ້ຈັດພິທີເຜີຍແຜ່ເຊື່ອມຊຶມເອກະສານແລະປາຖະກະຖາອັນສຳຄັນຂອງພັກ, ຂອງຊາດ ເປັນຕົ້ນແມ່ນ: ມະຕິຄົບຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ XI, ຄຳແນະນຳກ່ຽວກັບການດຳເນີນກອງປະຊຸມ3ຂັ້ນຂອງພັກແລະປາຖະກະຖາວັນຊາດທີ 2ທັນວາຄົບຮອບ48ປີແລະວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 103 ປີ.

ວັນທີ 14 ທັນວາ 2023 ສະຫາຍ ທອງຈັນ ໄຊຍະພູມຄຳ ກຳມະການປະຈຳພັກ, ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກພ້ອມດ້ວຍຄະນະ ໄດ້ຕ້ອນຮັບຄະນະຊ່ຽວຊານຈາກມະຫາວິທະຍາໄລປະຊາຊົນຈີນ ໃນໂອກາດມາເຄື່ອນໄຫວເຮັດວຽກຢູ່ ສປປ ລາວ ເຊິ່ງນຳພາຄະນະໂດຍ ສະຫາຍ ອູຟູລາຍ (WU FULAI)ຮອງເລຂາຄະນະພັກ, ປະທານກວດກາພັກມະຫາວິທະຍາໄລປະຊາຊົນຈີນ, ກຳມະການກວດກາລັດຂອງຄະນະກວດກາລັດແຫ່ງຊາດ ປະຈຳມະຫາວິທະຍາໄລປະຊາຊົນຈີນ ພ້ອມດ້ວຍຄະນະ.

ໃນວັນທີ 15 ພະຈິກ 2023 ທີມງານຕິດຕາມການລົງຢ້ຽມຢາມ ແລະ ເຮັດວຽກຂອງຫົວໜ້າຄະນະຈັດຕັ້ງສູນກາງພັກ ທີ່ລົງເຄື່ອນໄຫວເຮັດວຽກຢູ່ເມືອງແມດ ແຂວງວຽງຈັນ ໄດ້ມອບຄອມພິວເຕີແລະ ປິ້ນເຕີ ຢ່າງລະ1ຊຸດ ໃຫ້ຄະນະຈັດຕັ້ງເມືອງແມດ ແຂວງວຽງຈັນ ເພື່ອນຳໃຊ້ເຂົ້າໃນວຽກງານຂອງຕົນ. ຕາງໜ້າມອບໂດຍສະຫາຍວຽງເພັດ ແສງທອງ ຮອງຫົວໜ້າກົມກໍ່ສ້າງພະນັກງານຄະນະຈັດຕັ້ງສູນກາງພັກແລະຮັບໂດຍສະຫາຍກົ່ງທອງ ພັນທະວົງ ກຳມະການພັກເມືອງຫົວໜ້າຄະນະຈັດຕັ້ງເມືອງແມດ.

ໃນລະຫວ່າງວັນທີ 15-22 ພະຈິກ 2023 ພະນັກງານກົມໂຄສະນາກໍ່ສ້າງພັກ-ພະນັກງານ ຄະນະຈັດຕັ້ງສູນກາງພັກ ໄດ້ເຄື່ອນໄຫວວຽກວິຊາສະເພາະຢູ່ແຂວງຜົ້ງສາລີ ນຳພາໂດຍ ທ່ານພອນສະຫວັນ ໄຊຊະນະ ຫົວໜ້າກົມໂຄສະນາກໍ່ສ້າງພັກ-ພະນັກງານພ້ອມດ້ວຍຄະນະ ໄດ້ພົບປະກັບທີມງານຄະນະຈັດຕັ້ງແຂວງຜົ້ງສາລີ.

ວັນທີ 11 ທັນວາ 2023 ສະຫະພັນກຳມະບານ ຄະນະຈັດຕັ້ງສູນກາງພັກ ກັບສະຫະພັນກຳມະບານທະນາຄານແຫ່ງ ສປປ ລາວ ຈັດແຂ່ງຂັນກິລາມິດຕະພາບ ເນື່ອງໃນໂອກາດສະເຫຼີມສະຫຼອງວັນຊາດ ທີ 2 ທັນວາ ຄົບຮອບ 48 ປີ ແລະ ວັນຄ້າຍວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 103 ປີ ໃຫ້ເປັນຂະບວນຟົດຟື້ນ ທີ່ເດີ່ນສະຖາບັນການທະນາຄານ.

# ຊົມເຊີຍວັນສ້າງຕັ້ງ ສປປ ລາວ ຄົບຮອບ 48 ປີ ຢ່າງສຸດໃຈ ( 2.12.1975-2.12.2023 )

ໂດຍ: ນາງ ພິດສະໄໝ

ວັນສະຖາປານາ ເປັນປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນວັນໜຶ່ງທີ່ມີຄວາມໝາຍສຳຄັນ ເປັນຂີດໝາຍໃນການໄຂສັງກາດໃໝ່ ວັນທີ 2 ທັນວາ 1975 ຫຼື ວັນຊາດ ສປປ ລາວ ມາຮອດ ວັນທີ 2 ທັນວາ 2023 ກໍ່ນັບວ່າມີອາຍຸ 48 ປີພໍດີ ເຊິ່ງໄດ້ນຳເອົາຄວາມປິຕິເບີກບານມ່ວນຊື່ນມາສູ່ປະຊາຊົນລາວບັນດາເຜົ່າຢ່າງໃຫຍ່ຫຼວງ; ໂດຍພາຍໃຕ້ການນຳພາອັນປີຊາສາມາດ ແລະ ສະຫຼາດສ່ອງໃສຂອງພັກປະຊາຊົນ ປະຕິວັດລາວ ໄດ້ສາມັກຄີກັນຕໍ່ສູ້ຢ່າງພິລະອາດຫານ ຕ້ານການຮຸກຮານ ແລະ ຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ໃໝ່ ສາມາດປົດປ່ອຍປະເທດຊາດຢ່າງມີໄຊ, ໄດ້ເຮັດໃຫ້ປະເທດຊາດ ແລະ ປະຊາຊົນຍາດໄດ້ສັນຕິພາບ, ປະເທດຊາດມີຄວາມໝັ້ນຄົງ ແລະ ມີຄວາມສະຫງົບສຸກ, ພື້ນຖານໂຄງລ່າງທາງ ດ້ານເສດຖະກິດ, ວັດທະນະທຳ-ສັງຄົມໄດ້ຮັບການພັດທະນາຂະຫຍາຍຕົວຢ່າງຮອບດ້ານ, ຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າໄດ້ຮັບການປັບປຸງແກ້ໄຂດີຂຶ້ນ.

ວັນທີ 2 ທັນວາ ຂອງ ສປປ ລາວ ແມ່ນມື້ທີ່ມີຄວາມໝາຍສຳຄັນທາງປະຫວັດສາດ; ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າໄດ້ມີອິດສະຫຼະພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ; ແມ່ນວັນທີ່ປະເທດລາວ ໄດ້ມີເອກະລາດຢ່າງສົມບູນ ແລະ ມີອະທິປະໄຕຢ່າງຄົບຖ້ວນ, ມີທີ່ຕັ້ງອັນສົມກຽດ ແລະ ມີຖານະເທົ່າທຽມກັບປະເທດອື່ນໆໃນເວທີປະຊາຄົມໂລກ. ເພາະມັນແມ່ນມື້ແຫ່ງການປ່ຽນແປງຄັ້ງຍິ່ງໃຫຍ່ທາງດ້ານຊີວິດການເມືອງຂອງປະເທດຊາດ ແລະ ປະຊາຊົນ, ມັນແມ່ນມື້ເປີດສັງກາດໃໝ່ແຫ່ງຊາດ ແລະ ຊີວິດ ຂອງປະຊາຊົນລາວທີ່ເຄີຍນອນຈົມຢູ່ໃນຄວາມມືດມົນ, ປະຊາຊົນຂາດສິດເສລີພາບ ປະຊາທິປະໄຕ, ຖືກກົດຂີ່ຂູດຮີດມາເປັນເວລາດົນນານທີ່ເຕັມໄປດ້ວຍຄວາມທຸກ ແລະ ທໍລະມານ ໄດ້ຕື່ນຂຶ້ນມາພົບພໍ້ກັບແສງສະຫວ່າງແຫ່ງ ສັນຕິພາບ, ເອກະລາດແຫ່ງຊາດ. ພ້ອມກັນນັ້ນ, ກໍ່ເປັນມື້ທີ່ຊາດ ແລະ ປະຊາຊົນລາວ ໄດ້ຫຼຸດພົ້ນອອກຈາກກອງໄຟສົງຄາມ ທີ່ເກີດຈາກການຮຸກຮານຂອງຈັກກະພັດຕ່າງດ້າວ ທີ່ເຜົາໄໝ້ປະເທດຊາດມາເປັນເວລາດົນກວ່າເຄິ່ງສະຕະວັດ. ຍ້ອນແນວນັ້ນ ການປົດປ່ອຍປະເທດຊາດ, ໂຄ່ນລົ້ມລະບອບສັກດີນາປະຕິການ, ຍຶດອຳນາດມາມືປະຊາຊົນ ແລະ ສາມາດປົດປ່ອຍປະເທດຊາດຢ່າງມີໄຊ, ສ້າງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975; ປະຊາຊົນບັນດາເຜົ່າຈຶ່ງຖືວ່າມື້ນັ້ນເປັນໂອກາດ ທີ່ສຳຄັນ ແລະ ຍິ່ງໄປກວ່ານັ້ນ ວັນຊາດທີ່ມີອາຍຸຄົບຮອບ 48 ປີ ທີ່ປະເທດຊາດຢູ່ໃນຄວາມສະຫງົບສຸກ ແລະ ມີຄວາມກ້າວໜ້າຮອບດ້ານກໍ່ຍິ່ງເຮັດໃຫ້ຄວາມປິຕິຊົມຊື່ນຍິ່ງເພີ່ມທະວີຂຶ້ນ.

ໄລຍະ 10 ປີຕົ້ນແຫ່ງການປົກປັກຮັກສາ ແລະ ພັດທະນາປະເທດຊາດ (1975-1985) ປະເທດເຮົາ ໄດ້ປະເຊີນກັບຄວາມຫຍຸ້ງຍາກຫຼາຍປະການເຊັ່ນ: ໄດ້ຮັບຜົນຮ້າຍອັນໜັກໜ່ວງຈາກສົງຄາມ, ຊາວກະສິກອນ ກວມເອົາກວ່າ 90% ຂອງປະຊາກອນ, ລະດັບຄວາມຮູ້ ຂອງ

ປະຊາຊົນຕໍ່າ, ປະຊາຊົນກຶກໜັງສືປະມານ 90% ຂອງພົນລະເມືອງ, ບໍ່ທັນມີກົນໄກຄຸ້ມຄອງເສດຖະກິດທີ່ຄົບຊຸດ ແລະ ສອດຄ່ອງ; ສະພາບແວດລ້ອມຫຼາຍຢ່າງບໍ່ອຳນວຍ, ພວກອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ ບໍ່ໄດ້ລົດລະໃນການທຳລາຍມ້າງເພລະບອບໃໝ່ພວກເຮົາ; ແຕ່ຍ້ອນພວກເຮົາມີຄວາມສາມັກຄີ ຕັດສິນໃຈບຸກບືນກ້າວຂຶ້ນຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າພາຍໃຕ້ການນຳພາຂອງພັກ ທີ່ມີແນວທາງຖືກຕ້ອງບວກກັບການຊ່ວຍເຫຼືອອັນລ້ຳຄ່າຂອງເພື່ອນມິດ ແລະ ສາກົນ. ພວກເຮົາຈຶ່ງປົກປັກຮັກສາເອກະລາດ, ອະທິປະໄຕ ແລະ ປົກປັກຮັກສາລະບອບໃໝ່ໄວ້ຢ່າງໝັ້ນຄົງ, ປະເທດຊາດມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍເທື່ອລະກ້າວ ສາມາດປະຕິບັດບັນດາຈຸດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີແຫ່ງລັດ ຄັ້ງທີ I ສຳເລັດ ໂດຍພື້ນຖານ, ອັນໄດ້ປະກອບສ່ວນສ້າງປະຖົມປັດໃຈ ແລະ ເງື່ອນໄຂສະດວກໃຫ້ແກ່ການສືບຕໍ່ກ້າວຂຶ້ນຂອງປະເທດເຮົາ, ຕັ້ງໜ້າປຸກລະດົມຂະບວນການເຄື່ອນໄຫວຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃຫ້ປະກົດຜົນເປັນຈິງ ເພື່ອບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ສິ່ງສຳຄັນຕ້ອງຮັບປະກັນໃຫ້ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ ແລະ ເສດຖະກິດມະຫາພາກມີຄວາມໝັ້ນທ່ຽງ; ເພີ່ມທະວີຄວາມສັກສິດແຫ່ງການຄຸ້ມຄອງລັດຄຸ້ມຄອງສັງຄົມຕາມທິດພັກນຳພາ, ລັດຄຸ້ມຄອງດ້ວຍກົດໝາຍ ແລະ ປະຊາຊົນເປັນເຈົ້າເຂົ້າຮ່ວມ; ເຮັດໃຫ້ສັງຄົມມີຄວາມສະຫງົບ, ສາມັກຄີປອງດອງ ແລະ ມີການພັດທະນາດ້ວຍຄວາມໜັກແໜ້ນຕໍ່ເນື່ອງ; ເອົາໃຈໃສ່ປະຕິບັດແນວທາງການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ໂດຍສະເພາະກັບບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດໃກ້ຄຽງກໍ່ຄືບັນດາປະເທດໃນປະຊາຄົມອາຊຽນ, ອົງການຈັດຕັ້ງສາກົນ ແລະ ປະເທດເພື່ອນມິດໃນໂລກ, ອັນນີ້ແມ່ນປັດໄຈອັນຈຳເປັນ ແລະ ຂາດບໍ່ໄດ້ ເພື່ອສ້າງເປັນກຳລັງແຮງສັງລວມເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາສ້າງສາປະເທດຊາດ. ພະນັກງານ, ສະມາຊິກພັກ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ພ້ອມກັນສະເຫຼີມສະຫຼອງ ແລະ ຊົມເຊີຍວັນສ້າງຕັ້ງ ສປປ ລາວ ຄົບຮອບ 48 ປີ ໃນວັນທີ 2 ທັນວາ 2023 ນີ້ຢ່າງສຸດອົກສຸດໃຈ. ພ້ອມນີ້ກໍ່ສະແດງຄວາມສັນລະເສີນຮູ້ບຸນຄຸນ ຕໍ່ພັກປະຊາຊົນ ປະຕິວັດລາວ ທີ່ໄດ້ນຳພາປະຊາຊົນລຸກຂຶ້ນຕໍ່ສູ້ຕ້ານກັບຈັກກະພັດຜູ້ຮຸກຮານ ແລະ ໄດ້ນຳພາການສ້າງສາພັດທະນາ ເຮັດໃຫ້ປະເທດຊາດມີຄວາມສະຫງົບສຸກ, ເສດຖະກິດຮັ່ງມີ, ສັງຄົມມີຄວາມສີວິໄລຍຸຕິທຳ ແລະ ສືບຕໍ່ຂະຫຍາຍຕົວດ້ວຍທ່ວງທ່າອັນໜັກແໜ້ນ.

ເລີ່ມແຕ່ປີ 1986 ເປັນຕົ້ນມາ, ພັກເຮົາໄດ້ນຳພາປ່ຽນແປງຢ່າງຮອບດ້ານ ແລະ ມີຫຼັກການຂອງພັກ ເຖິງວ່າປະເທດເຮົາຈະພົບກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການກໍ່ຕາມ, ແຕ່ພັກເຮົາກໍ່ຕັດສິນໃຈນຳພາສ້າງການຫັນປ່ຽນໃໝ່ຢ່າງເປັນລະບົບ ແລະ ມີຫຼັກການ, ສາມາດຍາດໄດ້ຜົນງານ ແລະ ໄຊຊະນະອັນໃຫຍ່ຫຼວງ ດັ່ງນີ້:

**ດ້ານການເມືອງ:** ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ທີ່ເປັນແກນນຳໃນລະບົບການເມືອງປະຊາທິປະໄຕ ປະຊາຊົນ, ລະບົບການເມືອງ ຂອງລະບອບປະຊາທິປະໄຕ ປະຊາຊົນ ແຕ່ລະຂັ້ນໄດ້ຮັບການປັບປຸງບູລະນະ ໃຫ້ໜັກແໜ້ນ, ເຂັ້ມແຂງ ໂດຍສະເພາະຂັ້ນຮາກຖານ, ຄວາມເປັນເອກະລາດ, ອຳນາດ ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງປະເທດຊາດ ໄດ້ຮັບການປົກປັກຮັກສາໄວ້ໄດ້ຢ່າງໝັ້ນຄົງ, ສັງຄົມມີຄວາມສະຫງົບປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

**ການພັດທະນາເສດຖະກິດ:** ພາຍຫຼັງປ່ຽນແປງໃໝ່ທາງດ້ານເສດຖະກິດ ເຮັດໃຫ້ປະເທດເຮົາ ມີການ

ຂະຫຍາຍຕົວຕໍ່ເນື່ອງ, ໝັ້ນທ່ຽງ, ອັດຕາການເຕີບໂຕຂອງເສດຖະກິດສະເລ່ຍເພີ່ມຂຶ້ນ ໃນແຕ່ລະໄລຍະ ເຊັ່ນ: 1990 ເພີ່ມຂຶ້ນ 4,8% ຕໍ່ປີ, 1995 ເພີ່ມຂຶ້ນ 6,4% ຕໍ່ປີ, 2005 ເພີ່ມຂຶ້ນ 6,2% ຕໍ່ປີ, 2010 ສະເລ່ຍ 7,9% ຕໍ່ປີ, 2015 ບັນລຸໄດ້ 7,8% ຕໍ່ປີ, 2020 ເພີ່ມຂຶ້ນ 5,8% ຕໍ່ປີ ແລະ ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ IX ເຄິ່ງສະໄໝ ເພີ່ມຂຶ້ນສະເລ່ຍ 4,1%, ສໍາລັບປີ 2023 ຄາດວ່າຈະບັນລຸ 4,5%; GDP ສະເລ່ຍຕໍ່ຫົວຄົນ ກໍ່ເພີ່ມຂຶ້ນ ເຊັ່ນ: ປີ 1985 ບັນລຸໄດ້ 114 ໂດລາສະຫະລັດ, ປີ 1995 ໄດ້ 380 ໂດລາສະຫະລັດ, ປີ 2006 ໄດ້ 534 ໂດລາສະຫະລັດ, ປີ 2015 ບັນລຸໄດ້ 1970 ໂດລາສະຫະລັດ, ປີ 2020 ໄດ້ 2.664 ໂດລາສະຫະລັດ ຕໍ່ຄົນຕໍ່ປີ; ນັບຕັ້ງແຕ່ປີ 2021 ເປັນຕົ້ນມາ ປະເທດເຮົາໄດ້ປະສົບ ກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ເງິນກີບອ່ອນຄ່າ, ເງິນເຟີ້, ຄ່າຄອງຊີບສູງ, ສິນຄ້າແພງຈຶ່ງເຮັດໃຫ້ GDP ມີທ່າອ່ຽງຫຼຸດລົງຢ່າງຕໍ່ເນື່ອງ, ໄດ້ສະເລ່ຍຕໍ່ຫົວຄົນ ໃນປີ 2021 ໄດ້ 2.595 ໂດລາສະຫະລັດ, ປີ 2022 ໄດ້ 2.022 ໂດລາສະຫະລັດ ແລະ ປີ 2023 ຄາດວ່າຈະໄດ້ 1.777 ໂດລາສະຫະລັດ, ອັນພົ້ນເດັ່ນ ແມ່ນການຈັດເກັບລາຍຮັບເຂົ້າງົບປະມານ ນັບຕັ້ງແຕ່ປີ 2021 ເປັນຕົ້ນມາ ແມ່ນໄດ້ເກີນແຜນການ 3 ປີຕິດຕໍ່ກັນ, ໄປຄຽງຄູ່ກັນນັ້ນ ກໍ່ໄດ້ເອົາໃຈໃສ່ຄຸ້ມຄອງລາຍຈ່າຍບົນຈິດໃຈປະຢັດ ເຮັດໃຫ້ການຂາດດຸນງົບປະມານ ມີທ່າອ່ຽງຫຼຸດລົງ. ການແກ້ໄຂໜີ້ສິນການລົງທຶນຂອງລັດ ແລະ ໜີ້ສິນຕ່າງປະເທດກໍ່ໄດ້ເອົາໃຈໃສ່ດ້ວຍມາດຕະການ ແລະ ວິທີການຢ່າງເປັນລະບົບ, ສາມາດຊໍາລະໜີ້ສິນຕາມແຜນການທີ່ໄດ້ກໍານົດໄວ້.

**ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ:** ການປົກປັກຮັກສາປະເທດຊາດ ແມ່ນໜຶ່ງໃນສອງໜ້າທີ່ຍຸດທະສາດສໍາຄັນໃນໄລຍະໃໝ່, ໂດຍປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ, ພັກເຮົາສາມາດນໍາພາປົກປັກຮັກສາອໍານາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ ຂອງຊາດໄວ້ໄດ້ຢ່າງໝັ້ນຄົງ, ສັງຄົມມີຄວາມສະຫງົບປອດໄພໂດຍພື້ນຖານ, ອັນພົ້ນເດັ່ນ ກໍາລັງປະກອບອາວຸດ ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ເປັນກໍາລັງທີ່ຈົງຮັກ ພັກດີ, ບໍລິສຸດສັດຊື່ຕໍ່ຊາດ, ຕໍ່ພັກ, ຕໍ່ປະຊາຊົນ ແລະ ອຸດົມການສັງຄົມນິຍົມ, ມູນເຊື້ອປະຕິວັດກໍາລັງປະກອບອາວຸດໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງ, ໄດ້ຮັບການອົບຮົມ, ຫັດແອບສິລະປະຍຸດ, ຍຸດທະວິທີ ໃຫ້ມີຄວາມຊໍານານງານ ແລະ ຍົກລະດັບຕາມທິດທັນເປັນທັນສະໄໝຢ່າງບໍ່ຢຸດຢັ້ງ, ສາມາດສະກັດກັ້ນແກ້ໄຂໜໍ່ແໜງຄວາມບໍ່ສະຫງົບ ທັນກັບສະພາບ, ຕ້ານ, ສະກັດກັ້ນແລະທັບມ້າງທຸກກົນອຸບາຍມ້າງເພທໍາລາຍ ຂອງອິດທິກໍາລັງປໍລະປັກ, ພ້ອມກັນນັ້ນ ກໍ່ໄດ້ເອົາໃຈໃສ່ສືບຕໍ່ຈັດຕັ້ງປະຕິບັດແຜນຍຸດທະສາດກໍ່ສ້າງຮາກຖານການເມືອງ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນບັນດາເຜົ່າ ໂດຍສະເພາະ ຢູ່ເຂດຈຸດສຸມຕ່າງໆ ຕາມ 4 ເນື້ອໃນ 4 ຄາດໝາຍ, ອັນສໍາຄັນ, ກໍາລັງປະກອບອາວຸດ ຍັງໄດ້ເປັນກໍາລັງຫຼັກ ແຫຼ່ງໃນການຈັດຕັ້ງປະຕິບັດແຜນຍຸດທະສາດ ແກ້ໄຂບັນຫາຢາເສບຕິດທີ່ສູນກາງພັກໄດ້ຊີ້ນໍາ ແລະ ຍົກລະດັບຂຶ້ນເປັນວາລະແຫ່ງຊາດ, ມີການພົວພັນແລກປ່ຽນບົດຮຽນກັບຕ່າງປະເທດໃນວຽກງານ ປກຊ-ປກສ, ແລກປ່ຽນຂໍ້ມູນຂ່າວສານກັບປະເທດເພື່ອນມິດ ແລະ ອົງການສາກົນຕ່າງໆ.

**ວຽກງານການຕ່າງປະເທດ:** ສປປ ລາວ ໄດ້ເປີດກວ້າງການພົວພັນກັບຕ່າງປະເທດ ແລະ ຮ່ວມມືສາກົນໂດຍຍຶດໝັ້ນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ກໍ່ຄືທິດນໍາການທູດປ້ອງກັນເຫດ ແລະ ບຸກທະລຸ ເພື່ອປົກປັກຮັກສາແລະ ພັດທະນາ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າ ໃນການສ້າງປະຊາຄົມອາຊຽນ, ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ ແບບຫຼາຍທິດ, ຫຼາຍຝ່າຍ, ຫຼາຍລະດັບແລະ ຫຼາຍຮູບແບບ ບົນພື້ນຖານຫຼັກການເຄົາລົບ ເຊິ່ງກັນແລະ ກັນ, ຕ່າງຝ່າຍຕ່າງມີຜົນປະໂຫຍດ. ປະຈຸບັນ ສປປ

ລາວ ມີການພົວພັນການທູດກັບ 148 ປະເທດ (ຈາກ 193 ປະເທດທົ່ວໂລກ) ມີສຳນັກງານ ຜູ້ຕາງໜ້າການທູດຂອງສປປ ລາວຢູ່ຕ່າງປະເທດ 41 ແຫ່ງ, ໄດ້ສ້າງຕັ້ງສະມາຄົມມິດຕະພາບກັບ 18 ປະເທດ, ພົວພັນກັບພັກການເມືອງຫຼາຍກວ່າ 140 ພັກ ແລະ ມີການພົວພັນດ້ານເສດຖະກິດຫຼາຍກວ່າ 50 ປະເທດ.

ເຖິງຢ່າງໃດກໍ່ຕາມ, ພາລະກິດປະຕິວັດພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ບໍ່ມີວັນສິ້ນສຸດຈັກເທື່ອ ເມື່ອສຳເລັດການປະຕິວັດຊາດ ປະຊາທິປະໄຕ ແລ້ວກໍ່ສືບຕໍ່ເຮັດການປະຕິວັດປົກປັກຮັກສາ ແລະ ສ້າງສາປະເທດຊາດກ້າວເດີນມາໄດ້ 48 ປີ ແລະ ແມ່ນ 48 ປີ ທີ່ເຮັດໃຫ້ປະເທດຊາດໝັ້ນຄົງ, ເຂັ້ມ ແຂງ, ເສດຖະກິດຂອງຊາດໄດ້ຮັບການປັບປຸງກໍ່ສ້າງໃຫ້ເຕີບໃຫຍ່ຂະຫຍາຍຕົວ, ປະຊາຊົນບັນດາເຜົ່າມີຊີວິດການເປັນຢູ່ທີ່ດີຂຶ້ນເປັນກ້າວໆ. ແຕ່ພາລະກິດປະຕິວັດປົກປັກຮັກສາ ແລະ ສ້າງສາປະເທດຊາດກໍ່ບໍ່ໄດ້ຢຸດເຊົາ ແລະ ຍັງຈະສືບຕໍ່ໆໄປຢ່າງບໍ່ມີວັນສິ້ນສຸດ ເພື່ອເຮັດໃຫ້ອຸດົມການຂອງພັກ, ຂອງຊາດກໍ່ຄືຂອງປະຊາຊົນລາວທີ່ ກຳນົດໄວ້ແລ້ວນັ້ນປະກົດຜົນເປັນຈິງ. ນັ້ນຄືສັງຄົມນິຍົມທີ່ຈະເລີນ ແລະ ວັດທະນາຖາວອນເຖິງເສັ້ນທາງກ້າວໄປນັ້ນ ຍັງມີອຸປະສັກຫຼາຍຢ່າງ, ກຸ່ມຄົນບໍ່ດີພາຍໃຕ້ການຊີ້ນຳໜູນຫຼັງຂອງລັດທິຈັກກະພັດຍັງເຄື່ອນໄຫວທຳລາຍພັກ, ຊາດ ແລະ ປະຊາຊົນເຮົາຢ່າງບໍ່ລົດລະ ບວກກັບສະພາບຄວາມເປັນຈິງ, ຈຸດອ່ອນ ແລະ ຂໍ້ຂາດຕົກບົກພ່ອງ, ສິ່ງຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນ ໃນຖັນແຖວພະນັກງານ, ສະມາຊິກພັກເຊັ່ນ: ພະຍາດອາຍາສິດ, ຄວາມໂລບມາກໂລພາສໍ້ລາດບັງຫຼວງ, ໝັກຜົນປະໂຫຍດສ່ວນຕົວ. ນອກນັ້ນລະດັບຄວາມຮູ້, ຄວາມສາມາດຂອງພະນັກງານ, ສະມາຊິກພັກ ຍັງຈຳກັດບໍ່ທັນຄວາມກ້າວໜ້າຂອງໂລກແຫ່ງວິທະຍາສາດ, ເຕັກໂນໂລຊີ ກໍ່ແມ່ນ ສິ່ງສຳຄັນທີ່ເປັນອຸປະສັກຂັດຂວາງການກ້າວເດີນຂອງພາລະກິດປະຕິວັດຂອງພັກ ກໍ່ຄືຂອງຊາດ ແລະ ປະຊາຊົນ.

ແຕ່ປືນຕໍ່ໜ້າອຸປະສັກ ຫຼື ສິ່ງທ້າທາຍດັ່ງກ່າວນັ້ນ, ພາຍໃຕ້ແສງສະຫວ່າງແຫ່ງແນວທາງນະໂຍບາຍອັນຖືກຕ້ອງເປັນທຳຂອງພັກ ໂດຍມີພັກປະຊາຊົນປະຕິວັດລາວຜູ້ປີຊາສາມາດນຳພາ, ປະຊາຊົນບັນດາເຜົ່າໃນທົ່ວປະເທດ ແມ່ນພ້ອມແລ້ວທີ່ຈະສາມັກຄີກັນຢູ່ອ້ອມຂ້າງພັກ ປະຕິບັດແນວທາງນະໂຍບາຍຂອງພັກໃຫ້ປະກົດຜົນເປັນຈິງ. ໃນນັ້ນ, ພະນັກງານ, ສະມາຊິກພັກ ຍິ່ງຕ້ອງໄດ້ເປັນເຈົ້າການ, ເປັນແກນນຳ ທັງເປັນແບບຢ່າງໃນ ການຈັດຕັ້ງນຳພາປວງຊົນລາວທັງຊາດ, ມີຄວາມກ້າວໜ້າວ່ອງໄວກວ່າໄລຍະເວລາ 48 ປີທີ່ຜ່ານມາ, ນຳເອົາຄວາມຈະເລີນ, ຄວາມຜາສຸກມາສູ່ປະເທດຊາດ ແລະ ປະຊາຊົນລາວຕາມຄວາມມຸ້ງຫວັງທີ່ມີໄວ້.

**ສັງລວມແລ້ວ**, ວັນທີ 2 ທັນວາ 1975 ແມ່ນວັນທີ່ມີຄວາມໝາຍສຳຄັນ ສຳລັບທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ເປັນພັນໆປີຂອງຊາດ ລາວເຮົາ; ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າ ໄດ້ມີອິດສະຫຼະພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ; ທັງເປັນວັນແຫ່ງການກ້າວສູ່ຍຸກສະໄໝໃໝ່ແຫ່ງການສ້າງປະເທດລາວ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ. ປະທານ ໄກສອນ ພົມວິຫານໄດ້ຕີລາຄາ ວັນທີ 2 ທັນວາ ປີ 1975 ວ່າ: "ບໍ່ທັນມີເວລາໃດທີ່ປະຊາຊົນເຮົາ ເຊິ່ງເປັນຜູ້ສ້າງປະຫວັດສາດຂອງຊາດນັ້ນ ໄດ້ຍາດເອົາໄຊຊະນະສົມບູນ, ເຖິງຖອງ ແລະ ບໍລິບູນໄດ້ຢ່າງສະຫງ່າລາສີຄືແນວນີ້ຈັກເທື່ອ. ໄຊຊະນະນັ້ນ ບໍ່ສະເພາະແຕ່ໄດ້ຟື້ນຟູຄວາມເປັນເອກະລາດ ຂອງປະເທດເຮົາ, ຫາກຍັງເປັນຄັ້ງທຳອິດທີ່ປະຊາຊົນບັນດາເຜົ່າ ຜູ້ເຄີຍດຳລົງຊີວິດ ເປັນທາດໄດ້ກາຍມາເປັນເຈົ້າຂອງແທ້ຈິງຂອງຊາດໜຶ່ງ ທີ່ມີເອກະລາດ, ມີອິດສະຫຼະພາບຢ່າງສົມບູນ ແລະ ພວມກ້າວຂຶ້ນສູ່ສັງຄົມນິຍົມ, ເຮັດໃຫ້ຄວາມມຸ່ງຫວັງອັນແຮງກ້າ ຂອງປວງຊົນລາວກໍ່ຄື ຂອງມວນມະນຸດປະກົດເປັນຈິງ ຢູ່ບົນພື້ນແຜ່ນດິນອັນແສນຮັກຂອງພວກເຮົາ"...ฯ

# ໝູນໃຊ້ແນວຄິດ ໄກສອນ ພົມວິຫານ ກ່ຽວກັບ ການກໍ່ສ້າງ-ບໍາລຸງພະນັກງານນໍາພາ-ຄຸ້ມຄອງ

(ລາງວັນຮອງຊະນະເລີດແຂ່ງຂັນບົດຂຽນ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ວາລະສານກໍ່ສ້າງພັກ ຄົບຮອບ 30 ປີ)

ໂດຍ: ວຽງພັນ ຈິດສະດີ

ວຽກງານກໍ່ສ້າງ-ບໍາລຸງພະນັກງານນໍາພາ-ຄຸ້ມຄອງ ແມ່ນກົກຂອງທຸກວຽກງານ, ເປັນປັດໄຈສໍາຄັນໃນການສ້າງພະນັກງານສືບທອດປ່ຽນແທນທີ່ມີຄຸນນະພາບ ເພື່ອຍົກສູງການກໍ່ສ້າງຖັນແຖວພະນັກງານນໍາພາ-ຄຸ້ມຄອງໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້ຄວາມສາມາດໃຫ້ແກ່ແຕ່ລະຂະແໜງການ ແລະ ທ້ອງຖິ່ນ. ວຽກງານກໍ່ສ້າງ-ບໍາລຸງພະນັກງານແມ່ນພາລະກິດຈໍາເປັນຂອງທົ່ວພັກ-ທົ່ວປວງຊົນລາວທັງຊາດ ແລະ ແມ່ນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ຂອງສະພາບການໃນປັດຈຸບັນ. ແມ່ນວຽກງານໜຶ່ງທີ່ມີຄວາມສໍາຄັນ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານກໍຄືການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ເພາະວ່າພະນັກງານນໍາພາຄຸ້ມຄອງມີບົດບາດຕັດສິນໃນການນໍາພາ-ຊີ້ນໍາ ແລະ ຈັດຕັ້ງປະຕິບັດແນວທາງຂອງພັກ ແລະ ນະໂຍບາຍຕ່າງໆ ຂອງລັດທີ່ວາງອອກໃຫ້ປາກົດຜົນເປັນຈິງ.

ປະທານ ໄກສອນ ພົມວິຫານ ຍາມໃດເພິ່ນກໍ່ມີຄວາມເປັນຫ່ວງເປັນໄຍ ແລະ ໃຫ້ທິດຊີ້ນໍາຢ່າງໃກ້ຊິດຕິດແທດຕໍ່ວຽກງານກໍ່ສ້າງ-ບໍາລຸງພະນັກງານ ເພິ່ນເວົ້າວ່າ: "ມີຖັນແຖວພະນັກງານນໍາພາ-ຄຸ້ມຄອງທີ່ເກັ່ງຈຶ່ງສາມາດເຮັດໃຫ້ແນວທາງ, ໜ້າທີ່ການເມືອງກາຍເປັນໝາກຜົນຕົວຈິງ, ຈຶ່ງຈະສ້າງ ແລະ ປົກປັກຮັກສາແນວທາງການເມືອງຂອງພັກໃຫ້ຖືກຕ້ອງ, ຂະຫຍາຍຕົວເລື້ອຍໆ ແລະ ຈຶ່ງຈະເຮັດໃຫ້ແນວທາງການເມືອງກາຍເປັນອັນລະອຽດ, ທີ່ສອດຄ່ອງກັບຜົນປະໂຫຍດຂອງມະຫາຊົນໄດ້". ກ່ອນອື່ນໝົດ ຕ້ອງເຮັດໃຫ້ພະນັກງານນໍາພາ-ຄຸ້ມຄອງມີແນວຄິດ ແລະ ອຸດົມຄະຕິປະຕິວັດ, ຈົງຮັກພັກດີ ແລະ ບໍລິສຸດສັດຊື່ຮັບໃຊ້ຊາດຮັບໃຊ້ປະຊາຊົນຢ່າງແທ້ຈິງ. ທ່ານ ໄກສອນ ພົມວິຫານ ເວົ້າວ່າ: "ຖັນແຖວພະນັກງານຂັ້ນສູງ ຂອງພວກເຮົາເປັນກອງເສນາທິການຫົວສະໝອງຂອງພັກ ແລະ ລັດ ຢູ່ສູນກາງ ຫຼື ຢູ່ທ້ອງຖິ່ນ, ເປັນຜູ້ຕົກລົງທຸກແຜນນະໂຍບາຍ, ແນວທາງ, ນະໂຍບາຍພາຍໃນ, ນະໂຍບາຍຕ່າງປະເທດ ແລະ ຊີ້ນໍາທຸກການເຄື່ອນໄຫວຂອງພັກ, ລັດ ແລະ ປະຊາຊົນເຮົາ". ເພິ່ນເນັ້ນໜັກວ່າ: "ຄຸນສົມບັດປະຕິວັດນັ້ນ ເປັນບັນຫາສໍາຄັນທີ່ສຸດ ຂອງພະນັກງານສະມາຊິກພັກທຸກຄົນ, ແຕ່ສໍາລັບຖັນແຖວພະນັກງານຂັ້ນສູງແລ້ວ ຊໍ້າພັດຍິ່ງສໍາຄັນກວ່ານັ້ນຫຼາຍເທົ່າ, ເພາະວ່າເຮົາເປັນສະມາຊິກຂອງກອງເສນາທິການຂອງພັກ, ອັນດີ ແລະ ອັນບໍ່ດີ ຂອງພວກເຮົາ ມັນລ້ວນແຕ່ສິ່ງຜົນສະທ້ອນອັນໃຫຍ່ຫຼວງເຖິງແນວທາງຂອງພັກ. ອັນດີກໍ່ປຽບເໝືອນແສງສຸລິຍາສ່ອງເຍືອງໄປທົ່ວພິພົບ, ອັນບໍ່ດີກໍປຽບເໝືອນຂີ້ເຝື້ອກ້ອນນ້ອຍໆຫຼາຍກ້ອນທີ່ເລື່ອນລອຍຢູ່ທ້ອງຟ້າມັນໄດ້ແຜ່ກະຈາຍເງົາຂອງມັນຢູ່ເທິງໜ້າດິນເຮັດໃຫ້ທ້ອງຟ້າມືດມົນ". ຍ້ອນແນວນັ້ນ "ມາດຕະຖານອັນເປັນພື້ນ

ຖານກ່ຽວກັບຄຸນສົມບັດ ແລະ ຄວາມສາມາດ ຂອງພະນັກງານນຳພາ ແລະ ຄຸ້ມຄອງ ກ່ອນອື່ນໝົດ ແມ່ນຄວາມບໍລິສຸດສັດຊື່ຕໍ່ປະເທດຊາດ, ຕໍ່ພັກ, ມີຄວາມເປັນເອກະພາບສູງກັບແນວທາງນະໂຍບາຍ ແລະ ບັນດາທັດສະນະຂອງພັກ, ຄຳສັ່ງຕ່າງໆຂອງລັດ ໃນຂອບເຂດວຽກງານທີ່ຕົນເອງຮັບຜິດຊອບຢ່າງມີປະສິດທິຜົນ, ຮູ້ເຕົ້າໂຮມປຸກລະດົມ ແລະ ເສີມຂະຫຍາຍສະຕິປັນຍາຂອງມະຫາຊົນ, ມີສະຕິສູງຕໍ່ການຈັດຕັ້ງ ພ້ອມກັນນັ້ນກໍ່ຕ້ອງ ມີແບບແຜນວິທີເຮັດວຽກທີ່ຕິດແທດກັບຕົວຈິງ, ມັກຄົ້ນຄວ້າຮໍ່າຮຽນ, ຝຶກຝົນຫຼໍ່ຫຼອມຕົນເອງ, ມີຄຸນສົມບັດສິນທຳປະຕິວັດ ແລະ ຍົກລະດັບຄວາມຮູ້ຄວາມສາມາດຂອງຕົນເອງຂຶ້ນຢ່າງບໍ່ຢຸດຢັ້ງ".

ພາຍຫຼັງປະເທດຊາດ ໄດ້ຮັບການປົດປ່ອຍຢ່າງສົມບູນແລ້ວ ປະທານ ໄກສອນ ພົມວິຫານ ເພິ່ນໄດ້ເອົາໃຈໃສ່ຕໍ່ວຽກງານກໍ່ສ້າງ-ບຳລຸງຖັນແຖວພະນັກງານ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ທັງຮັບປະກັນໜ້າທີ່ການເມືອງຂອງພັກໃນແຕ່ລະໄລຍະ ເປັນຕົ້ນແມ່ນເອົາໃຈໃສ່ພະນັກງານການເມືອງ, ພະນັກງານຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ພະນັກງານເຕັກນິກວິທະຍາສາດ, ພະນັກງານເພດຍິງ, ຊົນເຜົ່າ, ຖືວຽກງານກໍ່ສ້າງ-ບຳລຸງພະນັກງານ ເປັນວຽກງານທີ່ຕ້ອງໄດ້ເຮັດຢ່າງເນື່ອງນິດລຽນຕິດ, ເຮັດຢ່າງມີແຜນການ, ມີຈຸດສຸມຢ່າງຈະແຈ້ງ ແລະ ຄົບຊຸດ.

ໃນການໂອ້ລົມຕໍ່ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 2 ສະໄໝທີ IV ປະທານ ໄກສອນ ພົມວິຫານ ໄດ້ເວົ້າເຖິງພະນັກງານການນຳວ່າ: "ຜູ້ນຳຕ້ອງເປັນແບບຢ່າງຮອບດ້ານ ເພື່ອໃຫ້ສະມາຊິກຜູ້ອື່ນເອົາ ເປັນແບບຢ່າງ", "ສິ່ງທີ່ຄວນຫຼີກເວັ້ນແທ້ໃນຂົງເຂດຄຸນສົມບັດສິນທຳແມ່ນປາກຫວານດັ່ງນ້ຳອ້ອຍ, ໃຈສົ້ມດັ່ງໝາກນາວ, ຄວາມເວົ້າບໍ່ສອດຄ່ອງກັບການກະທຳ, ມີແຕ່ໂຄສະນາຄຸນສົມບັດສິນທຳແບບນໍ້າເຕົ້າເປົ້າ, ຕັກເຕືອນສັ່ງສອນຜູ້ອື່ນຕ້ອງເຮັດແບບນັ້ນແບບນີ້ ແຕ່ຕົນເອງສຳພັດບໍ່ເປັນແບບຢ່າງ". ໃນກອງປະຊຸມວຽກງານຈັດຕັ້ງ ຄັ້ງທີ 6 ເພິ່ນໄດ້ມີທັດສະນະຕໍ່ການກໍ່ສ້າງ-ພະນັກງານໜຸ່ມວ່າ "ຕ້ອງກ້າເລື່ອນຊັ້ນໃຫ້ພະນັກງານໜຸ່ມນ້ອຍ, ພະນັກງານໃໝ່, ສົມທົບລະຫວ່າງພະນັກງານເກົ່າກັບພະນັກງານໃໝ່, ພະນັກງານເຖົ້າແກ່ອາວຸໂສກັບພະນັກງານໜຸ່ມຢ່າງຖືກຕ້ອງ". ໃນງານຊຸມນຸມມິດຕິງສະເຫຼີມສະຫຼອງວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 35 ປີ ປະທານ ໄກສອນ ພົມວິຫານ ໄດ້ກ່າວວ່າ "ຕ້ອງເອົາໃຈໃສ່ກໍ່ສ້າງ, ສຶກສາອົບຮົມພະນັກງານສະມາຊິກໃນຂັ້ນຕ່າງໆ, ຂະແໜງການຕ່າງໆ ທາງດ້ານການເມືອງ-ແນວຄິດ, ຄວາມຮູ້, ຄວາມສາມາດ ແລະ ແບບແຜນວິທີເຮັດວຽກ, ບົດຮຽນ ແລະ ພຶດຕິກຳຂອງພວກເຮົາ ຢັ້ງຢືນໃຫ້ເຫັນແຈ້ງແລ້ວວ່າແນວທາງ, ແຜນນະໂຍບາຍຂອງພັກ ຈະຖືກຕ້ອງປານໃດກໍ່ດີ ຖ້າພະນັກງານສະມາຊິກພັກຫາກຂາດຄວາມຮູ້, ຄວາມສາມາດໃນດ້ານຕ່າງໆ ເພື່ອນຳພາ ແລະ ຈັດຕັ້ງປະຕິບັດແລ້ວ ແນວທາງນະໂຍບາຍດັ່ງກ່າວນັ້ນ ກໍ່ຈະດີພຽງແຕ່ຢູ່ໃນໜ້າເຈ້ຍເທົ່ານັ້ນ. ສະນັ້ນ, ພວກເຮົາຕ້ອງເອົາໃຈໃສ່ຕໍ່ວຽກງານກໍ່ສ້າງ ແລະ ຝຶກອົບຮົມພະນັກງານສະມາຊິກພັກ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນສະເພາະໜ້າ ແລະ ຍາວນານ, ໂດຍສະເພາະຖັນແຖວພະນັກງານນຳພາຫຼັກແຫຼ່ງໃນແຕ່ລະຂັ້ນ, ແຕ່ລະຂະແໜງການ ແລະ ຖັນແຖວພະນັກງານຢູ່ຮາກຖານ.

ຈາກບັນຫາດັ່ງກ່າວນັ້ນ, ເຫັນໄດ້ວ່າການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງເປັນປັດໄຈຕັດສິນທຸກວຽກງານຂອງພັກ ເຊິ່ງພັກເຮົາໄດ້ຖືວ່າການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນຫຼາຍ ແລະ ໄດ້ໝູນໃຊ້ແນວຄິດ ໄກສອນ ພົມວິຫານ ກ່ຽວກັບການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ເຂົ້າໃນວຽກງານຕົວຈິງ ເຊິ່ງສະແດງອອກ ໃນມະຕິກອງປະຊຸມໃຫຍ່ຂອງພັກ ແຕ່ລະຄັ້ງກໍ່

ໄດ້ກໍານົດຄາດໝາຍສູ້ຊົນສ້າງພະນັກງານນໍາພາ-ຄຸ້ມຄອງ ໃຫ້ພຽງພໍກັບຄວາມຕ້ອງການຂອງການປະຕິບັດໜ້າທີ່ຍຸດທະສາດຂອງພັກ ກ່ອນອື່ນໝົດ "ຕ້ອງເພີ່ມທະວີວຽກງານກໍ່ສ້າງ ແລະ ຝຶກອົບຮົມພະນັກງານ, ສະມາຊິກພັກ ເພື່ອຕອບສະໜອງຄວາມຕ້ອງການຂອງໜ້າທີ່ການເມືອງ ໃນສະເພາະໜ້າ ແລະ ຍາວນານ, ໂດຍສະເພາະແມ່ນການກໍ່ສ້າງຖັນແຖວພະນັກງານນໍາພາ, ພະນັກງານຫຼັກ ແຫຼ່ງຂັ້ນເມືອງ ແລະ ຢູ່ຮາກຖານ . ໃນກອງປະຊຸມຈັດຕັ້ງທົ່ວປະເທດ ຄັ້ງທີ VIII ກໍ່ໄດ້ກໍານົດວ່າ: "ພະນັກງານຜູ້ທີ່ຮຽນຈົບວິຊາສະເພາະຊັ້ນສູງຂຶ້ນໄປ ຕ້ອງສືບຕໍ່ບໍາລຸງສ້າງເຂົາເຈົ້າທາງດ້ານທິດສະດີການເມືອງ, ທິດສະດີມາກ-ເລນິນ, ອຸດົມການປະຕິວັດ, ນໍ້າໃຈຮັກຊາດ, ຈິດໃຈເພິ່ງຕົນເອງສ້າງຄວາມເຂັ້ມແຂງດ້ວຍຕົນເອງ" . ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ພັກປະຊາຊົນປະຊາຊົນ ປະຕິວັດລາວ ໄດ້ເນັ້ນໜັກວ່າ: " ຕ້ອງເຮັດໃຫ້ຖັນແຖວພະນັກງານນໍາພາຂັ້ນຍຸດທະສາດ, ພະນັກງານຫຼັກແຫຼ່ງແຕ່ລະຂັ້ນໄດ້ຮັບການປະກອບຄວາມຮູ້ລັດທິມາກ-ເລນິນ ທີ່ເປັນທິດສະດີພື້ນຖານກ່ຽວກັບການປະຕິວັດເວົ້າລວມ ແລະ ແນວຄິດ ໄກສອນ ພົມວິຫານ ທີ່ເປັນຜົນແຫ່ງການຄົ້ນຄວ້າ, ໝູນໃຊ້ ແລະ ປະດິດສ້າງ ເຂົ້າໃນພຶດຕິກໍາແຫ່ງການນໍາພາ ພາລະກິດປະຕິວັດພັກເຮົາ".

ເພື່ອປະຕິບັດຕາມແນວຄິດຊີ້ນໍາຂອງພັກ ກໍ່ຄືຂອງປະທານ ໄກສອນ ພົມວິຫານ ໃນໄລຍະຜ່ານມາ ພັກເຮົາໄດ້ເອົາ ໃຈໃສ່ກໍ່ສ້າງ-ບໍາລຸງພະນັກງານຂັ້ນນໍາພາຄຸ້ມຄອງ ຢູ່ໃນສະຖາບັນການສຶກສາຂັ້ນຕ່າງໆ ຢູ່ພາຍໃນ ແລະ ຕ່າງປະເທດ ສະແດງອອກຄື: ໃນປີ 2022 ໄດ້ສົ່ງພະນັກງານນໍາພາ-ຄຸ້ມຄອງ ໄປກໍ່ສ້າງໄລຍະຍາວຢູ່ພາຍໃນ ແລະ ຕ່າງປະເທດ ທັງໝົດ 225 ສະຫາຍ, ຍິງ 54 ສະຫາຍ ໃນນັ້ນ ສົ່ງໄປໄປຄົ້ນຄວ້າປະລິນຍາໂທ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ 140 ສະຫາຍ, ຍິງ 38 ສະຫາຍ; ສົ່ງໄປຄົ້ນຄວ້າຮໍ່າຮຽນ ຢູ່ ສສ ຫວຽດນາມ 85 ສະຫາຍ, ໃນນັ້ນ ປະກອບມີ 3 ລະບົບຄື: ປະລິນຍາຕີ 45 ສະຫາຍ, ຍິງ 8 ສະຫາຍ, ປະລິນຍາໂທ 30 ສະຫາຍ, ຍິງ 6 ສະຫາຍ, ປະລິນຍາເອກ 10 ສະຫາຍ, ຍິງ 2 ສະຫາຍ ແລະ ສົ່ງໄປບໍາລຸງໄລຍະສັ້ນ ຢູ່ພາຍໃນ ແລະ ຕ່າງປະເທດ ທັງໝົດ 703 ສະຫາຍ, ຍິງ 118 ສະຫາຍ, ໃນນັ້ນ ບໍາລຸງທິດສະດີການເມືອງ ລະບົບ 5 ເດືອນ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ 112 ສະຫາຍ, ຍິງ 24 ສະຫາຍ, ບໍາລຸງວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄລຍະ 64 ວັນ 60 ສະຫາຍ, ຍິງ 10 ສະຫາຍ, ບໍາລຸງທິດສະດີການເມືອງ ຂັ້ນສູງລະບົບ 9 ເດືອນ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ 60 ສະຫາຍ, ຍິງ 12 ສະຫາຍ; ຝຶກອົບຮົມຫົວຂໍ້ສະເພາະສໍາລັບເລຂາພັກເມືອງ ໄລຍະ 15 ວັນ ຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ 50 ສະຫາຍ, ຍິງ 2 ສະຫາຍ; ສໍາລັບຢູ່ຕ່າງປະເທດ ໄດ້ສົ່ງໄປບໍາລຸງໄລຍະສັ້ນ ຢູ່ຕ່າງປະເທດ ທັງໝົດ 421 ສະຫາຍ, ຍິງ 70 ສະຫາຍ ຄື ຢູ່ ສສ ຫວຽດນາມ 168 ສະຫາຍ, ຍິງ 24 ສະຫາຍ. ຜ່ານການຈັດຕັ້ງປະຕິບັດຕົວຈິງເຮັດໃຫ້ຖັນແຖວພະນັກງານມີຄວາມຮູ້ຄວາມສາມາດ, ກໍາແໜ້ນແນວທາງ, ແຜນນະໂຍບາຍຂອງພັກ ຫຼັກມູນພື້ນຖານທິດສະດີມາກ-ເລນິນ, ການບໍລິຫານຄຸ້ມຄອງລັດ ແລະ ວິຊາສະເພາະຕ່າງໆ ນັບມື້ນັບເພີ່ມຂຶ້ນ ໂດຍສະເພາະ ແມ່ນພະນັກງານນໍາພາຄຸ້ມຄອງ ຢູ່ແຕ່ລະຂັ້ນນັບແຕ່ສູນກາງລົງຮອດທ້ອງຖິ່ນ, ພິເສດ ແມ່ນພະນັກງານການນໍາຂັ້ນຍຸດທະສາດ ແມ່ນໄດ້ຍຶດໝັ້ນໃນອຸດົມການຂອງພັກ, ມີຫຼັກໝັ້ນການ ເມືອງໜັກແໜ້ນ; ລະດັບຄວາມຮູ້ຄວາມສາມາດຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງພະນັກງານນໍາພາ, ຄຸ້ມຄອງແຕ່ລະຂັ້ນໄດ້ຮັບການຍົກສູງຂຶ້ນເປັນກ້າວໆ.

ຄຽງຄູ່ກັບການຍົກໃຫ້ເຫັນຜົນສໍາເລັດໃນການກໍ່ສ້າງ-ບໍາລຸງພະນັກງານຂັ້ນນໍາພາຄຸ້ມຄອງ ໃນໄລຍະຜ່ານມາ ກໍ່ເຫັນວ່າຍັງມີບາງບັນຫາ ທີ່ຈະຕ້ອງໄດ້ປັບ

ປຸງແກ້ໄຂໃນຕໍ່ໜ້າ ຄືດັ່ງນີ້:

**ໜຶ່ງ,** ການຄົ້ນຄວ້າເຊື່ອມຊຶມ, ການໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ຍັງບໍ່ທັນຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນແຕ່ລະໄລຍະ, ພະນັກງານນຳພາ-ຄຸ້ມຄອງ ຈຳນວນໜຶ່ງ ຍັງບໍ່ທັນໜັກແໜ້ນທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມເສຍສະຫຼະເພື່ອສ່ວນລວມ, ຄວາມເປັນແບບຢ່າງນຳໜ້າ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ.

**ສອງ,** ການກໍ່ສ້າງ-ບຳລຸງ ພະນັກງານນຳພາ-ຄຸ້ມຄອງ ບາງຂະແໜງການ-ທ້ອງຖິ່ນບໍ່ອີງໃສ່ແຜນກຳນົດພະນັກງານ, ການກໍ່ສ້າງພະນັກງານວິຊາການບໍ່ຕອບສະໜອງທັນກັບຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; ບາງຂະແໜງການ-ທ້ອງຖິ່ນຍັງບໍ່ທັນມີແຜນກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ, ການເລືອກເຟັ້ນ, ຂຶ້ນແຜນກຳນົດເອົາພະນັກງານໄປຮຽນຕໍ່ຢູ່ພາຍໃນ ແລະ ຕ່າງປະເທດໃນແຕ່ລະກະຊວງ, ກົມກອງ, ຂະແໜງການ ເພື່ອສ້າງພະນັກງານສືບທອດປ່ຽນແທນ.

**ສາມ**, ການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ຍັງບໍ່ທັນອີງໃສ່ມາດຕະຖານ, ເງື່ອນໄຂທີ່ກຳນົດໄວ້ ສະນັ້ນ, ຈຶ່ງເຮັດໃຫ້ເກີດມີປາກົດການຫຍໍ້ທໍ້ຕ່າງໆຢູ່ພາຍໃນ, ເຮັດໃຫ້ພະນັກງານຈຳນວນໜຶ່ງບໍ່ມີຄວາມຫ້າວຫັນຕໍ່ກັບໜ້າທີ່ວຽກງານ, ເຮັດວຽກພໍແລ້ວມື້ແລ້ວວັນ.

**ສີ່,** ການສົ່ງພະນັກງານນຳພາ-ຄຸ້ມຄອງໄປກໍ່ສ້າງ-ບຳລຸງຢູ່ພາຍໃນ ແລະ ຕ່າງປະເທດ ມີຈຳນວນຫຼາຍແຕ່ຍັງຂາດການປະເມີນຜົນໄດ້ຮັບຈາກການປະຕິບັດໜ້າທີ່ວຽກງານຕົວຈິງ ຂອງບັນດາເປົ້າໝາຍທີ່ສົ່ງໄປກໍ່ສ້າງ-ບຳລຸງມາແລ້ວ.

**ຫ້າ,** ການສ້າງແຜນກໍ່ສ້າງ-ບຳລຸງພະນັກງານ ຍັງບໍ່ທັນຕິດພັນກັບແຜນກຳນົດພະນັກງານ, ພາໃຫ້ມີບາງຂົງເຂດເກີດປາກົດການທີ່ວ່າພະນັກງານເຫຼືອບໍ່ພໍ ແລະ ບໍ່ທັນມີນະໂຍບາຍ ເພື່ອກະຕຸກຊຸກຍູ້ຜູ້ຮຽນດີ, ຮຽນເກັ່ງ ເພື່ອສ້າງເປັນຊ່ຽວຊານສະເພາະດ້ານວິຊາສະເພາະຕ່າງໆ.

ເພື່ອເສີມຂະຫຍາຍມູນເຊື້ອແບບຢ່າງການນຳພາ-ຊີ້ນຳຂອງປະທານ ໄກສອນ ພົມວິຫານ ໃຫ້ສອດຄ່ອງກັບສະພາບຈຸດພິເສດຄວາມເປັນຈິງ ແລະ ເຮັດໃຫ້ການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ມີຄຸນນະພາບ, ທັງສາມາດຕອບສະໜອງທັນກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານວິຊາສະເພາະ ແລະ ທັງຮັບປະກັນໃຫ້ຖືກຕ້ອງຕາມແນວທາງນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຕ່າງໆ ຂອງລັດນັ້ນ ຕາມທັດສະນະຂອງຜູ້ຂຽນແລ້ວເຫັນວ່າຄວນເອົາໃຈໃສ່ຕື່ມບາງວຽກງານດັ່ງນີ້:

1). ກ່ອນອື່ນໝົດຕ້ອງໄດ້ເອົາໃຈໃສ່ຝຶກຝົນຫຼໍ່ຫຼອມພະນັກງານປະຕິວັດຮຸ່ນສືບທອດ ໃຫ້ມີຄຸນທາດການເມືອງໜັກແໜ້ນ,ມີຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດ, ບຳລຸງພະນັກງານໃຫ້ມີຄວາມຮູ້ຄວາມສາມາດທາງດ້ານທິດສະດີມາກ-ເລນິນ ໃນລະດັບທີ່ແນ່ນອນ, ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ພະນັກງານ ສ້າງໃຫ້ໄດ້ພະນັກງານໜຸ່ມນ້ອຍທີ່ມີຄຸນສົມບັດສິນທຳປະຕິວັດທີ່ແທ້ຈິງ, ມີຄຸນທາດການເມືອງໜັກແໜ້ນ.

2). ຄະນະພັກແຕ່ລະຂັ້ນ ຕ້ອງຍຶດໝັ້ນຫຼັກການ-ທິດນຳ, ນິຕິກຳກ່ຽວກັບການຈັດຕັ້ງ, ກໍ່ສ້າງ-ບຳລຸງພະນັກງານຢ່າງເຂັ້ມງວດ, ຖືເປັນໜ້າທີ່ ແລະ ຄວາມຮັບຜິດຊອບໂດຍກົງຂອງຕົນ, ເອົາໃຈໃສ່ນຳພາ-ຊີ້ນຳ ອີງການເສນາທິການ ໃນການຈັດຕັ້ງປະຕິບັດຢ່າງຄົບຖ້ວນ.

3). ການກໍ່ສ້າງ-ບຳລຸງພະນັກງານຕ້ອງສຸມໃສ່

ອ່ານຕໍ່ໜ້າ 12

# ວຽກງານການເມືອງ-ແນວຄິດ ຈະດີ, ຂະບວນການຈະຟົດຟື້ນ, ພະນັກງານຈະມີຄຸນນະພາບ ກໍ່ຂຶ້ນກັບຂີດຂາດນຳພາຂອງຄະນະພັກແຕ່ລະຂັ້ນ

ໂດຍ: ສູນທອນ ທອງຊະນະ

ດັ່ງທີ່ພວກເຮົາຮັບຮູ້ແລ້ວວ່າ ການມີເຄື່ອງມື ແລະ ພາຫະນະທັນສະໄໝ ຈະຊ່ວຍໃຫ້ການດຳເນີນວຽກງານການເມືອງ-ແນວຄິດ ມີປະສິດທິພາບດີຂຶ້ນ ແຕ່ຄວາມເປັນຈິງໄດ້ພິສູດໃຫ້ເຫັນແຈ້ງແລ້ວວ່າ: ສິ່ງທີ່ຕັດສິນແທ້ໆນັ້ນແມ່ນຄົນ ກໍ່ຄືພະນັກງານ ດັ່ງປະທານໄກສອນ ພົມວິຫານ ໄດ້ກ່າວໄວ້ວ່າ: "ວຽກງານການເມືອງ-ແນວຄິດຂອງພັກ ແມ່ນວຽກທີ່ນຳເອົາທັດສະນະ, ແນວທາງ, ແຜນນະໂຍບາຍຂອງພັກ ລົງສູ່ມະຫາຊົນ, ເຮັດໃຫ້ກາຍເປັນການກະທຳຂອງມະຫາຊົນ, ສະນັ້ນ ການດຳເນີນວຽກງານນີ້ ຈະຕ້ອງເລີ່ມຈາກການ ກຳສະພາບແນວຄິດຈິດໃຈຂອງມະຫາຊົນ, ຊັ້ນຄົນຕ່າງໆ, ເຜົ່າຕ່າງໆ ເພື່ອກຳນົດວິທີຮູບການ ແລະ ບາດກ້າວຕົວຈິງຂອງການສຶກສາອົບຮົມ, ເພື່ອສົມທົບກັບຂະແໜງການ, ອົງການຕ່າງໆ ແກ້ໄຂບັນຫາ" . ສະນັ້ນ ວຽກງານການເມືອງ-ແນວຄິດ ບໍ່ພຽງແຕ່ເປັນສ່ວນໜຶ່ງທີ່ສຳຄັນໃນການປັບປຸງ, ກໍ່ສ້າງແນວທາງຂອງພັກເທົ່ານັ້ນ ແຕ່ຕ້ອງໄດ້ນຳເອົາແນວທາງຂອງພັກ ເຂົ້າສູ່ຂະບວນການຂອງມະຫາຊົນ, ປຸກລະດົມຂົນຂວາຍ ແລະ ສ້າງກຳລັງບົ່ມຊ້ອນອັນໃຫຍ່ຫຼວງຂອງສັງຄົມ ເຂົ້າສູ່ພາລະກິດປະຕິວັດຂອງພັກ ກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ເພື່ອຄວາມສົມບູນພູນສຸກຂອງປະຊາຊົນລາວບັນດາເຜົ່າ ແລະ ເພື່ອອຸດົມການສັງຄົມນິຍົມທີ່ພັກໄດ້ກຳນົດໄວ້. ທັງນີ້ກໍ່ຍ້ອນວ່າ ວຽກງານດັ່ງກ່າວແມ່ນວຽກງານກົກ ແລະ ແມ່ນວຽກງານແຖວໜ້າຂອງທຸກຂົງເຂດວຽກງານ ແລະ ເປັນສະໜາມຮົບແນວຄິດທີ່ຂ້ຽວຂາດກວ່າໝູ່, ທັງເປັນວຽກ ງານທີ່ແຫຼມຄົມກວ່າວຽກອື່ນໆໝົດ. ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ກຳນົດແຈ້ງແລ້ວວ່າ: "ກ່ອນອື່ນຕ້ອງເຮັດໃຫ້ຖັນແຖວພະນັກງານນຳພາຂັ້ນຍຸດທະສາດ, ພະນັກງານຫຼັກແຫຼ່ງແຕ່ລະຂັ້ນທັງ ໄດ້ຮັບການປະກອບຄວາມຮູ້ລັດທິມາກ-ເລນິນ ທີ່ເປັນທິດສະດີພື້ນຖານກ່ຽວກັບການປະຕິວັດ ເວົ້າລວມ ແລະ ແນວຄິດ ໄກສອນ ພົມວິຫານ ທີ່ເປັນຜົນແຫ່ງການຄົ້ນຄວ້າ, ໝູນໃຊ້ ແລະ ປະດິດສ້າງທິດສະດີລວມ ເຂົ້າໃນພຶດຕິກຳແຫ່ງການນຳພາພາລະກິດປະຕິວັດຂອງພັກເຮົາ ແລະ ຂອງປະທານ ໄກສອນ ພົມວິຫານ".

ຈາກບັນຫາດັ່ງກ່າວ, ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ຖືສຳຄັນວຽກງານການເມືອງ-ແນວຄິດ ແລະ ການສຶກສາອົບຮົມພະນັກງານ-ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າໃຫ້ມີຄວາມຮັບຮູ້, ເຊື່ອມຊຶມກ່ຽວກັບທິດສະດີມາກ-ເລນິນ, ລັດທິສັງຄົມນິຍົມ ແລະ ແນວທາງແຜນນະໂຍບາຍຂອງພັກຢ່າງເລິກເຊິ່ງ, ເປັນລະບົບ, ຕໍ່ເນື່ອງ, ເຮັດດ້ວຍຫຼາຍຮູບຫຼາຍວິທີ ເພື່ອບັນລຸເຮັດໃຫ້ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນລາວທັງຊາດ

ມີຄວາມເຊື່ອໝັ້ນ, ໄວ້ເນື້ອເຊື່ອໃຈຢ່າງໜັກແໜ້ນຕໍ່ແນວທາງ ແລະ ການນຳພາຂອງພັກ ໃຫ້ປະກົດຜົນເປັນຈິງ. ເມື່ອຢາກເຮັດໄດ້ຄືແນວນັ້ນ ກໍ່ບໍ່ໝາຍຄວາມວ່າມີແຕ່ພັກເປັນຜູ້ເຮັດວຽກແນວຄິດແຕ່ພຽງຜູ້ດຽວ, ພັກຍັງຮຽກຮ້ອງໃຫ້ພວກເຮົາຕ້ອງໄດ້ດຳເນີນວຽກງານການເມືອງ-ແນວຄິດຢ່າງກວ້າງຂວາງ ແລະ ເປັນປະຈຳເພື່ອແນໃສ່ຮັບປະກັນໃຫ້ສະມາຊິກພັກ, ພະນັກງານ ແລະ ປະຊາຊົນບັນດາເຜົ່າໄດ້ຮັບການບຳລຸງ-ກໍ່ສ້າງ ແລະ ຍົກລະດັບຄວາມຮູ້ຄວາມສາມາດທາງດ້ານການເມືອງຢູ່ເລື້ອຍໆ ດັ່ງທິດສະດີມາກ-ເລນິນ ໄດ້ຢັ້ງຢືນວ່າ: "ບໍ່ມີທິດສະດີປະຕິວັດກໍ່ບໍ່ມີຂະບວນການປະຕິວັດ". ໃນພຶດຕິກຳຕົວຈິງໄດ້ຊີ້ໃຫ້ເຫັນແຈ້ງແລ້ວວ່າ ບ່ອນໃດ ເຮັດວຽກງານສຶກສາອົບຮົມການເມືອງ-ແນວຄິດໄດ້ດີ, ພະນັກງານ-ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ເຂົ້າໃຈແຈ້ງຕໍ່ແນວທາງແຜນນະໂຍບາຍຂອງພັກ ຢູ່ບ່ອນນັ້ນກໍ່ມີຂະບວນການຟົດຟື້ນ ແລະ ມີຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານຕ່າງໆກໍ່ສູງ, ພາຍໃນມີຄວາມສາມັກຄີ, ບົດບາດການນຳພາຂອງພັກກໍ່ພົ້ນເດັ່ນ, ມີຄວາມສັກສິດ ແຕ່ກົງກັນຂ້າມຢູ່ບ່ອນໃດເຮັດວຽກງານການເມືອງ-ແນວຄິດແບບລວມໆ, ມັກງ່າຍ, ຄວາມຮັບຮູ້ຄວາມເຂົ້າໃຈຂອງຖັນແຖວພະນັກງານ-ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າຕໍ່ແນວທາງນະໂຍບາຍຂອງພັກບໍ່ເລິກເຊິ່ງ, ເຖິງຖອງ, ຂະບວນການຢູ່ບ່ອນນັ້ນບໍ່ຟົດຟື້ນ, ບໍ່ແຂງແຮງ, ປະສິດທິຜົນຂອງວຽກງານແຕ່ລະດ້ານກໍ່ບໍ່ສູງຍິ່ງຮ້າຍແຮງໄປກວ່ານັ້ນ ຍັງຈະພົບຄວາມຫຍຸ້ງຍາກຫຼາຍຢ່າງຕື່ມ.

ໃນໄລຍະແຫ່ງການການປົດປ່ອຍປະເທດຊາດກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດເພື່ອຄວາມສົມບູນພູນສຸກຂອງປະຊາຊົນລາວບັນດາເຜົ່າ ແລະ ເພື່ອອຸດົມການສັງຄົມນິຍົມໃນປະຈຸບັນໄດ້ມີ ຫຼາຍຂະແໜງການ, ຫຼາຍກົມກອງ, ທ້ອງຖິ່ນ ແລະ ຫຼາຍສະຫາຍໄດ້ກາຍເປັນວິລະຊົນ, ນັກຮົບແຂ່ງຂັນ, ເປັນກົມກອງຕົວແບບພົ້ນເດັ່ນ ເຊິ່ງພວກເຮົາຕ້ອງຄົ້ນຄວ້າຮໍ່າຮຽນ ແລະ ເສີມຂະຫຍາຍໃຫ້ລຸ້ນສືບທອດໃນຕໍ່ໆໄປ, ອີກປັດໄຈໜຶ່ງທີ່ສຳຄັນຍິ່ງ ແລະ ຍັງຂາດບໍ່ໄດ້ທີ່ພາໃຫ້ບັນດາກົມກອງ ແລະ ບຸກຄົນເຫຼົ່ານັ້ນກາຍເປັນຕົວແບບທີ່ພົ້ນເດັ່ນ ກໍ່ຍ້ອນວ່າບັນດາພະນັກງານ-ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າມີຄວາມຮັບຮູ້ເຂົ້າໃຈແຈ້ງ ແລະ ຕື່ນຕົວຕໍ່ແນວທາງການເມືອງຂອງພັກ ຕໍ່ຈຸດໝາຍກໍ່ຄືອຸດົມການຂອງພັກ, ຄວາມຮັບຮູ້ເຂົ້າໃຈເຫຼົ່ານັ້ນ ມັນໄດ້ກາຍເປັນກຳລັງແຮງສັງລວມອັນໃຫຍ່ຫຼວງທັງກາຍ ແລະ ໃຈ ຈຶ່ງເຮັດໃຫ້ເຂົາເຈົ້າບໍ່ຫວັ່ນໄຫວຢ້ານກົວ ແລະ ລັງເລຕໍ່ການເສຍສະຫຼະໃດໆທັງນັ້ນ. ແຕ່ກໍ່ມີຫຼາຍກົມກອງ, ທ້ອງຖິ່ນ ແລະພະນັກງານ-ສະມາຊິກພັກ ຈຳນວນບໍ່ໜ້ອຍແມ່ນຍັງຂາດປັດໄຈດັ່ງກ່າວ ນັ້ນກໍ່ຍ້ອນບໍ່ເຂົ້າໃຈ ແລະ ກຳແນວທາງແຜນນະໂຍບາຍຂອງພັກບໍ່ທັນເລິກເຊິ່ງ. ເຖິງຢ່າງໃດກໍ່ຕາມພວກເຮົາຕ້ອງຮັບຮູ້ເຂົ້າໃຈວ່າ: ການດຳເນີນວຽກງານການເມືອງ-ແນວຄິດ ບໍ່ໝາຍຄວາມວ່າມີແຕ່ໂຄສະນາ, ເຜີຍແຜ່ແນວທາງແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ເອກະສານສຳຄັນຕ່າງໆເທົ່ານັ້ນ. ຢາກໃຫ້ກົມກອງໃດໜຶ່ງ ຫຼື ຮາກຖານໃດໜຶ່ງເຂັ້ມແຂງ ຮອບດ້ານ ຖ້າມີແຕ່ເອົາການສຶກສາອົບຮົມ, ການຈັດຕັ້ງຮໍ່າຮຽນນຳແຕ່ເອກະສານກໍ່ບໍ່ທັນພຽງພໍເທື່ອ ນີ້ມັນເປັນພຽງສ່ວນໜຶ່ງ ໃນບັນດາຮູບການຂອງວຽກງານການເມືອງ-ແນວຄິດເທົ່ານັ້ນ ໝາຍຄວາມວ່າ: ວຽກງານການເມືອງ-ແນວຄິດ ຍັງກວມເອົາທັງການກວດກາ, ຕີລາຄາຈັດແບ່ງປະເພດສະມາຊິກພັກ, ພະນັກງານ, ການປັບປຸງກົງຈັກການຈັດຕັ້ງ ແລະ ອື່ນໆ. ສະນັ້ນ ການຈັດຕັ້ງປະຕິບັດວຽກງານການເມືອງ-ແນວຄິດໄດ້ດີ ຫຼື ບໍ່ດີ ມັນຈະເປັນປັດໄຈ ທີ່ສຳຄັນໃນການຍູ້ແຮງຂະບວນການ ແລະ ການກໍ່ສ້າງພະນັກງານ ໂດຍຜ່ານ

ຂະບວນການ ເຫຼົ່ານັ້ນ ຈຶ່ງສາມາດເຫັນໄດ້ວ່າ ຜູ້ໃດດີເດັ່ນ ແລະ ຜູ້ທີ່ມີພອນສະຫວັນແຕ່ລະດ້ານຢ່າງແທ້ຈິງ. ຖ້າ ເຮັດໄດ້ຄື ແນວນັ້ນ ວຽກງານຂະບວນການກໍ່ຟົດຟື້ນ, ພະ ນັກງານກໍ່ມີຄຸນນະພາບ ແລະ ວຽກງານກໍ່ມີປະສິດທິ ຜົນສູງ.

ໃນປີ 2023 ນີ້, ເປັນປີມີຫຼາຍເຫດການສຳຄັນ ທາງດ້ານການເມືອງຂອງປະເທດເຮົາຄື: ວັນສ້າງຕັ້ງ ພັກ ປະຊາຊົນປະຕິວັດລາວ ຄົບຮອບ 68 ປີ, ວັນຊາດ ທີ 2 ທັນວາ ຄົບຮອບ 48 ປີ, ວັນຄ້າຍວັນເກີດ ປະທານ ໄກສອນ ພົມວິຫານ ຄົບຮອບ 103 ປີ ແລະ ວັນປະກາດ ເອກະລາດ ຄົບຮອບ 78 ປີ ເວົ້າລວມ, ເວົ້າສະເພາະ ການ ປະຕິບັດຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 268/ຄລສພ, ຄຳແນະນຳຂອງຄະນະຈັດ ຕັ້ງສູນກາງພັກ ສະບັບເລກທີ 25/ຄຈສພ ແລະ ຄຳແນະນຳ ຂອງຄະນະກວດກາສູນກາງພັກ ສະບັບເລກທີ 74/ ຄກສພ ກ່ຽວກັບການດຳເນີນກອງປະຊຸມຄົບຄະນະ ກາງສະໄໝ ຂອງຄະນະບໍລິຫານງານພັກ ແຕ່ລະຂັ້ນ. ສະ ນັ້ນເພື່ອເປັນການສ້າງຂະບວນການທີ່ມີຄວາມໝາຍສຳ ຄັນດັ່ງກ່າວ ວຽກງານການເມືອງ-ແນວຄິດ ຍິ່ງມີຄວາມສຳ ຄັນເຊິ່ງຮຽກຮ້ອງໃຫ້ຄະນະພັກແຕ່ລະຂັ້ນ ຕ້ອງໄດ້ເພີ່ມ ຄວາມເອົາໃຈໃສ່ໃນການຈັດຕັ້ງເຜີຍແຜ່, ເຊື່ອມຊຶມບັນ ດານິຕິກຳ ແລະ ເອກະສານກ່ຽວຂ້ອງຕ່າງໆຕື່ມ ເປັນຕົ້ນ ແມ່ນ ມະຕິຂອງກົມການເມືອງ ສະບັບ ເລກທີ 030/ ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການປະຕິ ບັດມາດຕະຖານພະນັກງານນຳພາ-ຄຸ້ມຄອງ; ມາດຕະ ຖານສະມາຊິກພັກ, ຂໍ້ຫ້າມຂອງສະມາຊິກພັກ, ສິດ ແລະ ໜ້າທີ່ຂອງຄະນະພັກແຕ່ລະຂັ້ນ ທີ່ກຳນົດໄວ້ໃນກົດລະ ບຽບພັກ ສະໄໝທີ XI. ທັງນີ້ກໍ່ເພື່ອເປັນການສືບຕໍ່ປົກ ປັກຮັກສາ ແລະ ເສີມຂະຫຍາຍ ມູນເຊື້ອບົດຮຽນການນຳ ພາອັນດີງາມຂອງພັກ ໃນໄລຍະຜ່ານມາ, ທັງເປັນການ ປັບປຸງແກ້ໄຂຈຸດອ່ອນຂໍ້ຂາດຕົກບົກຜ່ອງ ແລະ ສິ່ງ ທ້າທາຍທົດສອບ ທີ່ເປັນອັນຕະລາຍຕໍ່ພັກ ທີ່ໄດ້ກຳນົດ ໄວ້ໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ມີ ການຫັນປ່ຽນຢ່າງຕັ້ງໜ້າດ້ວຍຈິດໃຈບຸກທະລຸ ເພື່ອ ແນໃສ່ຍົກສູງຄວາມສາມາດນຳພາ ແລະ ລັກສະນະ ນຳໜ້າຂອງພັກ, ທັງເປັນການເພີ່ມທະວີຄວາມສາມັກ ຄີເປັນປຶກແຜ່ນພາຍໃນພັກ-ພາຍໃນຊາດ, ສືບຕໍ່ປະຕິ ບັດແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ມີຫຼັກ ການຂອງພັກ, ເດັດດ່ຽວນຳພາປະຕິ ບັດສອງໜ້າທີ່ຍຸດ ທະສາດ ປົກປັກຮັກສາ ແລະ ພັດທະນາປະເທດຊາດ ກ້າວສູ່ຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ. ສະນັ້ນ ເພື່ອເປັນການສ້າງຂະບວນການວັນສຳຄັນດັ່ງກ່າວ ວຽກ ງານການເມືອງ-ແນວຄິດ ຍິ່ງມີຄວາມສຳຄັນເຊິ່ງຮຽກ ຮ້ອງໃຫ້ຄະນະພັກແຕ່ລະຂັ້ນຕ້ອງເປັນເຈົ້າການ, ເອົາ ໃຈໃສ່ອີຫຼີຕໍ່ການຕີລາຄາທົບທວນຄືນ ການນຳພາຈັດ ຕັ້ງປະຕິບັດບັນດາທິດທາງ, ເນື້ອໃນ, ຄາດໝາຍ, ທີ່ກອງ ປະຊຸມໃຫຍ່ຂັ້ນຕົນວາງອອກ ຕິດພັນກັບການຈັດຕັ້ງ ປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງ ທີ XI ຂອງພັກກາງສະໄໝ, ການປະຕິບັດ 2 ວາລະ ແຫ່ງຊາດຂອງຂະແໜງການ ແລະ ທ້ອງຖິ່ນຢ່າງຮອບ ດ້ານ ອັນໄດ້ເຮັດມີຜົນສຳເລັດ ແລະ ອັນໃດຍັງຄົງຄ້າງ ເພື່ອສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍສູ້ຊົນແຕ່ລະ ດ້ານຂອງອົງຄະນະພັກໃນຕໍ່ໜ້າ ໃຫ້ແທດເໝາະກັບ ຄວາມອາດສາມາດບົ່ມຊ້ອນ, ກຳລັງແຮງທີ່ມີ ແລະ ສາ ມາດປະຕິບັດໄດ້ທັງນີ້ກໍ່ເປັນການ ເປີດບັ້ນດຳເນີນຊີ ວິດການເມືອງກາງສະໄໝຂອງຄະນະພັກ ແລະ ທັງ ໂອກາດໜຶ່ງທີ່ສ້າງເງື່ອນໄຂໃຫ້ຄະນະພັກ, ສະມາຊິກ ພັກ ຕະຫຼອດຮອດພະນັກງານ-ລັດຖະກອນ ແລະ ມະຫາ ຊົນໄດ້ກວດກາຕົນເອງຄືນ, ຈຶ່ງສາມາດ ເຫັນໄດ້ດ້ານດີ- ດ້ານອ່ອນ ແລະ ພ້ອມກັນຊອກຫາຊ່ອງທາງແກ້ໄຂບັນ ດາຈຸດອ່ອນ ແລະ ຂໍ້ຄົງຄ້າງໃຫ້ໝົດໄປ.

ເວົ້າລວມແລ້ວ, ວຽກງານການເມືອງ-ແນວຄິດ

ເປັນວຽກໜຶ່ງທີ່ສຳຄັນ, ເປັນສະໜາມຮົບທີ່ດຸເດືອດ ຂ້ຽວຂາດ ທັງເປັນສະໜາມຮົບທີ່ບໍ່ໄດ້ເສຍເລືອດເນື້ອ, ບໍ່ໄດ້ຍິນສຽງປືນ, ບໍ່ມີຄວນໄຟ ແຕ່ເປັນສະໜາມຮົບທີ່ບໍ່ມີວັນສິ້ນສຸດ. ສະນັ້ນ ມັນຈຶ່ງຮຽກຮ້ອງໃຫ້ຄະນະພັກ-ຄະນະນຳແຕ່ລະຂັ້ນ ຕ້ອງເອົາໃຈໃສ່ຕໍ່ວຽກງານດັ່ງກ່າວຢ່າງເອົາຈິງເອົາຈັງ ເພື່ອໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງຕົນ. ການເອົາໃຈໃສ່ເຮັດວຽກງານການເມືອງ-ແນວຄິດ ອາດສາມາດເວົ້າໄດ້ວ່າ ແມ່ນມາດຕະຖານໜຶ່ງ ເພື່ອຕິດຕາມກວດກາ, ຕີລາຄາຈັດປະເພດຄະນະພັກແຕ່ລະຂັ້ນ ເວົ້າແນວນີ້ກໍ່ບໍ່ໝາຍຄວາມວ່າ ມີແຕ່ຄະນະພັກເປັນຜູ້ເຮັດວຽກງານແນວຄິດພຽງຜູ້ດຽວ ແຕ່ວ່າສະຫາຍເລຂາຄະນະພັກຢູ່ແຕ່ລະບ່ອນນັ້ນເປັນຜູ້ທີ່ມີປັດໄຈຕັດສິນກວ່າໝູ່. ໃນດ້ານໜຶ່ງອີກ ປະສິດທິຜົນຂອງວຽກງານການເມືອງ-ແນວຄິດຈະດີ ຫຼື ບໍ່, ຈະໄດ້ຮັບຜົນໜ້ອຍ ຫຼື ຫຼາຍ ນັ້ນມັນກໍ່ຂຶ້ນກັບບັນດາປັດໄຈອື່ນໆນຳອີກເປັນຕົ້ນແມ່ນ ຖັນແຖວພະນັກງານ-ສະມາຊິກພັກຜູ້ເຮັດວຽກດັ່ງກ່າວ ມີລະດັບຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດຊໍ່າໃດ, ແຕ່ສິ່ງທີ່ກ່າວມານັ້ນ ມັນກໍ່ຍັງຢູ່ໃນຄວາມຮັບຜິດຊອບຂອງຄະນະພັກທັງນັ້ນ...ຯ

# ໝູນໃຊ້ແນວຄິດ ໄກສອນ ພົມວິຫານ ...

ຕໍ່ຈາກໜ້າ 8

ຍົກລະດັບຄຸນນະພາບ ແລະ ຄວາມສາມາດຂອງພະນັກງານໃຫ້ສູງຂຶ້ນທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່, ຕ້ອງສ້າງແຜນກຳນົດກ່ຽວກັບການສ້າງພະນັກງານໃນໄລຍະສັ້ນ ແລະ ໄລຍະຍາວ, ສົ່ງໄປຮຽນພາຍໃນ ແລະ ຕ່າງປະເທດ ແລະ ຝຶກອົບຮົມ ໃນຂະບວນການຕົວຈິງໃຫ້ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ, ຮັບປະກັນໃຫ້ໄດ້ 3 ຮຸ່ນຄື: ພະນັກງານອາວຸໂສ, ພະນັກງານຮຸ່ນກາງ ແລະ ພະນັກງານຮຸ່ນໜຸ່ມ ແລະ ທັງຮັບປະກັນສາມປະເພດພະນັກງານ ຄື: ພະນັກງານນຳພາ, ພະນັກງານຄຸ້ມຄອງ ແລະ ພະນັກງານວິຊາການອື່ນໆ.

4). ການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ຕ້ອງອີງໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໜ້າທີ່ວຽກງານໃນສະເພາະໜ້າ ແລະ ຍາວນານ ໃນນັ້ນຕ້ອງເອົາໃຈໃສ່ຕໍ່ວຽກງານການສ້າງພະນັກງານຂັ້ນຍຸດທະສາດ ເອົາໃຈໃສ່ສ້າງພະນັກງານຊົນເຜົ່າ, ພະນັກງານເພດຍິງ ແລະ ພະນັກງານຮາກຖານ.

**ສະຫຼຸບລວມແລ້ວ,** ປະທານ ໄກສອນ ພົມວິຫານ ເປັນຜູ້ນຳພາທີ່ປີຊາສາມາດ, ເປັນນັກທິດສະດີ ແລະ ພຶດຕິກຳ, ເປັນນັກວາງແຜນຍຸດທະສາດ, ຍຸດໂທບາຍ ແລະ ວິທີປະຕິບັດທີ່ສະຫຼາດຄ່ອງແຄ້ວ, ມີແບບແຜນນຳພາ, ແບບແຜນເຮັດວຽກວິທະຍາສາດ ແມ່ນຜູ້ນຳທີ່ມີທັດສະນະມະຫາຊົນກວ້າງຂວາງ, ມີຄຸນສົມບັດສິນທຳອັນສູງສົ່ງ; ປອດໃສບໍລິສຸດ, ຊື່ສັດ; ການໝູນແນວຄິດໄກສອນ ພົມວິຫານ ກ່ຽວກັບການກໍ່ສ້າງ-ບຳລຸງພະນັກງານນຳພາ-ຄຸ້ມຄອງ ແມ່ນຄວາມຮຽກຮ້ອງຕ້ອງການອັນຈຳເປັນ ເພື່ອເຮັດແນວໃດໃຫ້ພັກ-ລັດ ສາມາດຄົ້ນຄວ້າສ້າງໄດ້ພະນັກງານຫຼັກແຫຼ່ງ ແລະ ພະນັກງານສືບທອດປ່ຽນແທນ ໃນພາລະກິດປະຕິວັດອັນສະຫງ່າອົງອາດຂອງພັກຂອງຊາດ...ຯ

# ແຂວງຫຼວງນ້ຳທາ ເອົາໃຈໃສ່ວຽກງານແຂ່ງຂັນ-ຍ້ອງຍໍ ເປັນວຽກງານໜຶ່ງທີ່ສຳຄັນໃນຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ"

ໂດຍ: ຮັກກັນຕະນາ ໂດຍສີປະເສີດ

ໃນໄລຍະເຮັດການປະຕິວັດຊາດ ປະຊາທິປະໄຕກໍ່ຄືໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ພັກເຮົາຍາມໃດ ກໍ່ຖືເອົາວຽກງານແຂ່ງຂັນ-ຍ້ອງຍໍເປັນພາກສ່ວນໜຶ່ງທີ່ສຳຄັນໃນນະໂຍບາຍຂອງພັກ, ເປັນສິ່ງກະຕຸກຊຸກຍູ້ໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ລະບຽບກົດໝາຍຂອງລັດໃຫ້ມີຜົນສຳເລັດ, ພັກໄດ້ຖືເອົາການຍ້ອງຍໍສັນລະເສີນເປັນຂີດໝາຍໃນການຮັບຮູ້ຜົນງານຄຸນງາມຄວາມດີຂອງບຸກຄົນ ແລະ ກົມກອງລວມໝູ່ທີ່ໄດ້ປະກອບສ່ວນເຂົ້າໃນຂະບວນການປະຕິວັດຕໍ່ສູ້ກູ້ຊາດໃນເມື່ອກ່ອນກໍ່ຄືການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປະຈຸບັນ.

ວຽກງານແຂ່ງຂັນ-ຍ້ອງຍໍແມ່ນວຽກງານໜຶ່ງທີ່ມີຄວາມສຳຄັນ ແລະ ໄດ້ຮັບຄວາມເອົາໃຈໃສ່ຈາກພັກ ແລະ ລັດຖະບານ ເຊິ່ງເວລາໃດກໍ່ໄດ້ຖືເອົາວຽກງານດັ່ງກ່າວຕິດພັນກັບຂະບວນການປະຕິວັດໃນແຕ່ລະໄລຍະເພາະວຽກງານດັ່ງກ່າວແມ່ນປັດໄຈສຳຄັນໃນການຊຸກຍູ້, ການແຂ່ງຂັນຕ້ອງດຳເນີນຢ່າງເປັນຂະບວນຟົດຟື້ນພາຍໃຕ້ຄຳຂວັນ: "ຮັກຊາດແລະ ພັດທະນາ" ຮັກຊາດຕ້ອງຕິດພັນກັບການຮັກລະບອບໃໝ່, ພັດທະນາແມ່ນເຮັດໃຫ້ມີການຫັນປ່ຽນຈາກອັນເກົ່າໄປສູ່ອັນໃໝ່ທີ່ຂະຫຍາຍຕົວກ້າວໜ້າຂື້ນເລື້ອຍໆ; ປຸກລະດົມການຕ່າງໆໃຫ້ເຕີບໃຫຍ່, ເຂັ້ມແຂງບົນພື້ນຖານນັ້ນກໍ່ເພື່ອເລືອກເຟັ້ນໃຫ້ໄດ້ບຸກຄົນ ແລະ ກົມກອງທີ່ດີເດັ່ນປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ທຶນຮອນແກ່ພັກ ແລະ ລັດຖະບານໃນການສ້າງສາພັດທະນາປະເທດຊາດ; ວຽກງານແຂ່ງຂັນ-ຍ້ອງຍໍເວລາໃດກໍ່ຕິດພັນກັບແນວທາງນະໂຍບາຍຂອງພັກ ແລະ ລັດຖະບານຍ້ອນວ່າວຽກງານນີ້ເນື້ອແທ້ມັນແມ່ນໄມ້ຫຼາວັດແທກເຖິງຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມຮູ້ຄວາມສາມາດຂອງບຸກຄົນ ແລະ ການຈັດຕັ້ງໃນການປະຕິບັດແນວທາງນະໂຍບາຍຂອງພັກ-ລັດ.

ການຍ້ອງຍໍ ເປັນນະໂຍບາຍໜຶ່ງທີ່ມີຄວາມໝາຍຄວາມສຳຄັນຕິດພັນກັບທຸກຂົງເຂດວຽກງານທັງພາກລັດ ແລະ ເອກະຊົນ. ວຽກງານຍ້ອງຍໍມີຫຼາຍຂອດເຊັ່ນ: ການຕີລາຄາ, ການຄັດເລືອກ, ການສະຫຼຸບ, ການສະເໜີ, ການຕົກລົງ... ເຊິ່ງໂດຍລວມແລ້ວການຍ້ອງຍໍສ່ວນຫຼາຍແມ່ນຍ້ອງຍໍບັນດາບຸກຄົນທີ່ເປັນພະນັກງານໃນທົ່ວປະເທດ, ບົນພື້ນຖານການຄັດເລືອກ, ການຕີລາຄາດັ່ງກ່າວໃນແຕ່ລະປີເພື່ອເຫັນໄດ້ຜົນງານ, ຄຸນງາມຄວາມດີ, ຜົນສຳເລັດໃນການປະຕິບັດໜ້າທີ່ຕ່າງໆຂອງພະນັກງານ, ເປັນການເສີມຂະຫຍາຍວຽກດີຄົນເດັ່ນພ້ອມທັງປະຕິບັດວິໄນຕໍ່ບຸກຄົນທີ່ປະພຶດນອກເໜືອຈາກລະບຽບຫຼັກການທີ່ກຳນົດໄວ້. ສະນັ້ນ, ການຕີລາຄາສ່ວນຫຼາຍແມ່ນຕີລາຄາພະນັກງານເຮັດແນວໃດຈຶ່ງໃຫ້ຖືກກັບຜົນງານ ຫຼື ການປະຕິບັດໜ້າທີ່ວຽກງານຕົວຈິງຂອງເຂົາເຈົ້າ ເພື່ອເປັນບ່ອນອີງທີ່ໜັກແໜ້ນ

ໃນການຄົ້ນຄວ້າ, ສະເໜີຍ້ອງຍໍ. ອັນສຳຄັນໜຶ່ງກໍ່ເປັນການຍົກສູງຄຸນນະພາບຂອງວຽກງານແຂ່ງຂັນ-ຍ້ອງຍໍ ແລະ ເປັນທ່າແຮງໜຶ່ງໃນການປຸກລະດົມເຕົ້າໂຮມກຳລັງແຮງຂອງທຸກພາກສ່ວນໃນທົ່ວສັງຄົມ, ເຊີດຊູມູນເຊື້ອຮັກຊາດ, ຄວາມພິລະອາດຫານ, ນ້ຳໃຈດຸໝັ່ນ, ປະຢັດ, ຊື່ສັດ, ອົດທົນ, ປະດິດສ້າງ, ເສີມຂະຫຍາຍ ສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ, ແຂ່ງຂັນກັນປະຕິບັດສອງໜ້າທີ່ຍຸດທະສາດ: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ສູ້ຊົນປະຕິບັດບັນດາຄາດໝາຍທີ່ພັກ ແລະ ລັດວາງອອກແຕ່ລະໄລຍະເປັນຕົ້ນແມ່ນການລຶບລ້າງຄວາມທຸກຍາກ, ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ. ເພື່ອພາປະເທດຊາດຫຼຸດພົ້ນຈາກຄວາມດ້ອຍພັດທະນາ; ເຮັດໃຫ້ຄົນລາວທຸກຄົນ, ທຸກການຈັດຕັ້ງມີຄວາມບຸກບືນແຂ່ງຂັນພັດທະນາຕົນເອງໃນທຸກດ້ານ ແລະ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດຕາມຄາດໝາຍທີ່ພັກ-ລັດເຮົາວາງໄວ້.

ເພື່ອຊຸກຍູ້ຂະບວນການ "ແຂ່ງຂັນຮັກຊາດ ແລະ ພັດທະນາ" ໃຫ້ແຂງແຮງ, ເລິກເຊິ່ງ ແລະ ເພື່ອສ້າງພື້ນຖານອັນໜັກແໜ້ນໃຫ້ແກ່ການນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາຈຶ່ງໄດ້ກຳນົດທິດທາງ, ຄາດໝາຍສູ້ຊົນ ແລະ ມາດຕະການຈັດຕັ້ງປະຕິບັດຂະບວນແຂ່ງຂັນ "ຮັກຊາດ ແລະ ພັດທະນາ", ສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆກ່ຽວກັບວຽກງານແຂ່ງຂັນ ແລະ ຍ້ອງຍໍໃຫ້ມີເນື້ອໃນຄົບຖ້ວນ, ຮັດກຸມສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່ເຮັດໃຫ້ວຽກງານແຂ່ງຂັນ ແລະ ຍ້ອງຍໍເປັນຂະບວນການຟົດຟື້ນ, ມີປະສິດທິພາບ ແລະ ປະສິດທິຜົນສູງກວ່າເກົ່າ.

ໄລຍະຜ່ານມາ ແຂວງຫຼວງນ້ຳທາ ກໍ່ໄດ້ມີຄວາມພະຍາຍາຍເອົາໃຈໃສ່ໃນວຽກງານ ແຂ່ງຂັນ ແລະ ຍ້ອງຍໍແມ່ນໜຶ່ງໃນແນວທາງ, ແຜນນະໂຍບາຍຂອງພັກ ແລະ ລັດຖະບານ, ເປັນໜ້າທີ່ຄວາມຮັບຜິດຊອບ ຂອງທົ່ວປວງຊົນ ພາຍໃຕ້ການນຳພາຂອງພັກ ແລະ ການຄຸ້ມຄອງຂອງລັດ; ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງສັງຄົມອື່ນໆ ເປັນຜູ້ປຸກລະດົມທຸກເຜົ່າ, ທຸກຊັ້ນຄົນເຂົ້າຮ່ວມຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຢ່າງກວ້າງຂວາງ ແລະ ທົ່ວເຖິງ; ຮັບປະກັນໄດ້ຕາມ 4 ຄາດໝາຍຄື: ໃຫ້ໄວ, ໃຫ້ດີ, ໃຫ້ຫຼາຍ ແລະ ໃຫ້ຖືກຕ້ອງ ຕາມກົດໝາຍ. ຄະນະພັກແຕ່ລະຂັ້ນ ກໍ່ໄດ້ຍົກສູງຄວາມຮັບຜິດຊອບຂອງຕົນໃນການເຊື່ອມຊຶມ, ກຳແໜ້ນນິຕິກຳຕ່າງໆຢ່າງເລິກເຊິ່ງກ່ຽວກັບວຽກງານແຂ່ງຂັນ ແລະ ຍ້ອງຍໍ ເປັນຕົ້ນແມ່ນດຳລັດ ເລກທີ 116/ລບ, ລົງວັນທີ 22 ເມສາ 2019 ວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ, ບົດແນະນຳຂອງກະຊວງພາຍໃນ ເລກທີ 01/ພນ, ລົງວັນທີ 07 ກຸມພາ 2020 ກ່ຽວກັບການຈັດຕັ້ງຜັນຂະຫຍາຍດຳລັດວ່າດ້ວຍແຂ່ງຂັນ ແລະ ຍ້ອງຍໍ ຖືເອົາວຽກງານດັ່ງກ່າວເປັນຂະບວນການອອກແຮງງານຮອບດ້ານ; ຍູ້ແຮງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາໃຫ້ບັນລຸຕາມ 4 ເນື້ອໃນການແຂ່ງຂັນຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານພັດທະນາຊົນນະບົດຮອບດ້ານ ເພື່ອສະຫຼຸບໃຫ້ໄດ້ບຸກຄົນ, ຄອບຄົວຕົວແບບ, ນັກພັດທະນາກອນ, ຜູ້ປະກອບການ ແລະ ການຈັດຕັ້ງດີເດັ່ນ ເພື່ອຄັດເລືອກການຍ້ອງຍໍຜົນງານ; ທຸກການຍ້ອງຍໍສັນລະເສີນຕ້ອງຕິດພັນກັບຂະບວນການແຂ່ງຂັນ, ຮັບປະກັນໃຫ້ການຍ້ອງຍໍຖືກຕ້ອງຕາມລະບຽບຫຼັກການ, ຍ້ອງຖືກຜູ້ທີ່ມີຜົນງານດີເດັ່ນທີ່ໄດ້ຜ່ານຂະບວນການແຂ່ງຂັນ ເພື່ອເປັນການກະຕຸກຊຸກຍູ້ການປະຕິບັດໜ້າທີ່ວຽກງານຂອງພົນລະເມືອງລາວທຸກຄົນ; ຄົ້ນຄວ້າຮູບການແລະວິທີການຄັດເລືອກບຸກຄົນ, ກົມກອງທີ່ມີຜົນງານ ເພື່ອຂໍການຍ້ອງຍໍໃຫ້ມີປະສິດທິຜົນສູງກວ່າເກົ່າຮັບປະກັນຄຸນນະພາບ

ແລະ ຖືກຕ້ອງກັບຜົນງານຕົວຈິງ;

ໃນໄລຍະຜ່ານມາ ຜ່ານການຈັດຕັ້ງປະຕິບັດ ແຂວງຫຼວງນໍ້າທາ ກໍ່ຄືພະແນກພາຍໃນ ກໍ່ໄດ້ເອົາໃຈ ໃສ່ຢ່າງຕັ້ງໜ້າໃນການຈັດຕັ້ງຜັນຂະຫຍາຍ ແລະ ສາ ມາດສະຫຼຸບຜົນສໍາເລັດການຕີລາຄາ ແລະ ປະເມີນການ ຈັດຕັ້ງປະຕິບັດຂະບວນການແຂ່ງຂັນຮັກຊາດ, ພັດທະ ນາ ແລະ ສັງລວມການຍ້ອງຍໍຜົນງານ ໃຫ້ບຸກຄົນ ແລະ ກົມກອງທົ່ວແຂວງ ສະແດງອອກ: ສໍາເລັດການຈັດພິທີ ສະຫຼຸບຂະບວນການ "ຮັກຊາດ ແລະ ພັດທະນາ" ແຕ່ປີ 2016-2020 ແລະ ເປີດຂະບວນການ "ຮັກຊາດ ແລະ ພັດທະນາ" ໃນຂໍ້ແຂ່ງຂັນຕ່າງໆ ຢູ່ຂັ້ນແຂວງ, ບັນດາ ພະແນກການ, ອົງການທຽບເທົ່າຂັ້ນແຂວງ, 2 ກອງບັນ ຊາການ, ລັດວິສາຫະກິດ, ສາຂາທະນາຄານ ແລະ ບັນດາ ເມືອງ; ລົງທະບຽນເຂົ້າຮ່ວມການແຂ່ງຂັນອ້ອມຂ້າງ ແຂວງ ທັງໝົດ 55 ພາກສ່ວນ, 43 ກຸ່ມບ້ານ, 352 ບ້ານ; ລວມທັງໝົດ 32.957 ທ່ານ, ຍິງ 3.531 ທ່ານ; ຍ້ອງ ຍໍບຸກຄົນດີເດັ່ນຜົນງານປະຈໍາປີ 2022 ມີຈໍານວນ 4.645 ທ່ານ, ຍິງ 1.271 ທ່ານ; ຈັດສົ່ງໃບຍ້ອງຍໍປະຈໍາ ປີ 2022 ໃຫ້ບັນດາພະແນກການ, ອົງການທຽບເທົ່າຂັ້ນ ແຂວງ ແລະ ບັນດາເມືອງ; ສໍາເລັດລົງຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ-ຍ້ອງຍໍຮັກຊາດ ແລະ ພັດທະນາຂອງບັນດາເມືອງ; ຍ້ອງຍໍ ບຸກຄົນທີ່ມີຜົນງານ ດີເດັ່ນ, ຫົວໜ່ວຍທຸລະກິດ ແລະ ບຸກຄົນທີ່ໄດ້ປະກອບ ສ່ວນທາງດ້ານວັດຖຸ ແລະ ປັດໄຈຕ່າງໆ ໃຫ້ຂະແໜງ ການຂັ້ນແຂວງ ແລະ ຂັ້ນເມືອງໄດ້ພິມໃບຍ້ອງຍໍ 220 ໃບ, ໃບຊົມເຊີຍ 27 ໃບ ສາມາດສັງລວມໄດ້ຄື: ຫຼຽນໄຊ ແຮງງານ ຊັ້ນ I ບຸກຄົນ ຈໍານວນ 49 ທ່ານ ແລະ 05 ກົມກອງ; ຫຼຽນໄຊແຮງງານ ຊັ້ນ II ບຸກຄົນຈໍານວນ 97 ທ່ານ ແລະ 13 ກົມກອງ; ຫຼຽນໄຊແຮງງານ ຊັ້ນ III ບຸກຄົນ ຈໍານວນ 208 ທ່ານ ແລະ 21 ກົມກອງ; ຫຼຽນ ກາແຮງງານ ບຸກຄົນ ຈໍານວນ 439 ທ່ານ, 02 ບ້ານ ແລະ 50 ກົມກອງ; ໃບຍ້ອງຍໍລັດຖະບານ ບຸກຄົນ ຈໍານວນ 1.621 ທ່ານ, 64 ກົມກອງ, 04 ຄອບຄົວ, 12 ບ້ານ; ໃບ ຍ້ອງຍໍເຈົ້າແຂວງ ບຸກຄົນ ຈໍານວນ 2.266 ທ່ານ, 81 ກົມ ກອງ, 83 ບ້ານ.

ຄຽງຄູ່ດ້ານຕັ້ງໜ້າ ແລະ ຜົນສໍາເລັດທີ່ໄດ້ກ່າວ ມານັ້ນຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການໃນໄລຍະ ໃໝ່ນີ້ເຫັນວ່າ ຍັງມີຂໍ້ຄົງຄ້າງ ເຊິ່ງຖືວ່າເປັນບັນຫາທີ່ ຄວນໄດ້ຮັບການແກ້ໄຂໃນຕໍ່ໜ້າດັ່ງນີ້:

1. ຄະນະພັກ, ອົງການປົກຄອງຈໍານວນໜຶ່ງ ບໍ່ທັນເຫັນໄດ້ຄວາມສໍາຄັນວຽກງານແຂ່ງຂັນ-ຍ້ອງຍໍ, ຄວາມຮັບຜິດຊອບຂອງພະນັກງານຜູ້ທີ່ເຮັດວຽກງານ ແຂ່ງຂັນ-ຍ້ອງຍໍຈໍານວນໜຶ່ງບໍ່ທັນສູງ ຊຶ່ງສະແດງອອກ ໃນການຄົ້ນຄວ້າ, ເລືອກເຟັ້ນ ແລະ ສະເໜີຍ້ອງຍໍຜ່ານ ມາ ຍັງຊັກຊ້າແກ່ຍາວບໍ່ທ່ອງທັນເວລາທີ່ກໍານົດໄວ້ ເຮັດໃຫ້ຄວາມໝາຍ ແລະ ຄຸນຄ່າຂອງການຍ້ອງຍໍບໍ່ ເລິກເຊິ່ງ ແລະ ໂດດເດັ່ນ.

2. ການຈັດຕັ້ງເຊື່ອມຊຶມດ້ານນິຕິກໍາກ່ຽວກັບ ວຽກງານແຂ່ງຂັນ-ຍ້ອງຍໍ ບໍ່ທັນເຮັດໄດ້ດີ, ເປັນລະບົບ ຈຶ່ງບໍ່ມີບ່ອນອີງທີ່ໜັກແໜ້ນ ແລະ ເປັນເອກະພາບໃນ ການຈັດຕັ້ງປະຕິບັດ ເຮັດໃຫ້ການຄົ້ນຄວ້າ, ເລືອກເຟັ້ນ ບໍ່ແທດຕົວຈິງ, ບໍ່ທັນແນໃສ່ມາດຕະຖານຕົວຈິງ , ເຮັດ ໃຫ້ບາງບ່ອນເກີດມີຫາງສຽງ, ຈົ່ມວ່າ, ຊັ່ງຊາປຽບທຽບ ໃນເວລາທີ່ມີການຍ້ອງຍໍ.

3. ກົງຈັກຊ່ວຍວຽກນັບທັງບຸກຄະລາກອນທີ່ ເຮັດວຽກງານແຂ່ງຂັນ-ຍ້ອງຍໍຢູ່ແຕ່ລະຂັ້ນ ຍັງບໍ່ທັນ ເປັນເຈົ້າການ, ບໍ່ໄດ້ຮັບການປັບປຸງຢ່າງຕັ້ງໜ້າ, ລະດັບ ຄວາມຮູ້ຄວາມສາມາດໃນການຄົ້ນຄວ້າ, ຕິດຕາມ, ຕີລາຄາຍັງບໍ່ທັນລະອຽດ, ຊັດເຈນ ເຮັດໃຫ້ການເປັນເສ ນາທິການຊ່ວຍຄະນະພັກແຕ່ລະຂັ້ນໄດ້ຢ່າງແຂງແຮງ.

4. ການປະຕິບັດແຜນການ-ການເງິນບໍ່ໄດ້ຮັບ ການປະຕິບັດໄປຕາມແຜນທີ່ໄດ້ກໍານົດໄວ້ ເຮັດໃຫ້

ວຽກງານບໍ່ມີປະສິດທິພາບເທົ່າທີ່ຄວນ ໂດຍສະເພາະຄວາມເປັນເຈົ້າການຂອງຄະນະພັກແຕ່ລະຂັ້ນໃນການຊຸກຍູ້, ສົ່ງເສີມຂະບວນການແຂ່ງຂັນ ແລະ ວຽກງານເກັບກຳຂໍ້ມູນການເຄື່ອນໄຫວວຽກງານຕົວຈິງໃນຂະບວນການດັ່ງກ່າວ.

5. ການສະຫຼຸບຖອດຖອນບົດຮຽນກ່ຽວກັບວຽກງານແຂ່ງຂັນ-ຍ້ອງຍໍ ໃນແຕ່ລະໄລຍະຍັງເຮັດບໍ່ທັນໄດ້ດີ, ບໍ່ທັນມີທິດໃນການປັບປຸງແກ້ໄຂໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງ; ມາດຕະການ ແລະ ການສ້າງເງື່ອນໄຂແກ່ການປະຕິບັດວຽກງານນີ້ບໍ່ທັນໄດ້ຮັບການຜັນຂະຫຍາຍຢ່າງຕໍ່ເນື່ອງ, ບໍ່ທັນລົງເລິກແທດເຖິງກັບສະພາບເງື່ອນໄຂໃນແຕ່ລະໄລຍະ, ການປະສານສົມທົບ ລະຫວ່າງ ພາກສ່ວນກ່ຽວຂ້ອງບໍ່ທັນດີແທ້.

ເພື່ອເປັນການຍົກສູງຄຸນນະພາບວຽກງານແຂ່ງຂັນ-ຍ້ອງຍໍຕິດພັນກັບຂະບວນການແຂ່ງຂັນ "ຮັກຊາດ ແລະ ພັດທະນາ" ໃຫ້ມີຄຸນນະພາບ ແລະ ເປັນຂະບວນການຟົດຟື້ນ, ເປັນພື້ນຖານໃຫ້ແກ່ການເລືອກເຟັ້ນໃຫ້ໄດ້ບຸກຄົນ ແລະ ກົມກອງທີ່ດີເດັ່ນແທ້ ເພື່ອປະກອບສ່ວນອັນສຳຄັນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງຂອງພັກ, ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ໄດ້ຮັບຜົນສຳເລັດ ພວກເຮົາຄວນເອົາໃຈໃສ່ແກ້ໄຂບາງບັນຫາດັ່ງຕໍ່ໄປນີ້:

**ໜຶ່ງ:** ຄະນະພັກ, ຄະນະນຳແຕ່ລະຂັ້ນຄວນເຊື່ອມຊຶມກຳແໜ້ນເນື້ອໃນມະຕິຕົກລົງຂອງກົມການການເມືອງສູນກາງພັກ, ນິຕິກຳຕ່າງໆກ່ຽວກັບວຽກງານແຂ່ງຂັນ-ຍ້ອງຍໍ ພ້ອມທັງຈັດຕັ້ງເຜີຍແຜ່ໃຫ້ທົ່ວກອງທັບ, ທົ່ວປວງຊົນຮັບຮູ້ເຊື່ອມຊຶມຢ່າງກວ້າງຂວາງທົ່ວເຖິງ ທັນເອົາວຽກງານແຂ່ງຂັນ-ຍ້ອງຍໍໃຫ້ກາຍເປັນໜ້າທີ່ ແລະ ຂະບວນການຂອງມະຫາຊົນເຮັດໃຫ້ທຸກການຈັດຕັ້ງ, ທຸກພາກສ່ວນເປັນເຈົ້າການຈັດຕັ້ງປະຕິບັດໃຫ້ເກີດຜົນຕົວຈິງ.

**ສອງ:** ຕ້ອງກວດກາຄືນບັນດານິຕິກຳກ່ຽວກັບວຽກງານແຂ່ງຂັນ ແລະ ຍ້ອງຍໍທີ່ມີຢູ່ ພ້ອມທັງປັບປຸງແກ້ໄຂໃຫ້ຖືກຕ້ອງສອດຄ່ອງກັບສະພາບຕົວຈິງໃນປະຈຸບັນ ເພື່ອສ້າງຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ພ້ອມດຽວກັນນັ້ນ, ກໍ່ຕ້ອງເອົາໃຈໃສ່ປັບປຸງບຸກຄະລາກອນທີ່ເຮັດວຽກງານແຂ່ງຂັນ-ຍ້ອງຍໍສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການໃນເງື່ອນໄຂໃໝ່, ພະນັກງານທີ່ຮັບຜິດຊອບວຽກງານແຂ່ງຂັນ-ຍ້ອງຍໍ ແລະ ບັນດາອົງການກ່ຽວຂ້ອງທຸກຂັ້ນທຸກພາກສ່ວນ ຕ້ອງເພີ່ມທະວີຄວາມຮັບຜິດຊອບຂອງຕົນ, ເປັນເຈົ້າການຊ່ວຍຄະນະພັກ, ອຳນາດການປົກຄອງຂັ້ນຂອງຕົນຕິດຕາມກວດກາວຽກງານແຂ່ງຂັນ-ຍ້ອງຍໍ ເປັນປົກກະຕິ.

**ສາມ:** ສະໜອງງົບປະມານເຂົ້າໃນວຽກງານນີ້ຢ່າງເໝາະສົມ ເປັນຕົ້ນການຜະລິດວັດຖຸຍ້ອງຍໍຕ່າງໆ, ການເຄື່ອນໄຫວໂຄສະນາປຸກລະດົມຂະບວນການແຂ່ງຂັນ ແລະ ຝຶກອົບຮົມພະນັກງານຜູ້ຮັບຜິດຊອບວຽກງານແຂ່ງຂັນ-ຍ້ອງຍໍ.

**ສີ່:** ສ້າງກົນໄກ, ມາດຕະຖານໃຫ້ລະອຽດຈະແຈ້ງ, ກຳນົດສິດ, ໜ້າທີ່ ແລະ ພາລະບົດບາດໃຫ້ຈະແຈ້ງສອດຄ່ອງກັບລັກສະນະ ແລະ ບໍລິມາດຂອງວຽກ; ແບ່ງງານໃຫ້ລະອຽດຫຼີກເວັ້ນການພົວພັນແບບຄຳສັ່ງ ໂດຍບໍ່ໄດ້ສະເໜີຜ່ານໜ່ວຍງານທີ່ຮັບຜິດຊອບໂດຍກົງຄົ້ນຄວ້າກ່ອນ, ມີການສະຫຼຸບລາຍງານ ແລະ ຂໍການຊີ້ນຳຈາກຂັ້ນເທິງຢ່າງເປັນປົກກະຕິ.

**ຫ້າ:** ເພື່ອເປັນການຍົກສູງຄຸນນະພາບຂອງວຽກງານແຂ່ງຂັນຍ້ອງຍໍ ໄດ້ປັບປຸງ ແລະ ສອດຄ່ອງກັບສະ

ອ່ານຕໍ່ໜ້າ 22

# ອົງຄະນະພັກແຂວງຈຳປາສັກ ເອົາໃຈໃສ່ໃນການປັບປຸງ, ກໍ່ສ້າງການຈັດຕັ້ງຮາກຖານພັກ ເປັນບັນຫາສຳຄັນ

ໂດຍ: ໄຊຊະນະ ສຸວັນນະເມທີ

ໃນພາລະກິດປ່ຽນແປງໃໝ່ຂອງການປະຕິວັດ, ມັນຈຶ່ງໄດ້ຮຽກຮ້ອງໃຫ້ທຸກການຈັດຕັ້ງໃນລະບົບການເມືອງ ຂອງພັກ, ຕ້ອງໄດ້ຮັບການປັບປຸງໃຫ້ສົມເຫດສົມຜົນ ແລະ ເຄື່ອນໄຫວຢ່າງມີຄຸນນະພາບສຳລັບບັນດາການຈັດຕັ້ງຮາກຖານພັກ ທີ່ມີບົດບາດເປັນແກນນຳທາງດ້ານການເມືອງຢູ່ຮາກຖານ, ເປັນບ່ອນສຶກສາອົບຮົມເອົາມະຫາຊົນເຂົ້າເປັນສະມາຊິກພັກ, ເປັນບ່ອນເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດໃຫ້ແທດເໝາະກັບຈຸດພິເສດຂອງທ້ອງຖິ່ນຮາກຖານເປັນບ່ອນສະກັດກັ້ນບັນດາປະກົດການຫຍໍ້ທໍ້, ເປັນບ່ອນດຳລົງຊີວິດ ແລະ ເປັນບ່ອນເຄື່ອນໄຫວປະຕິບັດໜ້າທີ່ຂອງສະມາຊິກພັກ, ພະນັກງານ ແລະ ພົນລະເມືອງທັງເປັນບ່ອນຈັດຕັ້ງ, ຜັນຂະຫຍາຍທຸກແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກກໍຄືແຜນພັດທະນາເສດຖະກິດ-ສັງຄົມຂອງລັດໃນແຕ່ລະໄລຍະໃຫ້ປະກົດຜົນເປັນຈິງ. ເພື່ອຮັບປະກັນການຈັດຕັ້ງປະຕິບັດທິດທາງ ແລະ ບັນດາຄາດໝາຍຕົ້ນຕໍທີ່ພັກວາງອອກ ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ໃຫ້ທັດສະນະວ່າ ສືບຕໍ່ປັບປຸງການຈັດຕັ້ງພັກແຕ່ລະຂັ້ນໃຫ້ມີຄວາມເຂັ້ມແຂງ, ເດັດດ່ຽວແກ້ໄຂບັນຫາທີ່ຄົງຄ້າງຢູ່ພາຍໃນພັກ ແລະ ເຮັດໃຫ້ການຈັດຕັ້ງຮາກຖານພັກມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນເປັນແກນນຳໃນລະບົບການເມືອງ ຍ້ອນເຫັນໄດ້ຄວາມສຳຄັນ ແລະ ຈຳເປັນດັ່ງກ່າວ ພັກເຮົາບໍ່ວ່າເວລາໃດກໍ່ຖືສຳຄັນ ແລະ ເອົາໃຈໃສ່ຢ່າງຈິງຈັງໃນວຽກງານກໍ່ສ້າງຮາກຖານການເມືອງ, ຖືເອົາຮາກຖານພັກເປັນບ່ອນເຕົ້າໂຮມກ້ອນກຳລັງແຫ່ງຄວາມສາມັກຄີເປັນປຶກແຜ່ນຂອງປະຊາຊົນ ແລະ ຊັ້ນຄົນພາຍໃຕ້ຄັນທຸງຂອງພັກ.

ເຮັດໃຫ້ການຈັດຕັ້ງຮາກຖານພັກມີການຂະຫຍາຍຕົວຢ່າງຕໍ່ເນື່ອງຕະຫຼອດມາ ອັນໄດ້ເຮັດໃຫ້ໜ່ວຍພັກ, ຄະນະພັກຮາກຖານ ກາຍເປັນແກນນຳໃນການນຳພາຮອບດ້ານ, ເປັນໃຈກາງການເຕົ້າໂຮມກຳລັງແຮງຕັ້ງໜ້າປະຕິບັດໜ້າທີ່ການເມືອງຢູ່ຮາກຖານເວົ້າລວມ, ເວົ້າສະເພາະ ຢູ່ແຂວງຈຳປາສັກ. ອົງຄະນະພັກແຂວງເວລາໃດກໍໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ປັບປຸງການຈັດຕັ້ງຮາກຖານພັກຂອງຕົນ ໂດຍປະຕິບັດຕາມຄຳສັ່ງຂອງກົມການເມືອງສູນກາງພັກສະບັບເລກທີ 01/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ບົດແນະນຳຂອງຄະນະຈັດຕັ້ງສູນກາງພັກສະບັບເລກທີ 291/ຄຈສພ ລົງວັນທີ 26 ເມສາ 2018 ວ່າດ້ວຍການຈັດຕັ້ງປະຕິບັດຄຳສັ່ງຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໂດຍຫັນມາເປັນນິຕິກຳອັນລະອຽດຂອງແຂວງ ແລະ ອອກມະຕິຕົກລົງຂອງຄະນະປະຈຳພັກແຂວງ ເລກທີ 452/ຄຈພຂ.ຈສ, ລົງວັນທີ 29 ກໍລະກົດ 2022 ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກໍ່ສ້າງໜ່ວຍພັກ

ປອດໃສ, ເຂັ້ມແຂງ, ໜັກແໜ້ນຂັ້ນແຂວງ ແລະ ຄຳສັ່ງແນະນຳ ຂອງຄະນະປະຈຳພັກແຂວງຈຳປາສັກ ສະບັບເລກທີ 01/ຄຈພຂ. ຈສ, ລົງວັນທີ 08 ກໍລະກົດ 2022 ກ່ຽວກັບການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ບົດແນະນຳ ຂອງຄະນະຈັດຕັ້ງແຂວງຈຳປາສັກ ສະບັບເລກທີ 540/ຄຈຂ. ຈສ ລົງວັນທີ 15 ກໍລະກົດ 2022 ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງ ຂອງຄະນະປະຈຳພັກແຂວງ ກ່ຽວກັບການເພີ່ມທະວີການກໍ້ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ແຈ້ງການ ຂອງຄະນະຈັດຕັ້ງແຂວງຈຳປາສັກ ສະບັບເລກທີ 541/ຄຈຂ. ຈສ ລົງວັນທີ 15 ກໍລະກົດ 2022 ກ່ຽວກັບການເພີ່ມທະວີການສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ພ້ອມດ້ວຍການສ້າງແຜນເຄື່ອນໄຫວລົງຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ຜ່ານການຈັດຕັ້ງປະຕິບັດເຫັນໄດ້ວ່າຄະນະພັກແຕ່ລະຂັ້ນໄດ້ຖືສຳຄັນ ແລະ ໄດ້ເອົາໃຈໃສ່ໃນການຕິດຕາມ, ກວດກາ, ນຳພາຈັດຕັ້ງປະຕິບັດຢ່າງເປັນປົກກະຕິ, ຕໍ່ເນື່ອງເຊິ່ງສະແດງອອກການຈັດຕັ້ງຮາກຖານພັກ ສ່ວນຫຼາຍແມ່ນໄດ້ຮັບການປັບປຸງໃຫ້ເຂົ້າສູ່ລະບຽບຫຼັກການ ແລະ ບົນພື້ນຖານ ສອດຄ່ອງກັບສະພາບຕົວຈິງຂອງຮາກຖານພັກຢູ່ແຕ່ລະຂົງເຂດ, ຫຼາຍບ່ອນ, ຫຼາຍໜ່ວຍພັກ ນັບທັງຢູ່ການຈັດຕັ້ງຮາກຖານພັກຢູ່ບ້ານ ແລະ ການຈັດຕັ້ງຮາກຖານພັກຢູ່ສຳນັກງານອົງການຂອງແຂວງ ແລະ ເມືອງ ມີການພົວພັນປະສານສົມທົບກັນຢ່າງຖືກຕ້ອງສອດຄ່ອງກັນລະຫວ່າງການນຳພາຂອງພັກກັບການເຊີດຊູຄວາມສັກສິດໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ ແລະ ການເສີມຂະຫຍາຍບົດບາດເປັນເຈົ້າການຂອງບັນດາອົງການຈັດຕັ້ງມະຫາຊົນຢູ່ແຕ່ລະຮາກຖານບ້ານ ກາຍເປັນກຳລັງແຮງສູ້ຮົບໃນການນຳພາການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດໃຫ້ປະກົດຜົນເປັນຈິງ; ຫຼາຍຮາກຖານພັກໄດ້ກາຍເປັນແບບຢ່າງທີ່ດີໃນການນຳພາ-ຊີ້ນຳ ເປັນການປະກອບສ່ວນເຮັດໃຫ້ບົດບາດຂອງພັກ ກາຍເປັນແກນນຳໃນການນຳພາຢູ່ຂັ້ນຮາກຖານ, ເສີມຂະຫຍາຍຈິດໃຈຮັກຊາດ, ຮັກລະບອບໃໝ່, ຕັ້ງໜ້າປະກອບສ່ວນເຂົ້າໃນການປະຕິບັດສອງໜ້າທີ່ຍຸດທະສາດດ້ວຍຄວາມຮັບຜິດຊອບສູງ, ບຸກບືນຜ່ານຜ່າທຸກຄວາມຫຍຸ້ງຍາກສັບສົນ, ຍົກລະດັບຄວາມຮູ້ທາງດ້ານທິດສະດີການເມືອງ ແລະ ຄວາມຮູ້ທາງດ້ານວິຊາສະເພາະ; ພ້ອມກັນຍົກສູງສະຕິຕື່ນຕົວໃນການປະຕິບັດສິດ, ພັນທະ ແລະ ໜ້າທີ່ຂອງພົນລະເມືອງຕາມລັດຖະທຳມະນູນ, ກົດໝາຍ; ສະມາຊິກພັກ, ພໍ່ແມ່ປະຊາຊົນປະກອບສ່ວນທຶນຮອນ, ກຳລັງແຮງງານ, ສະຕິປັນຍາ ເພື່ອຊຸກຍູ້ສົ່ງເສີມໃຫ້ເກີດມີໜໍ່ແໜງ ແລະ ປັດໄຈໃໝ່ໃນການຜະລິດເປັນສິນຄ້າ ຕາມກົນໄກເສດຖະກິດຕະຫຼາດ, ສຸມໃສ່ປັບປຸງກົນໄກຄຸ້ມຄອງເສດຖະກິດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາຕາມທິດສາມສ້າງ, ເພີ່ມທະວີບົດບາດການນຳພາຂອງພັກ, ເຊີດຊູຄວາມສັກສິດໃນການຄຸ້ມຄອງລັດດ້ວຍກົດໝາຍ ຄະນະພັກທຸກຂັ້ນໄດ້ຍົກສູງບົດບາດ, ຄວາມສາມາດນຳພາໃນລະບົບການເມືອງ ປະຊາທິປະໄຕປະຊາຊົນສຸມໃສ່ທຸກກຳລັງແຮງ ແລະ ຄວາມສາມາດນຳພາເຂົ້າໃນການປະຕິບັດມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນວາງອອກ ຢ່າງມີຜົນສຳເລັດ.

ເພື່ອເຮັດສຳເລັດໜ້າທີ່ວຽກງານຂອງຕົນຄະນະພັກທຸກຂັ້ນໄດ້ເອົາໃຈໃສ່ປັບປຸງ, ກໍ່ສ້າງພັກທາງດ້ານການຈັດຕັ້ງພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ສາມາດປະຕິບັດພາລະກິດເປັນແກນນຳໃນລະບົບການເມືອງຢູ່ໃນແຕ່ລະຂັ້ນ, ເຮັດໃຫ້ລະບົບການຈັດຕັ້ງຂອງພັກມີຄວາມເຕີບໃຫຍ່ເຂັ້ມແຂງ, ຖັນແຖວສະມາຊິກພັກຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ; ປະຈຸບັນທົ່ວອົງຄະນະພັກ

ແຂວງຈຳປາສັກມີ 12 ອົງຄະນະພັກຄື: 9 ອົງຄະນະພັກເມືອງ, 1 ອົງຄະນະພັກນະຄອນປາກເຊ, ອົງຄະນະພັກກອງບັນຊາການທະຫານແຂວງ, ອົງຄະນະພັກກອງບັນຊາການປ້ອງກັນຄວາມສະຫງົບແຂວງ; ທົ່ວອົງຄະນະພັກແຂວງຈຳປາສັກ ມີການຈັດຕັ້ງຮາກຖານພັກທັງໝົດ 1.982 ການຈັດຕັ້ງຮາກຖານພັກ; ໃນນັ້ນມີ 223 ຄະນະພັກຮາກຖານ, ໜ່ວຍພັກຮາກຖານ 294 ໜ່ວຍ,ໜ່ວຍພັກຂຶ້ນກັບຄະນະພັກຮາກຖານ 1.470ໜ່ວຍ, ມາຮອດປະຈຸບັນມີໜ່ວຍພັກທັງໝົດ 1.764 ໜ່ວຍພັກ (ທຽບໃສ່ປີ 2021 ເພີ່ມຂຶ້ນ 14 ໜ່ວຍພັກ ເທົ່າກັບ 0,79 %); ໄດ້ປະເມີນໜ່ວຍພັກສຳເລັດ 1.739 ໜ່ວຍພັກ, ກວມເອົາ 98,86% ຂອງໜ່ວຍພັກທັງໝົດ; ໃນນັ້ນ, ໄດ້ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຈຳນວນ 1.559 ໜ່ວຍພັກ, ກວມເອົາ 86,65%, ໜ່ວຍພັກກາງ 172 ໜ່ວຍພັກ, ກວມເອົາ 9,89%, ໜ່ວຍພັກອ່ອນ 8 ໜ່ວຍພັກ, ກວມເອົາ 0,46%; ໜ່ວຍພັກບໍ່ໄດ້ປະເມີນ 25 ໜ່ວຍ, ກວມເອົາ 1,42 %; ສະມາຊິກພັກໃນທົ່ວແຂວງທັງໝົດ 29.805 ສະຫາຍ, ຍິງ 7,961 ສະຫາຍ (ທຽບໃສປີ 2021 ເພີ່ມຂຶ້ນ 739 ສະຫາຍ, ຍິງ 408 ສະຫາຍ, ເທົ່າກັບ 2,47%); ໃນນັ້ນ, ສະມາຊິກພັກຈັດປະເພດແຂງ 24.207 ສະຫາຍ, ຍິງ 6.541 ສະຫາຍ,ກວມ 94,51%, ສະມາຊິກພັກຈັດປະເພດກາງ 1.387 ສະຫາຍ,ຍິງ 250 ສະຫາຍ, ກວມ 5,42%, ສະມາຊິກພັກຈັດປະເພດອ່ອນ 18 ສະຫາຍ,ຍິງ 1 ສະຫາຍ, ກວມ 0,07%, ສະມາຊິກພັກບໍ່ໄດ້ຈັດປະເພດ 4.193 ສະຫາຍ, ຍິງ 1.169 ສະຫາຍ, ກວມ 14,07% (ສະມາຊິກພັກສຳຮອງ ແລະ ຍົກຍ້າຍມາໃໝ່, ສະມາຊິກພັກ-ພະນັກງານບຳນານແມ່ນບໍ່ໄດ້ປະເມີນ).

ຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດ ໃນການປັບປຸງການຈັດຕັ້ງຮາກຖານພັກ ກໍຍັງມີຂໍ້ຄົງຄ້າງຈຳນວນໜຶ່ງທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂ ດັ່ງນີ້:

1). ການຄົ້ນຄວ້າ, ເຊື່ອມຊຶມ ເພື່ອກຳແໜ້ນບັນດາເນື້ອໃນຈິດໃຈ ບັນດານິຕິກຳການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຍັງບໍ່ທັນເລິກເຊິ່ງ ມີບາງຄະນະພັກ, ສະມາຊິກພັກບາງສະຫາຍ ບາງຄັ້ງຍັງຖືເບົາ, ຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ, ບໍ່ທັນກວ້າງຂວາງ ແລະ ບໍ່ທັນຮັບຮູ້ເຂົ້າໃຈຕໍ່ກັບເນື້ອໃນ, ວິທີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ການຕີລາຄາຄຸນນະພາບແບ່ງປະເພດໃຫ້ຄະແນນສະມາຊິກພັກ ແລະ ໜ່ວຍພັກມີລັກສະນະຜິວເຜີນ, ບໍ່ພາວະວິໄສ ຍ້ອນຂາດການຕີລາຄາໃນແຕ່ລະເດືອນ, ທ້າຍປີຈຶ່ງຕີລາຄາລວມເທື່ອດຽວ.

2). ການສຶກສາອົບຮົມການເມືອງ-ແນວຄິດຢູ່ບາງຄະນະພັກ, ສະມາຊິກພັກ ຍັງມີລັກສະນະລວມໆ, ບໍ່ຕິດພັນກັບຕົວຈິງ, ບໍ່ແທດເໝາະກັບແຕ່ລະເປົ້າໝາຍ ຈຶ່ງເຮັດໃຫ້ການກໍ່ສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທາງດ້ານການເມືອງ, ແນວຄິດ ໃຫ້ພະນັກງານ-ສະມາຊິກພັກຍັງບໍ່ທັນເປັນປົກກະຕິ ແລະ ບໍ່ທັນມີຫຼາຍຮູບການທີ່ແທດເໝາະແຕ່ລະເປົ້າໝາຍ, ການຫັນປ່ຽນທາງດ້ານທັດສະນະແນວຄິດ ແລະ ພຶດຕິກຳ ມີການປ່ຽນແປງຊ້າ; ແບບແຜນວິທີນຳພາຂອງຮາກຖານພັກຈຳນວນໜຶ່ງຍັງບໍ່ທັນຫັນເຂົ້າສູ່ລະບຽບແບບແຜນທີ່ແທ້ຈິງ, ເປັນຕົ້ນລະບອບການປະຊຸມປົກສາຫາລື, ການປະຕິບັດລະບອບລວມສູນປະຊາທິປະໄຕພາຍໃນພັກຍັງບໍ່ທັນເຂັ້ມງວດ.

3). ຄວາມເປັນເຈົ້າການຂອງບາງສະຫາຍໃນຄະນະພັກ, ສະມາຊິກພັກ ຕໍ່ການປັບປຸງກົງຈັກການຈັດຕັ້ງ ບາງໜ່ວຍພັກ ຍັງເຮັດບໍ່ທັນຕໍ່ເນື່ອງ ແລະ ຍັງບໍ່ທັນສ້າງເງື່ອນໄຂທີ່ດີໃຫ້ແກ່ມະຫາຊົນເຂົ້າຮ່ວມຂະບວນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຄວາມເອົາໃຈໃສ່ເປັນເຈົ້າການໃນການສ້າງແຜນ ແລະ ການຈັດຕັ້ງແຜນດັ່ງກ່າວ ຈຶ່ງເຮັດໃຫ້ການເຄື່ອນໄຫວວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຂອງແຕ່ລະໜ່ວຍພັກ

ບໍ່ທັນມີປະສິດທິຜົນເທົ່າທີ່ຄວນ.

4). ການນຳພາຂອງຄະນະພັກຈຳນວນໜຶ່ງຕໍ່ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຍັງບໍ່ທັນແທດເຖິງຕົວຈິງ; ຍັງຂາດບົດຮຽນ ແລະ ວິທີການນຳພາ, ການວາງແຜນການນຳພາໃນແຕ່ລະດ້ານບໍ່ທັນລະອຽດຈະແຈ້ງ, ການຊຸກຍູ້ຕິດຕາມ, ກວດກາປະເມີນຜົນ ຍັງບໍ່ທັນເປັນລະບົບຕໍ່ເນື່ອງ.

5). ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຍັງບໍ່ທັນໄດ້ເອົາໃຈໃສ່ຢ່າງຈິງຈັງ, ຄະນະພັກຈຳນວນໜຶ່ງ ບໍ່ທັນກຳແໜ້ນເນື້ອໃນຈິດໃຈມະຕິ, ຄຳສັ່ງ ກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນບາງບ່ອນທີ່ໄດ້ປະເມີນຜົນຈຳນວນໜຶ່ງໄດ້ແຕ່ຮູບການບໍ່ທັນຕິດພັນກັບໜ້າທີ່ການເມືອງ, ເຮັດແບບລວມໆແລ່ນນຳແຕ່ຕົວເລກຄາດໝາຍ, ແຕ່ປະສິດທິຜົນບໍ່ສູງ.

6). ການກວດກາປະເມີນຜົນໜ່ວຍພັກ ຢູ່ບາງບ່ອນ ຍັງປະຕິບັດມີຄວາມຊຸກຊ້ຳ ຂາດຄວາມເອົາໃຈໃສ່ຕໍ່ການສ້າງຢ່າງເປັນລະບົບຕໍ່ເນື່ອງ, ການສະຫຼຸບຕີລາຄາຢູ່ບາງບ່ອນຍັງບໍ່ທັນຈະແຈ້ງແທດຕົວຈິງ, ແລ່ນນຳດ້ານຈຳນວນ ບໍ່ເນັ້ນເຖິງມາດຕະຖານ ແລະ ຄຸນນະພາບ ຈຶ່ງເຮັດໃຫ້ການປະຕິບັດພາລະບົດບາດນຳພາຂອງໜ່ວຍພັກຢູ່ບາງບ່ອນຍັງບໍ່ທັນໄດ້ດີເທົ່າຄວນ.

ເພື່ອເຮັດໃຫ້ການຈັດຕັ້ງຮາກຖານພັກຢູ່ແຂວງຈຳປາສັກ ໄດ້ຮັບການປັບປຸງໃຫ້ມີຄຸນນະພາບ ແລະ ມີຄວາມໜັກແໜ້ນ, ເຂັ້ມແຂງ ຄະນະພັກທຸກຂັ້ນຄວນເອົາໃຈໃສ່ບາງດ້ານດັ່ງລຸ່ມນີ້:

ໜຶ່ງ, ຄະນະແຕ່ລະຂັ້ນ ຕ້ອງຍຶດໝັ້ນລັດທິມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອອັນດີງາມຂອງພັກເປັນພື້ນຖານແນວຄິດ, ດ້ວຍການຈັດຕັ້ງຮໍ່າຮຽນທິດສະດີມາກ-ເລນິນ, ແນວຄິດໄກສອນ ພົມວິຫານ, ມູນເຊື້ອອັນດີງາມຂອງພັກ ທັນເອົາມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມໃຫຍ່ຂອງອົງຄະນະພັກແຂວງ ຄັ້ງທີ VIII ແລະ ມະຕິກອງປະຊຸມຂັ້ນຂອງຕົນ, ກົດລະບຽບຂອງພັກ ສະໄໝທີ XI ໃຫ້ເຂົ້າສູ່ການຈັດຕັ້ງປະຕິບັດຕົວຈິງຢ່າງເລິກເຊິ່ງເຖິງຖອງ, ເຂັ້ມງວດ, ເດັດຂາດ ພ້ອມທັງທັນເປັນທິດທາງແຜນການຢູ່ແຕ່ລະຂົງເຂດວຽກງານ ແລະ ນຳພາ-ຊີ້ນຳຈັດຕັ້ງປະຕິບັດຢ່າງມີປະສິດທິຜົນສູງ.

**ສອງ,** ຄວນເພີ່ມທະວີການຍົກລະດັບຄວາມຮູ້ທາງດ້ານການເມືອງ ໃຫ້ຖັນແຖວສະມາຊິກພັກ-ພະນັກງານ ເພື່ອສ້າງ ແລະ ປັບປຸງທັດສະນະແນວຄິດຫຼັກໝັ້ນການເມືອງ, ທາດແທ້ຊົນຊັ້ນ,ຄວາມສາມາດນຳພາຂອງພັກ, ຄວາມຈົງຮັກພັກດີຕໍ່ພັກ, ຕໍ່ອຸດົມການສັງຄົມນິຍົມ; ເປັນເຈົ້າການປົກປ້ອງແນວທາງອຸດົມການຂອງພັກ, ຕອບຕ້ານສິ່ງຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນພາຍໃນໜ່ວຍພັກ ແລະ ສັງຄົມເອົາໃຈໃສ່ສຶກສາອົບຮົມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ມູນເຊື້ອອັນດີງາມຂອງພັກ,ແນໃສ່ສ້າງໃຫ້ພະນັກງານ ແລະ ປະຊາຊົນບັນດາເຜົ່າມີຄວາມຮັບຮູ້ເປັນເອກະພາບສູງກັບແນວທາງປ່ຽນແປງໃໝ່ຂອງພັກ ແລະ ຕື່ນຕົວປະຕິບັດແນວທາງນະໂຍບາຍຂອງພັກ-ລັດ ດ້ວຍຄວາມເປັນເຈົ້າການຢ່າງສະເໝີຕົ້ນສະເໝີປາຍ.

**ສາມ,** ເພີ່ມທະວີສຶກສາອົບຮົມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດທີ່ປອດໃສໃຫ້ແກ່ຖັນແຖວສະມາຊິກພັກ, ພະນັກງານ ແລະ ປະຊາຊົນບັນດາເຜົ່າ; ຕ້ານການເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດ; ຕ້ານແນວຄິດສວຍໂອກາດ, ສວຍໃຊ້ໜ້າທີ່ຕຳແໜ່ງ, ສໍ້ລາດບັງຫຼວງ, ຫຼິ້ນກິນຟຸມເຟືອຍ, ອາດຍາສິດ, ແນວຄິດຫຼາຍພັກຫຼາຍເຄົ້າ, ແນວຄິດຈຸ້ມເຈື້ອເຊື້ອສາຍ, ກຸ່ມກ້ອນ, ພັກພວກຢູ່ໃນການຈັດຕັ້ງພັກ, ການຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.

**ສີ່,** ເອົາໃຈປັບປຸງການຈັດຕັ້ງຮາກຖານພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ສ້າງໃຫ້ມີການ

ຫັນປ່ຽນຢ່າງຈະແຈ້ງ ໂດຍເນັ້ນໃສ່ການຍົກສູງຄຸນນະພາບການເຄື່ອນໄຫວຂອງແຕ່ລະປະເພດການຈັດຕັ້ງຮາກຖານພັກ, ຈັດຕັ້ງການສະຫຼຸບຕີລາຄາການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃນຮາກຖານພັກແຕ່ລະຂັ້ນ, ສຸມໃສ່ຊຸກຍູ້, ຕິດຕາມ, ກວດກາການປະຕິບັດແຜນການເຄື່ອນໄຫວຂອງໜ່ວຍພັກໃຫ້ເປັນປົກກະຕິຕໍ່ເນື່ອງທົ່ວເຖິງ ໃນທຸກຮາກຖານພັກ ໂດຍຖືເອົາກອງປະຊຸມດຳເນີນຊີວິດການເມືອງປະຈຳເດືອນເປັນການຕີລາຄາການເຄື່ອນໄຫວນຳພາວຽກງານຕົວຈິງ. ໃນນັ້ນ, ປີ 2023 ຕ້ອງສູ້ຊົນໃຫ້ໄດ້ປະເມີນສຳເລັດ 100% ຂອງໜ່ວຍພັກທີ່ຄົບອາຍຸການປະເມີນຜົນ ຕ້ອງສູ້ຊົນສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃຫ້ໄດ້ 97% ຂຶ້ນໄປ ແລະ ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນໃຫ້ໄດ້ 85-90%.

**ຫ້າ,** ເພີ່ມທະວີຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງຂອງຕົນ, ເຮັດວຽກໃຫ້ມີປະສິດທິພາບ, ໂປ່ງໃສ, ຮັບປະກັນຄວາມເປັນແບບຢ່າງນຳໜ້າ; ເອົາໃຈໃສ່ຍົກລະດັບຄວາມຮູ້ທາງດ້ານການເມືອງ, ແນວທາງນະໂຍບາຍຂອງພັກ; ຄົ້ນຄວ້າຮ່ຳຮຽນ, ປະຕິບັດກົດລະບຽບພັກ ແລະ ບັນດາຂໍ້ຫ້າມສຳລັບສະມາຊິກພັກ; ເອົາໃຈໃສ່ຍົກລະດັບຄວາມຮູ້ດ້ານວິຊາການ; ຕ້ານແນວຄິດອາດຍາສິດ, ຮັກສາເດີມ, ຫຼີກເວັ້ນທຸກການກະທຳທີ່ເປັນການສໍ້ລາດບັງຫຼວງ, ຕັ້ງໜ້າແກ້ໄຂຂໍ້ບົກຜ່ອງ ແລະ ສິ່ງຫຍໍ້ທໍ້ຕ່າງໆໃຫ້ໄດ້ຢ່າງທັນການ.

**ຫົກ,** ຄະນະພັກແຕ່ລະຂັ້ນຕ້ອງຢຶດໝັ້ນຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍແບບແຜນນຳພາທີ່ເປັນມູນເຊື້ອຂອງພັກເຮົາ, ເສີມຂະຫຍາຍປະຊາທິປະໄຕໃນໝູ່ຄະນະ, ຕົກລົງເປັນມະຕິ ແລະ ປະຕິບັດຕາມມະຕິ; ການເຮັດວຽກມີແຜນການ, ຕິດພັນກັບຮາກຖານ ແລະ ແທດເໝາະຕົວຈິງ; ມີການຕິດຕາມຊຸກຍູ້ການຈັດຕັ້ງການປະຕິບັດຢ່າງໃກ້ຊິດ ແລະ ສະຫຼຸບຖອດຖອນບົດຮຽນເປັນແຕ່ລະໄລຍະ, ດຳເນີນຊີວິດການເມືອງພາຍໃນພັກ ໃຫ້ເປັນປົກກະຕິຕາມລະບຽບພັກ, ປະຕິບັດລະບອບຕິຊົມຕົນເອງ ແລະ ຕິຊົມກັນໃຫ້ແຂງແຮງກວ່າເກົ່າ; ເປັນເຈົ້າການຕໍ່ສູ້ຕ້ານ ແລະ ສະກັດກັ້ນພະຍາດອາດຍາສິດ, ການເຮັດວຽກແບບຜິວເຜີນ, ຫ່າງເຫີນມະຫາຊົນ, ຂາດຄວາມຮັບຜິດຊອບ, ຕ້ານທັດສະນະແນວຄິດ ແລະ ການກະທຳທີ່ບໍ່ເຄົາລົບລະບຽບຂອງພັກ, ກົດໝາຍຂອງລັດ ແລະ ມະຕິ, ຄຳສັ່ງຕ່າງໆ.

**ເຈັດ,** ຄະນະພັກ, ໜ່ວຍພັກ, ສະມາຊິກພັກຄວນເປັນເຈົ້າການປະກອບສ່ວນທາງດ້ານເຫື່ອແຮງ ແລະ ສະຕິປັນຍາ ເຂົ້າໃນວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ມີຄວາມເປັນເອກະພາບສູງໃນການຈັດຕັ້ງປະຕິບັດຕໍ່ບັນດາແນວທາງຂອງພັກທີ່ວາງອອກໃນແຕ່ລະໄລຍະໃຫ້ໄດ້ຮັບຜົນເປັນຈິງ. ຄວນຍົກສູງຄວາມຮັບຜິດຊອບຂອງຕົນເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນໃນການຊີ້ນຳພາ-ນຳພາຕໍ່ການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານກໍ່ສ້າງພັກ ຕໍ່ອົງການເສນາທິການຂັ້ນຕົນຢ່າງໃກ້ຊິດ ແລະ ຖືເອົາວຽກງານດັ່ງກ່າວເປັນວຽກງານທີ່ສຳຄັນ ແລະ ເປັນວຽກງານຍຸດທະສາດຂອງພັກ; ເປັນເຈົ້າການປະຕິບັດພາລະບົດບາດ, ໜ້າທີ່, ຍົກສູງຄວາມຮັບຜິດຊອບອົງການເສນາທິການໃນການຄົ້ນຄວ້ານຳສະເໜີ ແລະ ຕິດຕາມ, ຊຸກຍູ້, ສະຫຼຸບລາຍງານໃນການຈັດຕັ້ງປະຕິບັດວຽກງານກໍ່ສ້າງພັກ ຢ່າງເປັນປົກກະຕິ.

**ແປດ,** ເພີ່ມທະວີວຽກງານກໍ່ສ້າງຮາກຖານພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຮັບປະກັນບົດບາດເປັນແກນນຳໃນລະບົບການເມືອງຢູ່ຮາກຖານ, ຍົກສູງຄວາມຮັບຜິດຊອບຕໍ່ການຈັດຕັ້ງປະຕິບັດແນວທາງຂອງພັກ ກໍຄືມະຕິຂອງຄະນະພັກຂັ້ນຕົນໃຫ້ປະກົດຜົນເປັນຈິງ ແລະ ເປັນເຈົ້າການກຳຈັດປັດ

ເປົ່າແກ້ໄຂ, ຂໍ້ຂາດຕົກບົກຜ່ອງ, ສ້າງຄວາມເປັນແບບຢ່າງນໍາໜ້າ ໃນການເຄົາລົບ ແລະ ປະຕິບັດລັດຖະທໍາມະນູນ, ກົດໝາຍ, ກົດລະບຽບຂອງພັກ, ຂໍ້ຫ້າມສໍາລັບສະມາຊິກພັກ ແລະ ລະບຽບການຕ່າງໆຂອງລັດ.

**ສັງລວມແລ້ວ:** ການປັບປຸງການຈັດຕັ້ງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ແມ່ນມີຄວາມຈໍາເປັນພາວະວິໄສ ເພື່ອເສີມສ້າງຄວາມເຊື່ອໝັ້ນໃຫ້ແກ່ມະຫາຊົນຕໍ່ກັບພັກ-ລັດ, ເພາະຮາກຖານພັກເປັນແກ່ນສານຂອງການນໍາພາຂອງຄະນະພັກແຕ່ລະຂັ້ນ, ແຕ່ລະຂະແໜງການໄດ້ຮັບການປັບປຸງ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ຢ່າງແທ້ຈິງ, ເຮັດໃຫ້ຮາກຖານພັກກາຍເປັນແກນນໍາໃນລະບົບການເມືອງນໍາພາເພື່ອຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ, ແຜນພັດທະນາພັດທະນາເສດຖະກິດຂອງລັດຖະບານວາງອອກໃນແຕ່ລະໄລຍະໃຫ້ບັນລຸຕາມຈຸດໝາຍທີ່ກໍານົດໄວ້, ຄະນະພັກແຕ່ລະຂັ້ນ ແລະ ສະມາຊິກພັກທຸກສະຫາຍ ຕ້ອງຮັກສາຄວາມເປັນແບບຢ່າງນໍາໜ້າ, ຮັບປະກັນເຮັດໃຫ້ການນໍາພາຂອງພັກຕອບສະໜອງໄດ້ກັບການເລັ່ງທວງຂອງການພັດທະນາປະເທດຊາດໃນເງື່ອນໄຂປະຈຸບັນ, ບົນພື້ນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຕາມ 5 ດ້ານຄື: ດ້ານການເມືອງ, ດ້ານແນວຄິດ, ດ້ານການຈັດຕັ້ງ ແລະ ດ້ານການນໍາພາປະຕິບັດໜ້າທີ່ການເມືອງໃຫ້ມີປະສິດທິພາບ, ປະສິດທິຜົນແນໃສ່ຮັບປະກັນໃຫ້ພັກເຮົາສືບຕໍ່ຮັກສາໄດ້ບົດບາດ ແລະ ຄວາມສາມາດກໍາອໍານາດ, ນໍາພາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕາມຈຸດໝາຍສັງຄົມນິຍົມ...ຯ

# ແຂວງຫຼວງນໍ້າທາ ເອົາໃຈໃສ່ວຽກງານແຂ່ງຂັນ...

ຕໍ່ຈາກໜ້າ 16

ພາບເງື່ອນໄຂຈຸດພິເສດຂອງແຕ່ລະພາກສ່ວນ, ແຕ່ລະຂົງເຂດ ຄະນະພັກ, ອົງການປົກຄອງ , ອົງການເສນາທິການແຕ່ລະແຕ່ລະຂັ້ນ ຕ້ອງຍົກສູງຄວາມເປັນເຈົ້າການໃນການຈັດຕັ້ງຜັນຂະຫຍາຍວຽກງານ ແຂ່ງຂັນ-ຍ້ອງຍໍໃຫ້ເປັນລະບົບຄົບຊຸດ ທັນເປັນແຜນງານ, ແຜນການຂອງຕົນ ເພື່ອໃຫ້ຖືກຕ້ອງ, ຊັດເຈນ ຮັບປະກັນໄດ້ທາງດ້ານຄຸນນະພາບ ທັງເປັນການຫຼີກລ້ຽງທາງສຽງຕາມມາພ້ອມກັນນັ້ນ, ກໍ່ຕ້ອງຕອບສະໜອງງົບປະມານທີ່ພຽງພໍເຮັດໃຫ້ວຽກງານໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບສອດຄ່ອງກັບສະພາບເງື່ອນໄຂປະຈຸບັນ.

**ສັງລວມແລ້ວ,** ວຽກງານແຂ່ງຂັນ-ຍ້ອງຍໍ ແມ່ນວຽກງານໜຶ່ງທີ່ມີຄວາມໝາຍສໍາຄັນ ໃຫ້ແກ່ການພັດທະນາປະເທດຊາດເຮົາ ແລະ ເປັນວຽກງານໜຶ່ງທີ່ຂາດບໍ່ໄດ້ ໃນການຄົງຕົວ ແລະ ຂະຫຍາຍຕົວຂອງສັງຄົມຕ້ອງໄດ້ມີການແຂ່ງຂັນກັນ ບົນພື້ນຖານຄວາມຖືກຕ້ອງເພື່ອບັນລຸຈຸດໝາຍທີ່ການຈັດຕັ້ງທີ່ກໍານົດໄວ້ ເພື່ອເຫັນໄດ້ສິ່ງທີ່ກ້າວໜ້າ ແລະ ທັນສະໄໝກວ່າເກົ່າ ແຂ່ງຂັນກັນສ້າງຜົນງານ ແນໃສ່ເຮັດສໍາເລັດວຽກງານຕາມການມອບໝາຍ ແລະ ມີປະສິດທິຜົນສູງ, ມີແບບແຜນການດໍາລົງຊີວິດ ທີ່ປອດໃສຂາວສະອາດ, ມີການຝຶກຝົນຫຼໍ່ຫຼອມຕົນເອງ, ດຸໝັ່ນຄົ້ນຄວ້າຮໍ່າຮຽນບໍາລຸງຍົກລະດັບຢ່າງຕໍ່ເນື່ອງ, ມີສະຕິຕໍ່ການຈັດຕັ້ງ, ປະຕິບັດລະບຽບວິໄນ, ເຄົາລົບກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ. ທັງໝົດນັ້ນແມ່ນເພື່ອເຮັດໃຫ້ປະເທດຊາດເຂັ້ມແຂງ, ປະຊາຊົນຮັ່ງມີຜາສຸກ, ສັງຄົມມີປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ...ຯ

# ເມືອງແບງ ແບບຢ່າງໃນການແກ້ໄຂ ບັນຫາຢາເສບຕິດ

(ລາງວັນຮອງຊະນະເລີດແຂ່ງຂັນຂີດຂຽນ ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງ ວາລະສານກໍ່ສ້າງພັກ ຄົບຮອບ 30 ປີ)

ໂດຍ: ເຂີຍເມືອງຊໍາ

ດັ່ງທີ່ຮູ້ແລ້ວວ່າ ຢາເສບຕິດເປັນບັນຫາໃຫຍ່ທີ່ບັນດາປະເທດຕ່າງໆກໍ່ໃຫ້ຄວາມສໍາຄັນ ແລະ ເອົາໃຈໃສ່ຮ່ວມມືກັນຕ້ານ, ສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂ; ອົງການສະຫະປະຊາຊາດໄດ້ກໍານົດການກະທໍາຜິດກ່ຽວກັບຢາເສບຕິດ ເປັນໜຶ່ງໃນບັນດາອາດຊະຍາກໍາສາກົນ. ສໍາລັບຢູ່ ສປປ ລາວເຮົາ ພວມປະເຊີນກັບໄພຂົ່ມຂູ່ຈາກບັນຫາຢາເສບຕິດ ເຊິ່ງໄດ້ແຜ່ລະບາດໄປທົ່ວທຸກບ່ອນນັບທັງຕົວເມືອງ ແລະ ຊົນນະບົດເຂດຫ່າງໄກສອກຫຼີກໃນລະດັບທີ່ແຕກຕ່າງກັນ; ບັນຫາຢາເສບຕິດໄດ້ກາຍເປັນໜຶ່ງໃນບັນດາປະກົດການຫຍໍ້ທໍ້ທາງສັງຄົມ, ການລະບາດຂອງຢາເສບຕິດ ໄດ້ເປັນໜໍ່ແໜງ ແລະ ເປັນສາເຫດຕົ້ນຕໍຂອງການເກີດຄວາມຮຸນແຮງ ແລະ ສິ່ງຫຍໍ້ທໍ້ຕ່າງໆໃນສັງຄົມ, ເປັນໄພອັນຕະລາຍ ແລະ ມີຄວາມສ່ຽງສູງຕໍ່ຄວາມໝັ້ນຄົງຂອງປະເທດຊາດ ສິ່ງຜົນກະທົບໂດຍກົງຕໍ່ການພັດທະນາເສດຖະກິດ-ສັງຄົມ, ຕໍ່ສຸຂະພາບຂອງປະຊາຊົນ ໂດຍສະເພາະໄດ້ເບື່ອເມົາຊາວໜຸ່ມ, ເຍົາວະຊົນ ທີ່ເປັນກໍາລັງແຮງງານ, ເປັນຜູ້ສືບທອດພາລະກິດ ແລະ ອະນາຄົດຂອງປະເທດຊາດ.

ພັກ-ລັດເຮົາ ຍາມໃດກໍ່ໄດ້ຖືສໍາຄັນ ແລະ ເອົາໃຈໃສ່ແກ້ໄຂບັນຫາຢາເສບຕິດ, ຖືບັນຫາຢາເສບຕິດ ເປັນມະຫັນຕະໄພຮ້າຍແຮງທີ່ປຽບເໝືອນ **"ມະເຮັງຮ້າຍທາງສັງຄົມ"** ເຊິ່ງແມ່ນບໍ່ເກີດຂອງໄພສັງຄົມຕ່າງໆ, ເປັນຕົ້ນເຫດຂອງຄວາມຫາຍະນະທາງສັງຄົມ. ຍ້ອນເຫັນໄດ້ໄພອັນຕະລາຍ ແລະ ການເລັ່ງທວງໃຫ້ແກ້ໄຂບັນຫາຢາເສບຕິດ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XI ຂອງພັກ ໄດ້ກໍານົດວ່າ: "ຕ້ອງຍົກລະດັບການສະກັດກັ້ນ ແລະ ແກ້ໄຂຜົນຮ້າຍຈາກບັນຫາຢາເສບຕິດໃຫ້ເປັນໜ້າທີ່ຕົ້ນຕໍທາງດ້ານສັງຄົມ ແລະ ເປັນສ່ວນໜຶ່ງໃນວາລະແຫ່ງຊາດ ເຊິ່ງຕ້ອງປຸກລະດົມການເຂົ້າຮ່ວມຂອງທົ່ວສັງຄົມໃຫ້ແຂງແຮງ, ຕໍ່ເນື່ອງ ແລະ ເຮັດໃຫ້ 70-80% ຂອງບ້ານທົ່ວປະເທດປອດຢາເສບຕິດຢ່າງແທ້ຈິງ". ນັ້ນແມ່ນຄາດໝາຍໃຫຍ່ອັນໜຶ່ງ, ທັງເປັນຄວາມຮັບຜິດຊອບການເມືອງຂອງພັກ-ລັດ ກໍ່ຄືໃນທົ່ວສັງຄົມ ເພື່ອແກ້ໄຂບັນຫາຢາເສບຕິດໃຫ້ຫຼຸດໜ້ອຍຖອຍລົງ ແລະ ກ້າວໄປເຖິງກໍາຈັດໃຫ້ໝົດສິ້ນໄປເປັນກ້າວໆ ແລະ ກອງປະຊຸມຄົບຄະນະສະໄໝວິສາມັນ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ເຫັນດີເປັນເອກະພາບ ແລະ ມີຄວາມຕັດສິນໃຈສູງມອບໃຫ້ລັດຖະບານຍົກລະດັບການແກ້ໄຂບັນຫາຢາເສບຕິດເປັນວາລະແຫ່ງຊາດ ໂດຍໃຫ້ຖືເປັນແຜນວຽກບູລິມະສິດສໍາຄັນໜຶ່ງຂອງຊາດ, ເປັນພັນທະໜ້າທີ່, ຄວາມຮັບຜິດຊອບ ແລະ ເປັນ **"ພາລະກິດທົ່ວປວງຊົນ"** ເຊິ່ງພັກ-ລັດເປັນແກນກາງໃນການນໍາພາ-ຊີ້ນໍາເພື່ອຂັບເຄື່ອນການແກ້ໄຂ ຢ່າງມີຈຸດສຸມ ແລະ ຕ້ອງແກ້ໄຂຢ່າງເປັນລະບົບ, ເປັນຂະບວນການຕົວຈິງໃນທົ່ວສັງຄົມ. ນອກຈາກນັ້ນ, ກົມການເມືອງສູນກາງພັກໄດ້

ອອກຄຳສັ່ງ ເລກທີ 02/ກມສພ, ລົງວັນທີ 26 ກໍລະກົດ 2021 ວ່າດ້ວຍເພີ່ມທະວີການນຳພາ-ຊີ້ນຳຂອງຄະນະພັກແຕ່ລະຂັ້ນຕໍ່ການສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ.

ເມືອງແບງ ແຂວງອຸດົມໄຊ ກໍ່ເປັນເມືອງໜຶ່ງທີ່ຄະນະພັກເມືອງໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນກ່ຽວກັບການແກ້ໄຂບັນຫາຢາເສບຕິດ ໂດຍໄດ້ຈັດກອງປະຊຸມຄະນະບໍລິຫານງານພັກເມືອງຂຶ້ນຢ່າງຮີບດ່ວນ ເພື່ອເຜີຍແຜ່ຄຳສັ່ງຂອງກົມການເມືອງສູນກາງພັກດັ່ງກ່າວ ເຊິ່ງພາຍຫຼັງສຳເລັດກອງປະຊຸມເຜີຍແຜ່ ແລະ ຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນນັ້ນແລ້ວ ຄະນະບໍລິຫານງານພັກເມືອງແບງກໍ່ໄດ້ຫັນບັນດານິຕິກຳທີ່ກ່ຽວຂ້ອງມາຈັດຕັ້ງຜັນຂະຫຍາຍໂດຍການຫັນມາເປັນນິຕິກຳຂອງເມືອງເປັນຕົ້ນ: ອອກຂໍ້ຕົກລົງຂອງທ່ານເຈົ້າເມືອງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຜັນຂະຫຍາຍຈັດຕັ້ງປະຕິບັດ; ພ້ອມທັງມອບໃຫ້ຄະນະຮັບຜິດຊອບຫັນເປັນແຜນດຳເນີນງານລະອຽດເພື່ອໃຫ້ແທດເໝາະກັບສະພາບຈຸດພິເສດຂອງເມືອງ, ຫຼັງຈາກກະກຽມສຳເລັດແລ້ວກໍ່ໄດ້ນຳເອົາເຂົ້າຜ່ານກອງປະຊຸມອົງການປົກຄອງເມືອງ ແລະ ກອງປະຊຸມຄະນະບໍລິຫານງານພັກເມືອງເພື່ອຮັບຮອງ ຈາກນັ້ນ, ໄດ້ດຳເນີນກອງປະຊຸມເຊື່ອມຊຶມຜັນຂະຫຍາຍຢູ່ຂັ້ນເມືອງ ແລະ ໄດ້ມອບໃຫ້ກຳມະການພັກເມືອງ, ພະນັກງານຫຼັກແຫຼ່ງຂອງເມືອງລົງຈັດຕັ້ງເຊື່ອມຊຶມ, ແນະນຳ ແລະ ມອບໝາຍຄວາມຮັບຜິດຊອບໃຫ້ໜ່ວຍພັກ, ສະມາຊິກພັກຜັນຂະຫຍາຍບັນດານິຕິກຳທີ່ຕິດພັນກັບ 2 ວາລະແຫ່ງຊາດໃຫ້ພໍ່ແມ່ປະຊາຊົນໃນທົ່ວເມືອງຜູ້ທີ່ມີອາຍຸ 18 ປີຂຶ້ນໄປໃຫ້ຮັບຮູ້ ແລະ ເຂົ້າໃຈ.

ໃນທ້າຍປີ 2021 ເມືອງແບງ ແຂວງອຸດົມໄຊໄດ້ຂຶ້ນບັນຊີເປົ້າໝາຍທີ່ພົວພັນກັບຢາເສບຕິດທັງໝົດ: 1.555 ຄົນ, ຍິງ 76 ຄົນ ໃນນີ້ເປົ້າໝາຍຄ້າຂາຍຢາເສບຕິດລາຍໃຫຍ່ມີຈຳນວນ 10 ເປົ້າໝາຍ, ເປົ້າໝາຍຄ້າຂາຍຢາເສບຕິດລາຍກາງຈຳນວນ 12 ເປົ້າໝາຍ, ເປົ້າໝາຍຄ້າຂາຍລາຍຍ່ອຍຈຳນວນ 200 ເປົ້າໝາຍ, ຍິງ 6 ເປົ້າໝາຍ, ເປົ້າໝາຍເສບຢາເສບຕິດຈຳນວນ 1.333 ເປົ້າໝາຍ, ຍິງ 70 ເປົ້າໝາຍ; ພ້ອມທັງເຮັດບົດບັນທຶກວ່າດ້ວຍການຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ກັບອົງການປົກຄອງບ້ານໃນທົ່ວເມືອງ (57 ບ້ານ), ເຮັດບົດບັນທຶກກັບຄອບຄົວຈຳນວນ 7.921 ຄອບຄົວ, ເຮັດບົດບັນທຶກກັບບຸກຄົນທີ່ຕິດຢາເສບຕິດໄດ້ ຈຳນວນ 1.443 ຄົນ ຍິງ 76 ຄົນ; ພາຍຫຼັງເກັບກຳຂໍ້ມູນຂຶ້ນບັນຊີເປົ້າໝາຍຢ່າງລະອຽດສຳເລັດ ຄະນະພັກເມືອງໄດ້ຕົກລົງເຫັນດີເປັນເອກະພາບຫັນແບບເຮັດທົ່ວໄປມາປະຕິບັດລົງເລິກເປັນບ້ານໂດຍອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຜິດຊອບນຳພາ-ຊີ້ນຳຈັດຕັ້ງປະຕິບັດແຕ່ລະຈຸ ແຕ່ລະບ້ານເຊິ່ງປະກອບມີເຈົ້າໜ້າທີ່ ປກຊ-ປກສ ແລະ ຂະແໜງການທີ່ກ່ຽວຂ້ອງຂອງເມືອງ ລົງເຮັດທົດລອງຢູ່ 3 ບ້ານ, ບ້ານລະ 3 ວັນຄື: ບ້ານແບງຫຼວງ, ບ້ານໂພໄຊ ແລະ ບ້ານນາຫ້ວຍ; ດ້ວຍການແຕ່ງຕັ້ງທີມງານລົງສົມທົບບ້ານເຕົ້າໂຮມປະຊາຊົນພາຍໃນບ້ານເຜີຍແຜ່ບັນດາເອກະສານຕ່າງໆ, ແຈກຢາຍບັດຂາວໃຫ້ປະຊາຊົນຂຽນລາຍຊື່ເປົ້າໝາຍຕ່າງໆ, ສັງລວມ ອອກເປັນແຕ່ລະເປົ້າໝາຍແລ້ວປຶກສາຫາລືກັບເຖົ້າແກ່, ອົງການປົກຄອງບ້ານວ່າເປົ້າໝາຍໃດຈະສົ່ງໄປບຳບັດດັດສ້າງຢູ່ຂັ້ນເມືອງ, ເປົ້າໝາຍໃດຈະສຶກສາອົບຮົມເຮັດບົດບັນທຶກກ່າວເຕືອນຢູ່ຂັ້ນບ້ານ, ສົມທົບກັບບ້ານທ້ອນໂຮມບັນດາວັດຖຸເຄື່ອງຂອງກາງປະເພດຕ່າງໆ ພ້ອມທັງແກ້ໄຂໃນຮູບການກ່າວເຕືອນສຶກສາອົບຮົມ; ນອກຈາກນັ້ນ, ໄດ້ສົມທົບກັບຫົວໜ້າໜ່ວຍ, ອົງການຈັດຕັ້ງຂອງບ້ານພ້ອມກັນປະເມີນຄອບຄົວ-ບ້ານເຮັດວຽກປ້ອງກັນຄວາມສະຫງົບດີ ແລະ ຄອບຄົວ-ບ້ານປອດຢາເສບຕິດ ແລ້ວ

ຈຶ່ງມາເຮັດບົດສະຫຼຸບການປະເມີນ; ຄອບຄົວໃດ, ບ້ານໃດປະເມີນໄດ້ຕາມມາດຕະຖານເງື່ອນໄຂ ກໍ່ໄດ້ມອບໃບຢັ້ງຢືນຕາມລຳດັບດັ່ງນີ້: ໃບຢັ້ງຢືນຂອງຄອບຄົວແມ່ນສະເໜີທ່ານເຈົ້າເມືອງເປັນຜູ້ພິຈາລະນາອະນຸມັດ ແລະ ໃບຢັ້ງຢືນຂອງບ້ານແມ່ນສະເໜີທ່ານເຈົ້າແຂວງເປັນຜູ້ພິຈາລະນາອະນຸມັດ. ຈາກນັ້ນຈຶ່ງຈັດພິທີມອບ-ຮັບຢ່າງເປັນທາງການ; ຫຼັງຈາກສຳເລັດການເຮັດທົດລອງແລ້ວ ກໍ່ໄດ້ຈັດກອງປະຊຸມສະຫຼຸບຕີລາຄາຖອດຖອນບົດຮຽນ ເພື່ອຊອກໃຫ້ເຫັນດ້ານດີ, ດ້ານອ່ອນ-ຂໍ້ຄົງຄ້າງ ທີ່ຈະຕ້ອງໄດ້ປັບປຸງແກ້ໄຂໃນຕໍ່ໜ້າ ແລະ ໄດ້ລົງຈັດຕັ້ງປະຕິບັດລະອຽດເປັນແຕ່ລະບ້ານ ໂດຍຖືເອົາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕິດພັນກັບການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ, ການປະເມີນຄອບຄົວ ແລະ ບ້ານເຮັດວຽກງານປ້ອງກັນຄວາມສະຫງົບດີ, ປະເມີນຄອບຄົວ ແລະ ບ້ານປອດຢາເສບຕິດ ໂດຍເລີ່ມຈາກບ້ານທີ່ມີຄວາມຫຍຸ້ງຍາກຫຼາຍທີ່ສຸດກ່ອນ.

ຜ່ານການຈັດຕັ້ງປະຕິບັດມາຮອດທ້າຍເດືອນພຶດສະພາ 2023 ສາມາດຈັດຕັ້ງປະຕິບັດສຳເລັດແລ້ວ 53 ບ້ານເທົ່າກັບ 92,98% ຂອງຈຳນວນບ້ານທັງໝົດທົ່ວເມືອງ (57 ບ້ານ) ສາມາດກວດກາພົບເຫັນບັນດາກໍລະນີ, ປະເພດເປົ້າໝາຍຕ່າງໆ 25 ເລື່ອງ ມີເປົ້າໝາຍຈຳນວນ 2.249 ເປົ້າໝາຍ, ຍິງ 109 ເປົ້າໝາຍ ແລະ ມີຈຳນວນ 2.472 ກໍລະນີເຊັ່ນ: ເປົ້າໝາຍຄ້າ-ຂາຍສິ່ງເສບຕິດ 210 ຄົນ, ຍິງ 14 ຄົນ; ເປົ້າໝາຍຄ້າ-ຂາຍ, ເສບສິ່ງເສບຕິດ 42 ຄົນ, ຍິງ 03 ຄົນ; ເປົ້າໝາຍຜະລິດ, ຄ້າ-ຂາຍ, ເສບສິ່ງເສບຕິດ 01 ຄົນ; ເປົ້າໝາຍເສບສິ່ງເສບຕິດ 952 ຄົນ, ຍິງ 73 ຄົນ; ເປົ້າໝາຍເສບຝິ່ນ 1 ຄົນ; ເປົ້າໝາຍ ມີອາວຸດລ່າເນື້ອ 414 ຄົນ; ເປົ້າໝາຍ ມີອາວຸດເສິກ 02 ຄົນ; ເປົ້າໝາຍ ມີໝໍ້ຊ່ອດປາ 170 ຄົນ; ເປົ້າໝາຍ ມີຈັກສະເຕັນ 102 ຄົນ; ເປົ້າໝາຍ ຖາງປ່າແກ່ 27 ຄົນ, ຍິງ 05 ຄົນ; ເປົ້າໝາຍ ລັກຊັບ 130 ຄົນ, ຍິງ 02 ຄົນ; ເປົ້າໝາຍ ຜະລິດປືນແກັບ, ປືນລົມແລະໝໍ້ຊ່ອດ 09 ຄົນ; ເປົ້າໝາຍຊື້-ຂາຍໄມ້ເຖື່ອນ 04 ຄົນ; ເປົ້າໝາຍຂີ່ລົດໃຊ້ສຽງດັງ 01 ຄົນ; ເປົ້າໝາຍມີລະເບີດ 03 ຄົນ; ເປົ້າໝາຍ ໃສ່ຮ້າຍປ້າຍສີຜູ້ອື່ນ 01 ຄົນ; ເປົ້າໝາຍ ໂຄສະນາຊວນເຊື່ອສາສະໜາ 02 ຄົນ; ເປົ້າໝາຍ ຄອບຄົວບໍ່ສະຫງົບ 75 ຄົນ; ເປົ້າໝາຍ ຂັດມະຕິ, ຄຳສັ່ງ ຂອງອົງການປົກຄອງບ້ານ 57 ຄົນ ຍິງ 05 ຄົນ; ເປົ້າໝາຍ ຫຼິ້ນການພະນັນຕ້ອງຫ້າມ 18 ຄົນ, ຍິງ 06 ຄົນ; ເປົ້າໝາຍສ້າງຄວາມບໍ່ສະຫງົບພາຍໃນບ້ານ 07 ຄົນ ຍິງ 01 ຄົນ; ເປົ້າໝາຍຕັດໄມ້ຫ່ວງຫ້າມ 16 ຄົນ; ເປົ້າໝາຍຊື້ຊັບຜິດກົດໝາຍ 01 ຄົນ; ເປົ້າໝານໝິ່ນປະມາດຄົນອື່ນ 01 ຄົນ ແລະ ເປົ້າໝາຍສໍ້ໂກງຊັບ 3 ຄົນ. ໃນຈຳນວນເປົ້າໝາຍຕ່າງໆເຫຼົ່ານີ້ ໄດ້ນຳຕົວເປົ້າໝາຍທີ່ພົວພັນການເສບຢາເສບຕິດທີ່ຮ້າຍແຮງເຂົ້າມາບຳບັດ-ດັດສ້າງແລ້ວຈຳນວນ 427 ຄົນ ຍິງ 18 ຄົນ, ສ່ວນເປົ້າໝາຍທີ່ເສບເບົາບາງ ແລະ ເປົ້າໝາຍປະເພດອື່ນໆແມ່ນໄດ້ເຮັດບົດບັນທຶກໄວ້ ເພື່ອເປັນເປົ້າໝາຍຄຸ້ມຄອງຕໍ່ໄປ; ນອກນັ້ນ, ສາມາດເກັບກຳ ແລະ ທ້ອນໂຮມອຸປະກອນຕ່າງໆທີ່ນຳໃຊ້ບໍ່ຖືກຕ້ອງຄື: ອາວຸດລ່າເນື້ອຈຳນວນ 324 ກະບອກໃນນີ້ປືນແກັບ 278 ກະບອກ, ປືນລົມ 38 ກະບອກ, ປືນທຽນ 7 ກະບອກ, ປືນບວດ 1 ກະບອກ; ໝໍ້ຊອດປາ 107 ເຄື່ອງ, ຈັກສະເຕັນ 62 ເຄື່ອງ, ມາຮອດປະຈຸບັນໄດ້ສຶກສາອົບຮົມ ແລະ ປ່ອຍຕົວຜູ້ທີ່ຮອດກຳນົດເວລາອອກກັບບ້ານຈຳນວນ 366 ຄົນ, ຍິງ 17 ຄົນ, ຜູ້ບຳບັດ-ດັດສ້າງເສຍຊີວິດ 3 ຄົນ ປະຈຸບັນກຳລັງບຳບັດ-ດັດສ້າງ ແລະ ປິ່ນປົວຈຳນວນ 58 ຄົນ, ຍິງ1 ຄົນ; ນອກຈາກລົງຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດແລ້ວ ຍັງລົງສຳຫຼວດ, ເກັບກຳຂໍ້ມູນ ແລະ ຄົ້ນຫາພື້ນທີ່ ທີ່ມີການລັກລອບປູກຝິ່ນ ພ້ອມທັງທຳລາຍສຳເລັດ 04 ເຂດ ຄື: ເຂດ ບ້ານນາປາ, ເຂດໂພນໄຊ, ເຂດບ້ານນາໂຮມ ແລະ ເຂດເທດສະບານມີ 36 ຕອນ, ມີເນື້ອທີ່ 29.288 ຕາແມັດ.

ຜ່ານການຈັດຕັ້ງປະຕິບັດສາມາດປະເມີນຄອບ

ຄົວ-ບ້ານທີ່ເຮັດວຽກງານປ້ອງກັນຄວາມສະຫງົບດີ ຈໍານວນ 56 ບ້ານ ໃນນີ້ປະເມີນໄດ້ຕາມມາດຕະຖານ ເງື່ອນໄຂ ມີ 22 ບ້ານ ແລະ ຄອບຄົວທີ່ເຮັດວຽກງານປ້ອງກັນຄວາມສະຫງົບດີທີ່ໄດ້ຕາມມາດຖານເງື່ອນໄຂ ມີ 6.222 ຄອບຄົວ. ໄດ້ຈັດພິທີມອບ-ຮັບໃບຢັ້ງຢືນ ຄອບຄົວ ແລະ ບ້ານທີ່ເຮັດວຽກງານປ້ອງກັນຄວາມສະຫງົບດີແລ້ວຈໍານວນ 21 ບ້ານ ແລະ ຄອບຄົວທີ່ເຮັດວຽກງານປ້ອງກັນຄວາມສະຫງົບດີຈໍານວນ 4.547 ຄອບຄົວ ແລະ ປະເມີນຄອບຄົວ ແລະ ບ້ານທີ່ປອດຢາເສບຕິດຄືນໃໝ່ ຈໍານວນ 53 ບ້ານໃນນີ້ປະເມີນໄດ້ຕາມມາດຖານເງື່ອນໄຂມີ 19 ບ້ານ ແລະ ຄອບຄົວທີ່ປອດຢາເສບຕິດ ໄດ້ຕາມມາດຖານເງື່ອນໄຂ ມີ 6.228 ຄອບຄົວ, ໄດ້ມອບໃບຢັ້ງຢືນແລ້ວ ຈໍານວນ 11 ບ້ານ ແລະ ຈໍານວນ 2.361 ຄອບຄົວ. ນອກຈາກນີ້ຍັງໄດ້ມອບໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງເປັນເຈົ້າການລົງສົມທົບອໍານວຍການໂຮງຮຽນແຕ່ລະແຫ່ງປະເມີນຄືນບັນດາໂຮງຮຽນທີ່ປອດຢາເສບຕິດ 03 ສະໄໝຊ້ອນ ແລະ 05 ສະໄໝຊ້ອນປະຈໍາປີ 2022 ໄດ້ທັງໝົດ 36 ໂຮງຮຽນ ແລະ ໄດ້ລົງປະກາດມອບໃບຢັ້ງຢືນສໍາເລັດ.

ແຕ່ຄຽງຄູ່ກັບຜົນງານທີ່ຍາດມາໄດ້ນັ້ນການຈັດຕັ້ງປະຕິບັດຕົວຈິງ ກໍ່ຍັງມີຂໍ້ຄົງຄ້າງ ແລະ ຫຍຸ້ງຍາກຈໍານວນໜຶ່ງທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂເປັນຕົ້ນ: ອົງການທີ່ກ່ຽວຂ້ອງຈໍານວນໜຶ່ງຍັງບໍ່ທັນເອົາໃຈໃສ່ຕໍ່ໜ້າທີ່ຄວາມຮັບຜິດຊອບຂອງຕົນເທົ່າທີ່ຄວນ ສ່ວນຫຼາຍຍັງປະໃຫ້ແຕ່ເຈົ້າໜ້າທີ່ຕໍາຫຼວດເປັນຜູ້ຮັບຜິດຊອບ, ການຮ່ວມໄມ້ຮ່ວມມືຂອງອົງການທີ່ກ່ຽວຂ້ອງ, ອົງການປົກຄອງບ້ານ, ພໍ່ແມ່ປະຊາຊົນຢູ່ບາງບ້ານຍັງມີໜ້ອຍ; ພະນັກງານບາງສະຫາຍຍັງຂາດປະສົບການ ແລະ ຄວາມເອົາໃຈໃສ່ຕໍ່ໜ້າທີ່ວຽກງານບໍ່ທັນສູງເທົ່າທີ່ຄວນ; ພາກສ່ວນທີ່ເຂົ້າມາບໍາບັດ-ດັດສ້າງ, ປິ່ນປົວທີ່ອອກໄປແລ້ວຈໍານວນໜຶ່ງຍັງສືບຕໍ່ເຄື່ອນໄຫວພົວພັນກັບສິ່ງເສບຕິດບໍ່ ມີການປ່ຽນແປງ ເນື່ອງຈາກພໍ່ແມ່ຜູ້ປົກຄອງມີຄວາມຮັກຕໍ່ລູກຫຼານຫຼາຍເມື່ອເຫັນວ່າເຈົ້າໜ້າທີ່ເອົາລູກຫຼານຂອງຕົນມາບໍາບັດ-ດັດສ້າງແລ້ວ ແມ່ນພາກັນຂຽນຄໍາຮ້ອງ ແລະ ເຂົ້າມາຮ້ອງຂໍເປັນຈໍານວນຫຼວງຫຼາຍ ແລະ ດ້ານງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈໍາເປັນຈໍານວນໜຶ່ງຍັງຈໍາກັດ.

ກອງປະຊຸມຄົບຄະນະກາງສະໄໝ ທີ IX ຂອງຄະນະບໍລິຫານງານພັກແຂວງອຸດົມໄຊ ໃນທ້າຍເດືອນພຶດສະພາ 2023 ສະຫາຍ ສົມຄິດ ກັນສະໜິດ ກໍາມະການພັກແຂວງ ເລຂາຄະນະບໍລິຫານງານພັກເມືອງເຈົ້າເມືອງງແບງ ໄດ້ຢືນຢັນວ່າ: ຍ້ອນຄວາມເອົາໃຈໃສ່ນໍາພາ-ຊີ້ນໍາຂອງພັກເວົ້າລວມ, ຂອງຄະນະພັກແຕ່ລະຂັ້ນພາຍໃນເມືອງແບງ ເວົ້າສະເພາະ ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດໃນການແກ້ໄຂບັນຫາຢາເສບຕິດໄດ້ເຮັດໃຫ້ປະກົດການຫຍໍ້ທໍ້ຂອງສັງຄົມ, ສະພາບການມົ້ວສຸມຢາເສບຕິດຢູ່ແຕ່ລະບ້ານຫຼຸດໜ້ອຍຖອຍລົງ, ພາກສ່ວນທີ່ຕິດເສບຢາເສບຕິດຈໍານວນໜຶ່ງມີຄວາມຕື່ນຕົວຕັດຢາເສບຕິດດ້ວຍຕົນເອງຈົນສາມາດຟື້ນຟູສຸຂະພາບ ແລະ ອອກຈາກການຕົກເປັນທາດຂອງຢາເສບຕິດມາເປັນພົນລະເມືອງດີຂອງສັງຄົມ, ກຸ່ມຄົນບໍ່ດີທີ່ມີການເຄື່ອນໄຫວລັກລອບຂົນສົ່ງ ແລະ ຄ້າ-ຂາຍຢາເສບຕິດໄດ້ມີການຢຸດເຊົາຈໍານວນບໍ່ໜ້ອຍ ສາມາດເຮັດໃຫ້ລູກຫຼານຂອງພໍ່ແມ່ປະຊາຊົນຫຼາຍຄົນໄດ້ກັບກາຍມາເປັນພົນລະເມືອງດີ ເຮັດໃຫ້ສະພາບການພາຍໃນເມືອງມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີຂຶ້ນກວ່າເກົ່າ ເວົ້າໄດ້ວ່າບ່ອນໃດມີການນໍາພາຂອງພັກ, ຄະນະພັກມີຄວາມຮັບຜິດຊອບ ແລະ ເອົາໃຈໃສ່ ຢູ່ບ່ອນນັ້ນມີການພັດທະນາ, ມີຄວາມສະຫງົບ, ປະຊາຊົນກໍເຊື່ອໝັ້ນ ແລະ ເຄົາລົບນັບຖື; ທັງໝົດນັ້ນໄດ້ສະແດງໃຫ້ເຫັນເຖິງ ພັກນໍາພາ ປະຊາຮ່ວມໃຈ ຈຶ່ງຈະແກ້ໄຂໄດ້ບັນຫາຢາເສບຕິດ...ฯ

# ປັບປຸງວຽກງານກໍ່ສ້າງ-ບໍາລຸງພະນັກງານ ຢູ່ພະແນກສຶກສາທິການ ແລະ ກິລາ ແຂວງໄຊຍະບູລີ

ໂດຍ: ຂຸນທະວີ ບຸນທະວົງ

ພັກ ແລະ ລັດ ເວລາໃດກໍ່ຖືສໍາຄັນຕໍ່ກັບວຽກງານພະນັກງານ ໂດຍສະເພາະການກໍ່ສ້າງ-ບໍາລຸງພະນັກງານ ແມ່ນໜຶ່ງໃນບັນດາໜ້າທີ່ຍຸດທະສາດຕໍ່ກັບພາລະກິດປ່ຽນແປງໃໝ່ຂອງພັກ ແມ່ນວຽກທີ່ມີຄວາມໝາຍສໍາຄັນ ແລະ ຈໍາເປັນໃນການສ້າງຊັບພະຍາກອນມະນຸດ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນແຕ່ລະໄລຍະ. ເພາະວ່າພະນັກງານເປັນຜູ້ຕັດສິນຜົນໄດ້ຜົນເສຍໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບຂອງລັດທີ່ວາງອອກໃຫ້ປະກົດຜົນເປັນຈິງ. ຕ້ອງມີພະນັກງານທີ່ມີຄວາມຮູ້, ຄວາມສາມາດທາງດ້ານທິດສະດີ, ວິຊາສະເພາະທີ່ແນ່ນອນ, ມີຄວາມຮັບຮູ້, ເຂົ້າໃຈພາສາຕ່າງປະເທດໃດໜຶ່ງທີ່ແນ່ນອນ ແລະ ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດທີ່ໜັກແໜ້ນ ເພື່ອປະກອບສ່ວນໃນການພັດທະນາຂະແໜງການ ແລະ ນໍາພາ-ຊີ້ນໍາຈັດຕັ້ງປະຕິ ບັດແນວທາງຂອງພັກ. ສະນັ້ນ, ຄະນະພັກແຕ່ລະຂັ້ນ ຕ້ອງເພີ່ມທະວີການນໍາພາ-ຊີ້ນໍາການບໍາລຸງ-ສ້າງພະນັກງານທີ່ຢູ່ໃນສິດຄຸ້ມຄອງຂອງຕົນຕິດພັນກັບແຜນກໍານົດພະນັກງານ, ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຮຽກຮ້ອງຕ້ອງການໃນຂະແໜງການ ແລະ ທ້ອງຖິ່ນຕົນ; ຄົ້ນຄວ້າສັບຊ້ອນເປົ້າໝາຍໄປບໍາລຸງສ້າງບົນພື້ນຖານແຜນກໍານົດພະນັກງານທີ່ກໍານົດໄວ້, ມີການຄົ້ນຄວ້າຕົກລົງເປັນເອກະພາບພາຍໃນຄະນະພັກ ແລະ ຮັບປະກັນຖືກຕ້ອງຕາມມາດຕະຖານ, ເງື່ອນໄຂທີ່ກໍານົດໄວ້ ໂດຍເລັ່ງໃສ່ພະນັກງານຮຸ່ນກາງ, ຮຸ່ນໜຸ່ມ, ຊົນເຜົ່າ ແລະ ເພດຍິງ.

ພະແນກສຶກສາທິການ ແລະ ກິລາ ແຂວງໄຊຍະບູລີ ຍາມໃດກໍ່ໄດ້ເອົາໃຈໃສ່ຍົກສູງຄຸນນະພາບພະນັກງານ-ສະມາຊິກພັກ ດ້ວຍການກໍ່ສ້າງ-ບໍາລຸງພະນັກງານ ບໍ່ວ່າທາງດ້ານທິດສະດີການເມືອງ, ທາງດ້ານວິຊາສະເພາະ ແລະ ຂະບວນການເຄື່ອນໄຫວວຽກງານຕົວຈິງ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ໂດຍເລີ່ມຈາກການສຶກສາອົບຮົມການເມືອງ-ແນວຄິດພະນັກງານ ຖືເອົາວຽກງານດັ່ງກ່າວເປັນວຽກບູລິມະສິດສໍາຄັນອັນດັບທໍາອິດໃນການເຄື່ອນໄຫວນໍາພາ-ຊີ້ນໍາ ແລະ ສອດທ້ອຍໄປກັບທຸກວຽກງານສະແດງອອກໄດ້ຈັດຕັ້ງເຊື່ອມຊຶມມະຕິ, ຄໍາສັ່ງ, ນິຕິກໍາ ແລະ ເອກະສານຕ່າງໆ ເພື່ອໃຫ້ພະນັກງານ-ສະມາຊິກພັກມີຄວາມຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກຢ່າງເລິກເຊິ່ງ ສາມາດນໍາໄປຈັດຕັ້ງປະຕິບັດຕົວຈິງ ໃນຂົງເຂດທີ່ຕົນຮັບຜິດຊອບ, ໄປພ້ອມກັນນັ້ນ, ກໍ່ໄດ້ເອົາໃຈໃສ່ການບໍາລຸງ-ກໍ່ສ້າງພະນັກງານຢູ່ສະຖາບັນການສຶກສາທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານຄວາມເປັນເອກະພາບ

ຂອງຄະນະພັກ, ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ໃນການຄົ້ນຄວ້າ, ເລືອກເຟັ້ນໂດຍອີງໃສ່ແຜນກຳນົດພະນັກງານ, ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານຕົວຈິງ ຜູ້ທີ່ພົ້ນເດັ່ນໃນຂະບວນການ ແລະ ຖືກຕ້ອງຕາມມາດຕະຖານເງື່ອນໄຂໄປກໍ່ສ້າງ-ບຳລຸງ ໂດຍສະເພາະແມ່ນພະນັກງານຜູ້ທີ່ມີຄຸນທາດການເມືອງທີ່ໜັກແໜ້ນ, ຄຸນສົມບັດສິນທຳປະຕິວັດ, ຫ້າວຫັນຕໍ່ໜ້າທີ່ວຽກງານໄປຍົກລະດັບ.

ພະແນກສຶກສາທິການ ແລະ ກິລາແຂວງໄຊຍະບູລີ ແມ່ນການຈັດຕັ້ງໜຶ່ງ ທີ່ຂຶ້ນກັບການຊີ້ນຳໂດຍກົງຂອງກະຊວງສຶກສາທິການ ແລະ ກິລາ, ຈັດຕັ້ງ ແລະ ເຄື່ອນໄຫວ ຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ສະບັບເລກທີ 1441/ສສກ ລົງວັນທີ 19 ເມສາ 2022, ເປັນອີງການບໍລິຫານຕາມສາຍຕັ້ງ ໃນລະບົບບໍລິຫານ, ຄຸ້ມຄອງຂອງກະຊວງສຶກສາທິການ ແລະ ກິລາ ຊຶ່ງມີພາລະບົດບາດໃນການຜັນຂະຫຍາຍ, ວາງແຜນ, ຈັດຕັ້ງປະຕິບັດ, ຄຸ້ມຄອງ, ກວດກາ ແລະ ປະເມີນຜົນວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ, ມີໜ້າທີ່ໃນຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ, ທິດທາງແຜນການ ແລະ ຍຸດທະສາດຂອງກະຊວງສຶກສາ ແລະ ກິລາ ເພື່ອສ້າງເປັນແຜນພັດທະນາວຽກງານຂອງຕົນ; ສ້າງ, ປັບປຸງ ບັນດານິຕິກຳ, ລະບຽບການຕ່າງໆ ໃນການຄຸ້ມຄອງວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນແຂວງ, ໂຄສະນາເຜີຍແຜ່ ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການພັດທະນາການສຶກສາ, ສ້າງ, ພັດທະນາຫຼັກສູດທ້ອງຖິ່ນ, ອຸປະກອນການຮຽນ-ການສອນ, ຄຸ້ມຄອງບັນດາໂຮງຮຽນມັດທະຍົມປາຍ, ມັດທະຍົມສົມບູນ, ສູນ, ວິທະຍາໄລ ຫຼື ໜ່ວຍທຸລະກິດກິລາ ທີ່ຂຶ້ນກັບແຂວງ.

ປະຈຸບັນພະແນກສຶກສາທິການ ແລະ ກິລາແຂວງ ປະກອບມີ 14 ຂະແໜງ, 3 ສູນ, ມີພະນັກງານ-ລັດຖະກອນທັງໝົດ 94 ຄົນ, ຍິງ 46 ຄົນ, ໃນນັ້ນ ລະດັບວິຊາສະເພາະປະກອບມີ: ປະລິນຍາເອກ 1 ຄົນ, ປະລິນຍາໂທ 22 ຄົນ, ຍິງ 6 ຄົນ, ປະລິນຍາຕີ 41 ຄົນ, ຍິງ 18 ຄົນ, ຊັ້ນສູງ 28 ຄົນ, ຍິງ 21 ຄົນ, ຊັ້ນກາງ 4 ຄົນ, ຍິງ 2 ຄົນ; ລະດັບທິດສະດີ: ຂັ້ນສູງ 3 ສະຫາຍ, ຂັ້ນກາງ 7 ສະຫາຍ, ຍິງ 1 ສະຫາຍ, ຂັ້ນຕົ້ນ ມີ 20 ສະຫາຍ, ຍິງ 11 ສະຫາຍ. ຕະຫຼອດໄລຍະຜ່ານມາພະແນກສຶກສາທິການ ແລະ ກິລາ ແຂວງໄຊຍະບູລີ ໄດ້ເອົາໃຈໃສ່ກໍ່ສ້າງ-ບຳລຸງພະນັກງານຢ່າງເປັນເຈົ້າການ ແລະ ຖືເປັນວຽກງານແຖວໜ້າ, ເປັນບູລິມະສິດອັນດັບໜຶ່ງໃນວຽກງານພະນັກງານ, ຖືເປັນຄວາມຮັບຜິດຊອບຂອງຄະນະພັກຮາກຖານ ໂດຍອີງໃສ່ແຜນກຳນົດພະນັກງານ, ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ, ຄັດເລືອກເອົາຜູ້ທີ່ພົ້ນເດັ່ນໃນຂະບວນການ ແລະ ຖືກຕ້ອງຕາມມາດຕະຖານເງື່ອນໄຂໄປກໍ່ສ້າງ-ບຳລຸງຢູ່ໂຮງຮຽນຂອງພັກ, ສະຖາບັນການສຶກສາທາງດ້ານວິຊາສະເພາະຕ່າງໆຕາມຕົວເລກທີ່ໄດ້ແບ່ງປັນ, ຄຽງຄູ່ກັບການກໍ່ສ້າງພະນັກງານກັບທີ່ ໃນຂະບວນການວຽກງານຕົວຈິງ ແລະ ສົ່ງໄປສ້າງຢູ່ຮາກຖານ ເຊິ່ງໃນໄລຍະຜ່ານມາໄດ້ສົ່ງພະນັກງານໄປກໍ່ສ້າງ-ບຳລຸງວິຊາສະເພາະ ໃນໄລຍະປີ 2022-2023 ໄດ້ຮັບການຍົກລະດັບຈຳນວນ 1 ຄົນ, ໃນນີ້ ຍົກ

ລະດັບດ້ານວິຊາສະເພາະຈຳນວນ 1 ຄົນ, ລະດັບທິດສະດີ: ຂັ້ນກາງ 1 ສະຫາຍ, ຝຶກອົບຮົມຂັ້ນຕ່າງໆຈຳນວນ 2 ສະຫາຍ, ໄດ້ລົງກໍ່ສ້າງຮາກຖານການເມືອງ 1 ສະຫາຍ, ຍິງ 1 ສະຫາຍ.

ຄຽງຄູ່ກັບຜົນງານ ການກໍ່ສ້າງ-ບຳລຸງພະນັກງານທີ່ກ່າວມາຂ້າງເທິງນັ້ນ, ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ການເມືອງໃນໄລຍະໃໝ່ ເຫັນວ່າການກໍ່ສ້າງ ແລະ ບຳລຸງພະນັກງານຢູ່ພະແນກສຶກສາທິການ ແລະ ກິລາແຂວງໄຊຍະບູລີ ຍັງມີບາງດ້ານທີ່ຈະຕ້ອງໄດ້ປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງເຊັ່ນ:

**ໜຶ່ງ,** ພະນັກງານທີ່ໄດ້ຮັບການກໍ່ສ້າງ-ບຳລຸງຍົກລະດັບດ້ານວິຊາສະເພາະແມ່ນຍັງມີໜ້ອຍ ຖ້າອີງໃສ່ທຶນແບ່ງປັນ ພ້ອມກັນນັ້ນ, ຢູ່ບາງສາຂາວິຊາສະເພາະບໍ່ທັນໄດ້ຮັບການກໍ່ສ້າງ-ບຳລຸງເປັນລະບົບຕໍ່ເນື່ອງ ໂດຍສະເພາະແມ່ນພະນັກງານເພດຍິງ ຍັງບໍ່ໄດ້ຮັບການກໍ່ສ້າງຢ່າງຕັ້ງໜ້າ.

**ສອງ,** ການຂຶ້ນແຜນການກໍ່ສ້າງ-ບຳລຸງພະນັກງານ ໄລຍະຜ່ານມາຍັງຊັກຊ້າ, ບໍ່ທັນລະອຽດຈະແຈ້ງ ໂດຍສະເພາະແມ່ນພະນັກງານບາງສາຂາ, ການກໍ່ສ້າງ-ບຳລຸງຍັງບໍ່ຕິດພັນກັບໜ້າທີ່ການເມືອງ.

**ສາມ,** ການຄັດເລືອກເປົ້າໝາຍ ເພື່ອໄປກໍ່ສ້າງ-ບຳລຸງຍົກລະດັບຍັງບໍ່ທັນລະອຽດເລິກເຊິ່ງ, ການຄົ້ນຄວ້າ, ເລືອກເຟັ້ນພາວະວິໄສຈຶ່ງບໍ່ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໜ້າທີ່ການເມືອງຂອງພັກແຕ່ລະໄລຍະ.

**ສີ່,** ການກໍ່ສ້າງ-ບຳລຸງພະນັກງານບາງໄລຍະ, ບາງດ້ານບໍ່ຕິດພັນກັບການຂະຫຍາຍຕົວຂອງວຽກງານ ຈຶ່ງເຮັດໃຫ້ພົບຄວາມຫຍຸ້ງຍາກໃນຫຼາຍດ້ານເຊັ່ນ: ການຂຶ້ນແຜນ, ການຈັດວາງ, ການບັນຈຸສັບຊ້ອນ ແລະ ການນຳໃຊ້ພະນັກງານຍັງບໍ່ທັນແທດເໝາະ, ບໍ່ທັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງວຽກງານ ຍັງມີພະນັກງານຈຳນວນໜຶ່ງມີແນວຄິດປຽບທຽບສັ່ງຊາ.

**ຫ້າ,** ຄະນະພັກຈຳນວນໜຶ່ງຍັງຂາດປະສົບການໃນການເຮັດວຽກງານພັກ-ພະນັກງານ, ບໍ່ທັນກຳແໜ້ນລະຫວ່າງບົດບາດການນຳຂອງພັກ ກັບການຄຸ້ມຄອງບໍລິຫານລັດ, ເນັ້ນໜັກແຕ່ວຽກວິຊາສະເພາະສ່ວນວຽກງານພັກ-ພະນັກງານມີລັກສະນະເບົາບາງ.

ເພື່ອເຮັດໃຫ້ວຽກງານກໍ່ສ້າງ-ບຳລຸງພະນັກງານໄດ້ຮັບການປັບປຸງ ແລະ ຮັບປະກັນໄດ້ດ້ານຄຸນນະພາບສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງສະເພາະໜ້າ ແລະ ຍາວນານ ຄະນະພັກພະແນກສຶກສາທິການ ແລະ ກິລາແຂວງໄຊຍະບູລີ ຕ້ອງໄດ້ເພີ່ມທະວີເອົາໃຈໃສ່ ແລະ ຍົກສູງຄວາມຮັບຜິດຊອບ ສຸມໃສ່ຈັດຕັ້ງປະຕິບັດບາງວຽກງານສຳຄັນດັ່ງນີ້:

1). ຄະນະພັກ ຕ້ອງເປັນເຈົ້າການໃນການສ້າງແຜນບຳລຸງ-ກໍ່ສ້າງພະນັກງານ ໂດຍຕິດພັນກັບແຜນກຳນົດພະນັກງານ ເພື່ອຮັບປະກັນຄວາມຊັດເຈນ, ມີຈຸດສຸມ ແລະ ຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຕາມຕຳແໜ່ງງານທີ່ກຳນົດໄວ້ ໄປພ້ອມໆກັນກໍ່ຕ້ອງສ້າງໃຫ້ໄດ້ພະນັກງານເພດ, ເຜົ່າໃຫ້ມີຄວາມດຸ່ນດ່ຽງກັນ.

2). ພາກສ່ວນທີ່ເຮັດໜ້າທີ່ເປັນເສນາທິການ (ຂະແໜງຈັດຕັ້ງ ແລະ ພະນັກງານ) ໃຫ້ຄະນະພັກຂັ້ນເທິງຕ້ອງເປັນເຈົ້າການໃນການຂຶ້ນແຜນກຳນົດຕຳແໜ່ງ

ງານໃນແຕ່ລະປີໃຫ້ສອດຄ່ອງ, ລະອຽດຈະແຈ້ງ ເພື່ອສະດວກໃນການກຳນົດເປົ້າໝາຍສ້າງເປັນພະນັກງານສືບທອດປ່ຽນແທນໃນອະນາຄົດ ແລະ ຄວນມີການຕິດຕາມ, ກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງພະນັກງານ, ຄູ-ອາຈານຕາມລະບຽບຫຼັກການທີ່ກຳນົດ ໃຫ້ເປັນປົກກະຕິ ແລະ ຕໍ່ເນື່ອງ.

3). ການຄັດເລືອກເອົາບັນດາເປົ້າໝາຍເພື່ອໄປກໍ່ສ້າງ-ບຳລຸງຄວນເບິ່ງແບບວິທີສັດຈະວິພາກ ແລະ ພາວະວິໄສ, ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ມີການປຶກສາຫາລືເປັນເອກະພາບໃນໝູ່ຄະນະພ້ອມກັນນັ້ນ, ອີງໃສ່ຄວາມຮຽກຮ້ອງຕ້ອງການອັນຈຳເປັນ ແລະ ຮີບດ່ວນຂອງວຽກງານຕົວຈິງ. ຄະນະພັກທຸກຂັ້ນ ຄວນຖືເປັນຄວາມຮັບຜິດຊອບ ໂດຍກົງໃນການກຳນົດເປົ້າໝາຍການກໍ່ສ້າງ-ບຳລຸງພະນັກງານພ້ອມທັງຄຳນຶງເຖິງຄວາມຮູ້, ຄວາມສາມາດ, ພອນສະຫວັນ, ຄວາມສາມັກຄີເປັນເອກະພາບ ແລະ ຄວາມສະເໝີພາບ.

4). ພາຍຫຼັງທີ່ກັບການຈາກການບຳລຸງ-ກໍ່ສ້າງ ຄະນະພັກ, ເສນາທິການທີ່ຮັບຜິດຊອບວຽກງານພະນັກງານ ກໍ່ຕ້ອງໄດ້ເອົາໃຈໃສ່ໃນການມອບວຽກ, ມອບຄວາມຮັບຜິດຊອບໃຫ້ແກ່ຜູ້ກ່ຽວຕາມວິຊາທີ່ໄດ້ຮຽນມາ ພ້ອມກັນນັ້ນ, ກໍ່ຕ້ອງເອົາໃຈໃສ່ຕິດຕາມ, ກວດກາ ແລະ ປະເມີນຄືນຕໍ່ກັບສະຕິຄວາມຮັບຜິດຊອບ, ຄວາມເສຍສະຫຼະເພື່ອສ່ວນລວມ, ປະສິດທິຜົນໃນການປະຕິບັດໜ້າທີ່ວຽກງານ ວ່າສາມາດຮັບຮອງກັບໜ້າທີ່ໄດ້ບໍ ເພື່ອກຳນົດເປັນເປົ້າໝາຍສ້າງເປັນພະນັກງານສືບທອດປ່ຽນແທນໃນອະນາຄົດ.

5). ເອົາໃຈໃສ່ໃນການກຳນົດເປົ້າໝາຍຂອງການບຳລຸງ-ສ້າງ ພະນັກງານທີ່ຈະລົງກໍ່ສ້າງຮາກຖານການເມືອງ ໃຫ້ຖືກຕ້ອງຕາມມາດຕະຖານ, ເປົ້າໝາຍກໍ່ສ້າງເພື່ອເປັນພະນັກງານນຳພາ, ຄຸ້ມຄອງໃນອານາຄົດ ແລະ ເລັ່ງໃສ່ພະນັກງານທີ່ໜຸ່ມແໜ້ນ, ຫ້າວຫັນ, ມີຄຸນທາດການເມືອງດີ, ພ້ອມທັງການຕອບສະໜອງດ້ານນະໂຍບາຍ ໃຫ້ສົມຄູ່ກັບສະພາບເງື່ອນໄຂຕົວຈິງແຕ່ລະໄລຍະ.

**ສັງລວມແລ້ວ,** ການກໍ່ສ້າງ-ບຳລຸງພະນັກງານແມ່ນມີຄວາມສຳຄັນທີ່ສຸດ, ແມ່ນໜຶ່ງໃນວຽກງານພະນັກງານ ທີ່ຄະນະພັກແຕ່ລະຂັ້ນ ແລະ ອົງການເສນາທິການທີ່ຮັບຜິດຊອບວຽກງານພະນັກງານໃຫ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ມີຄວາມເປັນເອກະພາບສູງ ໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ຊັດເຈນ ແລະ ເຂັ້ມງວດ ເວົ້າລວມ, ເວົ້າສະເພາະພະແນກສຶກສາທິການ ແລະ ກິລາແຂວງໄຊຍະບູລີ ຕ້ອງຍົກສູງຄວາມເປັນເຈົ້າການໃນການປັບປຸງ, ແກ້ໄຂ, ເອົາໃຈໃສ່ເພີ່ມທະວີການນຳພາ-ຊີ້ນຳຢ່າງໃກ້ຊິດ ຕໍ່ວຽກງານກໍ່ສ້າງ-ບຳລຸງພະນັກງານສ້າງໃຫ້ໄດ້ພະນັກງານທີ່ດີ, ມີຄວາມຮູ້ຄວາມສາມາດ, ມີຄຸນທາດການເມືອງທີ່ໜັກແໜ້ນ ການເປັນພະນັກງານນຳພາ-ຄຸ້ມຄອງແຕ່ລະຂັ້ນ ໄປພ້ອມກັບການປະຕິບັດນະໂຍບາຍ (ທາງດ້ານວັດຖຸ ແລະ ຈິດໃຈ) ຕໍ່ພະນັກງານ-ລັດຖະກອນຢ່າງຖືກຕ້ອງ, ເໝາະສົມ ແລະ ເອົາໃຈໃສ່ຕິດຕາມ, ກວດກາ, ສະຫຼຸບຕີລາຄາ, ປະເມີນຜົນການປະຕິບັດວຽກງານພະນັກງານ ເພື່ອຮັບປະກັນເຮັດໃຫ້ວຽກງານຂົງເຂດການສຶກສາໄດ້ຮັບການພັດທະນາ ແລະ ເປັນການປະກອບສ່ວນອັນສຳຄັນໃນການຜັນຂະຫຍາຍແນວທາງຂອງພັກ-ລັດຖະບານໃຫ້ບັນລຸຕາມຈຸດປະສົງທີ່ໄດ້ກຳນົດໄວ້...ຯ

# ຍົກສູງຄຸນນະພາບການຈັດຕັ້ງປະຕິບັດວຽກງານ ຊາວໜຸ່ມ ຢູ່ແຂວງໄຊຍະບູລີ

ໂດຍ: ຈິນດາ ກະທາທອງ

ຊາວໜຸ່ມແມ່ນທຶນຮອນອັນປະເສີດ, ເປັນຊັບພະຍາກອນອັນລ້ຳຄ່າຂອງຊາດ; ແມ່ນຜູ້ທີ່ມີຄວາມໜຸ່ມແໜ້ນ, ເປັນໄວທີ່ຂະຫຍັນຂັນແຂງ, ມີກຳລັງວັງຊາ ແລະ ເປັນກຳລັງນຳໜ້າໃນການອອກແຮງງານ, ຊາວໜຸ່ມເປັນຜູ້ທີ່ມີມັນສະໝອງທີ່ສົດໃສ, ມີຄວາມສາມາດໃນການຮຽນຮູ້ສູງ, ມີຫົວຄິດປະດິດສ້າງ, ຊອກຫາຄົ້ນຄວ້າຮ່ຳຮຽນສິ່ງໃໝ່ໆທາງດ້ານວິທະຍາສາດ, ເຕັກໂນໂລຊີ; ຊາວໜຸ່ມເວລາໃດກໍ່ເປັນກຳລັງປະຈັນບານ, ເປັນກຳລັງສຳຮອງທີ່ສຳຄັນ, ເປັນແຂນຂວາ ແລະ ເປັນຜູ້ສືບທອດພາລະກິດປະຕິວັດຂອງພັກ, ເປັນກະດູກສັນຫຼັງ ຂອງປະເທດຊາດ. ປະທານ ໄກສອນ ພົມວິຫານ ໄດ້ໃຫ້ນາມມະຍົດວ່າ: "ຊາວໜຸ່ມຈິ່ງເປັນດັ່ງນົກອິນຊີທີ່ບໍ່ຫວັ່ນກົວຕໍ່ພາຍຸລົມແດງຈິ່ງກາຍເປັນສິນໄຊແຫ່ງຍຸກສະໄໝ".

ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວແມ່ນການຈັດຕັ້ງການເມືອງໂດຍແມ່ນພັກປະຊາຊົນປະຕິວັດລາວເປັນຜູ້ກໍ່ຕັ້ງ, ນຳພາ-ຊີ້ນຳ, ສຶກສາອົບຮົມ; ອົງການຈັດຕັ້ງຊາວໜຸ່ມປະກອບດ້ວຍຊາວໜຸ່ມບັນດາເຜົ່າຜູ້ທີ່ມີຄວາມກ້າວໜ້າ, ຫ້າວຫັນ, ບຸກບືນ, ຕັ້ງໜ້າປະກອບສ່ວນເຂົ້າໃນຂະບວນການວຽກງານຕ່າງໆດ້ວຍຄວາມຕື່ນຕົວ, ສະໝັກໃຈ, ເປັນແບບຢ່າງໃນການພັດທະນາຕົນເອງໃນທຸກດ້ານ, ເປັນກຳລັງປະຈັນບານປະຕິວັດທີ່ແຂງແຮງຂອງພັກ; ແມ່ນການຈັດຕັ້ງໜຶ່ງທີ່ແໜ້ນໜາ, ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງຊາວໜຸ່ມ-ໄວໜຸ່ມ ແລະ ເຍົາວະຊົນລາວບັນດາເຜົ່າ, ທັງເປັນສະຖາບັນການສຶກສາທີ່ພັດທະນາຄວາມຮູ້, ຄວາມສາມາດ ແລະ ຄຸນສົມບັດສິນທຳປະຕິວັດໃຫ້ຊາວໜຸ່ມ-ໄວໜຸ່ມ ແລະ ເຍົາວະຊົນ.

ດ້ວຍບົດບາດ ແລະ ຄວາມສຳຄັນດັ່ງກ່າວ ຄະນະບໍລິຫານງານຊາວໜຸ່ມແຕ່ລະຂັ້ນ ເວົ້າລວມ, ເວົ້າສະເພາະ ຄະນະບໍລິຫານງານຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງໄຊຍະບູລີ ຍາມໃດກໍ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດພາລະບົດບາດຂອງຕົນ ໃນການຈັດຕັ້ງຜັນຂະຫຍາຍຄາດໝາຍສູ້ຊົນທີ່ກອງປະຊຸມໃຫຍ່ ຜູ້ແທນຊາວໜຸ່ມທົ່ວແຂວງໄຊຍະບູລີ ຄັ້ງທີ VII ທີ່ໄດ້ວາງທິດທາງ, ແຜນການວຽກງານຈຸດສຸມແຕ່ນີ້ຫາປີ 2024ຄື: ເພີ່ມທະວີ ເຂົ້າໃນການສຶກສາອົບຮົມການເມືອງ -ແນວຄິດ ໃຫ້ຄະນະຊາວໜຸ່ມ, ສະມາຊິກຊາວໜຸ່ມ-ເຍົາວະຊົນໃຫ້ໄດ້ 70% ຂຶ້ນໄປຂອງຈຳນວນຊາວໜຸ່ມ-ເຍົາວະຊົນທົ່ວແຂວງ; ສືບຕໍ່ປັບປຸງກົງຈັກການຈັດຕັ້ງໂດຍການໂຮມບາງຂະແໜງການເຂົ້າກັນຕາມແຈ້ງການຂອງກະຊວງພາຍໃນ ແລະ ປັບປຸງບັນຈຸ, ສັບຊ້ອນ, ຈັດວາງບຸກຄະລາກອນນັບແຕ່ຄະນະ ຊປປລ ແຂວງລົງຮອດຄະນະ ຊປປລ ເມືອງ; ສຸມໃສ່ປັບປຸງການຈັດຕັ້ງຊາວໜຸ່ມຢູ່ຂັ້ນຮາກຖານບ້ານໃນແຕ່ລະເມືອງໃຫ້ໄດ້85%, ປັບປຸງ

ແບບແຜນວິທີເຮັດວຽກຂອງຄະນະຊາວໜຸ່ມໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ຂະຫຍາຍສະມາຊິກຊາວໜຸ່ມໃຫ້ໄດ້ 50%, ຂະຫຍາຍສະມາຊິກຊາວໜຸ່ມເຂົ້າເປັນສະມາຊິກພັກໃຫ້ໄດ້ 15% ຂຶ້ນໄປຂອງສະມາຊິກຊາວໜຸ່ມທັງໝົດ; ຮັບຮອງເມືອງ 4 ບຸກປີທີ 3 ໃຫ້ສໍາເລັດ 100%, ສ້າງໜ່ວຍຊາວໜຸ່ມຕົວແບບໃຫ້ໄດ້ 10-30% ຂອງຈໍານວນໜ່ວຍຊາວໜຸ່ມທັງໝົດ, ປັບປຸງການຈັດຕັ້ງເຍົາວະຊົນໃຫ້ໄດ້ 90%, ປະຕິບັດຂໍ້ແຂ່ງຂັນ 3 ດີ 4 ຮູ້ ໃຫ້ໄດ້ 70%, ຂະຫຍາຍສະມາຊິກເຍົາວະຊົນ - ອະນຸຊົນ ໃຫ້ໄດ້ 70% ຂອງໄວເຍົາວະຊົນ-ອະນຸຊົນທັງໝົດ, ສ້າງກອງເຍົາວະຊົນຕົວແບບ 3 ດີ 4 ຮູ້ ໃຫ້ໄດ້ 70% ຂອງກອງເຍົາວະຊົນທັງໝົດ, ຮັບຮອງເອົາໂຮງຮຽນ 3 ດີ 4 ຮູ້ປີທີ I,II, III ໃຫ້ໄດ້90% ແລະ ປະກາດເມືອງ 3 ດີ 4 ຮູ້ ໃຫ້ໄດ້ 07 ເມືອງ. ຕິດຕາມ, ກວດກາ, ປະເມີນຜົນ, ຈັດປະເພດສະມາຊິກຊາວໜຸ່ມ 4 ບຸກ, ຮາກຖານ-ໜ່ວຍຊາວໜຸ່ມ 4 ບຸກ ໃຫ້ໄດ້ 85% ຂຶ້ນໄປ.

ເພື່ອບັນລຸຄາດໝາຍທີ່ມະຕິກອງປະຊຸມໃຫຍ່ຜູ້ແທນຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງໄຊຍະບູລີ ທີ່ໄດ້ວາງອອກໃຫ້ປະກົດຜົນເປັນຈິງ ຄະນະບໍລິຫານງານຊາວໜຸ່ມແຂວງໄຊຍະບູລີ ໄດ້ເອົາໃສ່ຈັດຕັ້ງປະຕິບັດຜັນຂະຫຍາຍຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແຜນພັດທະນາເສດຖະກິດ- ສັງຄົມ, ມະຕິກອງປະຊຸມໃຫຍ່ ຜູ້ແທນຊາວໜຸ່ມທົ່ວປະເທດ ໂດຍຫັນເປັນແຜນການ, ໂຄງການລະອຽດ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງໃນແຕ່ລະໄລຍະ ແລະ ຈັດຕັ້ງໄດ້ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງສູນກາງພັກ, ມະຕິກອງປະຊຸມໃຫຍ່ ຄັ້ງທີ VII ຂອງອົງຄະນະພັກແຂວງ, ມະຕິກອງປະຊຸມໃຫຍ່ ຜູ້ແທນຊາວໜຸ່ມທົ່ວປະເທດ ຄັ້ງທີ VIII ແລະ ແຜນຍຸດທະສາດການພັດທະນາຊາວໜຸ່ມ-ເຍົາວະຊົນ ໂດຍຖືເອົາ 7 ແຜນງານ 40 ໂຄງການ ຫັນເປັນໜ້າວຽກອັນລະອຽດ ແລະ ພັດທະນາຂັ້ນຂອງຕົນ ເປັນ 7 ແຜນງານ 24 ໂຄງການ ແລະ ຕິດພັນກັບຂະບວນການຂໍ້ແຂ່ງຂັນ 4 ບຸກ ຂອງຊາວໜຸ່ມ ແລະ 3 ດີ 4 ຮູ້ ຂອງເຍົາວະຊົນ ເພື່ອໝູນໃຊ້ເຂົ້າໃນການພັດທະນາຊາວໜຸ່ມ - ເຍົາວະຊົນຢູ່ແຂວງໄຊຍະບູລີຢ່າງເປັນຂະບວນຟົດຟື້ນ ເຊິ່ງສະແດງອອກໃນແຕ່ລະວຽກດັ່ງນີ້:

ວຽກງານສຶກສາອົບຮົມການເມືອງ-ແນວຄິດ ໃຫ້ແກ່ຖັນແຖວຊາວໜຸ່ມ, ເຍົາວະຊົນ-ອານຸຊົນ ທົ່ວແຂວງ, ຄະນະຊາວໜຸ່ມແຕ່ລະຂັ້ນ ໄດ້ຖືເປັນວຽກງານທີ່ສໍາຄັນໃຫ້ແກ່ວຽກງານຊາວໜຸ່ມ ເພື່ອເປັນການປັບປຸງທັດສະນະຫຼັກໝັ້ນ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ສິນທໍາປະຕິວັດ, ເສີມຂະຫຍາຍມູນເຊື້ອພິລະອາດຫານຂອງພັກ, ຂອງຊາດ, ເປັນການສຶກສາອົບຮົມຊາວໜຸ່ມ-ເຍົາວະຊົນ ໃຫ້ມີລະບຽບວິໄນ, ມີສະຕິລະວັງຕົວ, ຈໍາແນກມິດ ແລະ ສັດຕູຢ່າງຈະແຈ້ງ, ຕອບຕ້ານທຸກກົນອຸບາຍເລ່ລ່ຽມ ຂອງສັດຕູ ເພື່ອຫັນປ່ຽນໂດຍສັນຕິ ຂອງກຸ່ມຄົນທີ່ບໍ່ຫວັງດີ ທີ່ມີເຈດຈໍານົງທໍາລາຍ ມ້າງເພລະບອບໃໝ່ ຂອງພວກເຮົາ ດ້ວຍການໂຄສະນາ ໃສ່ຮ້າຍປ້າຍສີ ຕໍ່ແນວທາງ ຂອງພັກວາງອອກ, ປັ່ນປ່ວນ, ເບື່ອເມົາ, ດຶງດູດເອົາຊາວໜຸ່ມ-ເຍົາວະຊົນ ຫັນໄປນິຍົມວັດທະນະທໍາ ຂອງພວກເຂົາ; ໄປພ້ອມກັບການ ໄດ້ເພີ່ມທະວີເອົາໃຈໃສ່ການສຶກສາອົບຮົມການເມືອງ-ແນວຄິດ, ນໍາເອົາແນວທາງຂອງພັກ, ນະໂຍບາຍຂອງລັດ, ມູນເຊື້ອຂອງຊາດ, ຂອງທ່ານຜູ້ນໍາ, ລະບຽບກົດໝາຍຂອງລັດ, ຂອງຄະນະ ຊາວໜຸ່ມ ປະຊາຊົນ ປະຕິວັດລາວ, ຂອງເຍົາ

ວະຊົນ, ເນື້ອໃນຂໍ້ແຂ່ງຂັນຂອງຊາວໜຸ່ມ, ຂອງເຍົາວະຊົນ ແລະ ຄຳສອນຂອງທ່ານຜູ້ນຳ ເພື່ອນຳໄປສຶກສາອົບຮົມເຂົາເຈົ້າ; ຈັດກິດຈະກຳປູກຈິດສຳນຶກໃຫ້ສະມາຊິກຊາວໜຸ່ມ-ເຍົາວະຊົນໃນທົ່ວອ້ອມຂ້າງແຂວງ ໂດຍກິດຈະກຳຂັບຂີ່ປອດໄພທ້ອງຖະໜົນ, ລົງໂຄສະນາເວົ້າເຖິງຜົນຮ້າຍຂອງສິ່ງເສບຕິດ, ເອກະສານຊາວໜຸ່ມ ຈິ່ງເປັນດັ່ງນັກອິນຊີທີ່ບໍ່ຫວັ່ນກົວຕໍ່ພະຍຸລົມແດງ ຈິ່ງກາຍເປັນສິນໄຊ ຂອງຍຸກສະໄໝ, ລະບຽບ, ກົດໝາຍ ຂອງຊາວໜຸ່ມ-ເຍົາວະຊົນ ສະໄໝທີ VIII, ເຜີຍແຜ່ມະຕິກອງປະຊຸມໃຫຍ່ ຄັ້ງທີ VIII ຂອງຜູ້ແທນຊາວໜຸ່ມທົ່ວປະເທດ, ມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງຜູ້ແທນຊາວໜຸ່ມ ແຂວງໄຊຍະບູລີ, ຈັດຕັ້ງປາຖະກະຖາມູນເຊື້ອວັນສ້າງຕັ້ງ ຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ ຄົບຮອບ 67 ປີ ໃຫ້ພະນັກງານຊາວໜຸ່ມອາຊີບ ແລະ ສະມາຊິກຊາວໜຸ່ມ-ເຍົາວຊົນ ຢູ່ຄະນະຊາວໜຸ່ມ ປະຊາຊົນປະຕິວັດລາວ ຮາກຖານຊາວໜຸ່ມ ແລະ ໜ່ວຍຮາກຖານຊາວໜຸ່ມອ້ອມຂ້າງແຂວງ ແລະ ຄະນະຊາວໜຸ່ມບັນດາເມືອງ, ໄດ້ 395 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 16.454 ເທື່ອຄົນ, ຍິງ 9.544 ເທື່ອຄົນ.

ດ້ານການປັບປຸງກົງຈັກການຈັດຕັ້ງ: ຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວແຂວງ ກໍ່ຄືຄະນະຊາວໜຸ່ມແຕ່ລະຂັ້ນ ເປັນເຈົ້າການໃນການປັບປຸງການຈັດຕັ້ງ ຢູ່ໃນຂັ້ນຂອງຕົນໃຫ້ມີການເຕີບໃຫຍ່, ເຂັ້ມແຂງ, ໜັກແໜ້ນ ມີການເຄື່ອນໄຫວວຽກງານ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ ເຊິ່ງປະຈຸບັນ ຄະນະບໍລິຫານງານຊາວໜຸ່ມແຂວງ ປະກອບມີ 6 ຂະແໜງການ, ມີຄະນະບໍລິຫານງານຊາວໜຸ່ມແຂວງ ຈຳນວນ 33 ສະຫາຍ, ຍິງ 10 ສະຫາຍ ໃນນີ້, ເປັນກຳມະການພັກແຂວງ 1 ສະຫາຍ, ເປັນກຳມະການພັກເມືອງ 9 ສະຫາຍ, ຍິງ 4 ສະຫາຍ.

ທົ່ວແຂວງມີ 11 ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຂັ້ນເມືອງ, ມີ 61 ຄະນະ ຊປປລ ຮາກຖານ, ມີ 1 ພະແນກຊາວໜຸ່ມກອງບັນຊາການທະຫານແຂວງ, ມີ 880 ໜ່ວຍຮາກຖານຊາວໜຸ່ມ ແລະ ມີ 255 ໜ່ວຍຂຶ້ນກັບຄະນະ ຊປປລ ຮາກຖານ, ມີຊາວໜຸ່ມ-ໄວໜຸ່ມທັງໝົດ 95.654 ຄົນ, ຍິງ 46.669 ຄົນ, ໃນນັ້ນໄດ້ເຂົ້າເປັນສະມາຊິກຊາວໜຸ່ມ ປະຊາຊົນ ປະຕິວັດລາວ ຈຳນວນ 30.186 ສະຫາຍ, ຍິງ 12.933 ສະຫາຍ, ສະມາຊິກຊາວໜຸ່ມເຂົ້າເປັນສະມາຊິກພັກ 5.707 ສະຫາຍ, ຍິງ 2.058 ສະຫາຍ, ຮັບສະມາຊິກຊາວໜຸ່ມເຂົ້າໃໝ່ 1.662 ສະຫາຍ, ຍິງ 909 ສະຫາຍ, ມີພະນັກງານຊາວໜຸ່ມອາຊີບທັງໝົດ ຈຳນວນ 104 ສະຫາຍ, ຍິງ 43 ສະຫາຍ, ລະດັບການສຶກສາຈົບປະລິນຍາໂທ 1 ສະຫາຍ, ປະລິນຍາຕີ 34 ສະຫາຍ, ຍິງ 11 ສະຫາຍ, ຊັ້ນສູງ 58 ສະຫາຍ, ຍິງ 27 ສະຫາຍ, ຊັ້ນກາງ 10 ສະຫາຍ, ຍິງ 2 ສະຫາຍ, ຊັ້ນຕົ້ນ 1 ສະຫາຍ, ຍິງ 1 ສະຫາຍ, ລະດັບທິດສະດີ: ຂັ້ນສູງ 7 ສະຫາຍ, ຂັ້ນກາງ 16 ສະຫາຍ, ຍິງ 5 ສະຫາຍ, ຂັ້ນຕົ້ນ 12 ສະຫາຍ, ຍິງ 6 ສະຫາຍ, ບຳລຸງ 45 ວັນ 10 ສະຫາຍ, ຍິງ 5 ສະຫາຍ, ສະມາຊິກ ຊາວໜຸ່ມທີ່ພົ້ນອາຍຸກະສຽນ ແລະ ໄດ້ຈັດພິທີລາອອກຈຳນວນ 508 ຄົນ, ຍິງ 160 ຄົນ.

ຄຽງຄູ່ກັນນັ້ນ ກໍ່ໄດ້ເອົາໃຈໃສ່ຍົກລະດັບຄວາມຮູ້ໃນດ້ານຕ່າງໆເປັນຕົ້ນແມ່ນ ຍົກລະດັບທິດສະດີການເມືອງ 1 ສະຫາຍຢູ່ພາຍໃນປະເທດ, ຝຶກອົບຮົມຢູ່ຕ່າງປະເທດ 1 ສະຫາຍ, ໄດ້ສ້າງຕັ້ງສະມາຄົມນັກທຸລະກິດໜຸ່ມໃນຂັ້ນແຂວງ 1 ສະມາຄົມນັກທຸລະກິດໜຸ່ມ, ຂັ້ນເມືອງມີ 2 ເມືອງ, ມີຄະນະບໍລິຫານງານ ສະມາຄົມນັກ

ທຸລະກິດໜຸ່ມຈໍານວນ 29 ສະຫາຍ, ຍິງ 2 ສະຫາຍ. ພ້ອມນັ້ນຍັງໄດ້ເອົາໃຈໃສ່ສ້າງວິຊາຊີບໃຫ້ແກ່ຊາວໜຸ່ມທີ່ຫວ່າງງານ ແລະ ຊາວໜຸ່ມທີ່ຢູ່ໃນຊົນນະບົດ ໂດຍການເອົາໃຈໃສ່ຕໍ່ການພັດທະນາວິຊາຊີບ ໂດຍເປີດໂອກາດໃຫ້ຊາວໜຸ່ມຜູ້ດ້ອຍໂອກາດໄດ້ເຂົ້າຝຶກອົບຮົມວິຊາຊີບສາຂາຕ່າງໆ ຕາມຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານເຊັ່ນ: ຊ່າງສ້ອມແປງລົດໃຫຍ່, ລົດຈັກ, ຊ່າງຕັດຫຍິບ, ຊ່າງໄຟຟ້າ ແລະ ອື່ນໆ.

ໃນໄລຍະຜ່ານມາຄະນະຊາວໜຸ່ມແຕ່ລະຂັ້ນແມ່ນໄດ້ເອົາໃຈໃສ່ຈັດສົ່ງຊາວໜຸ່ມຜູ້ຫວ່າງງານ, ຊາວໜຸ່ມຜູ້ດ້ອຍໂອກາດ, ຊາວໜຸ່ມຜູ້ທີ່ມີຄວາມສົນໃຈຢາກຝຶກອົບຮົມວິຊາຊີບ ແລະ ຮຽນວິຊາສາຂາຕ່າງໆ ພວກເຮົາກໍ່ໄດ້ຈັດສົ່ງເຂົ້າຮໍ່າຮຽນ ແລະ ຝຶກອົບຮົມ ເຊິ່ງມັນໄດ້ສະແດງອອກມີຜູ້ໄປຮຽນ ແລະ ຝຶກອົບຮົມໃນປີ 2023 ມີ: 15 ຄົນ, ຍິງ 12 ຄົນ ໃນນັ້ນຊ່າງໄຟຟ້າ 2 ຄົນ, ຊ່າງສາຂາຕັດຫຍິບ 5 ຄົນ, ສາຂາສ້ອມແປງລົດໃຫຍ່ 1 ຄົນ, ເສີມສວຍ 2 ຄົນ, ປູກຝັງລ້ຽງສັດ 4 ຄົນ ແລະ ວິສາວະກໍາຊົນລະປະທານ (ທ່າງ່ອນ) 1 ຄົນ, ນອກຈາກນັ້ນຍັງໄດ້ຍາດແຍ່ງແຫຼ່ງທຶນຈາກໂຄງການ VTESS ມາເພື່ອສົ່ງເສີມຊາວໜຸ່ມຜູ້ທີ່ຫວ່າງງານຢູ່ພາຍໃນແຂວງຂອງຕົນໄດ້ທັງໝົດ 27 ທຶນ, ສາມາດສ້າງວິຊາຊີບວຽກເຮັດງານທໍາໃຫ້ແກ່ຊາວໜຸ່ມຜູ້ທີ່ຫວ່າງງານທັງໝົດ 27 ຄົນ, ຍິງ 19 ຄົນ.

ຂະບວນການແຂ່ງຂັນ 4 ບຸກ: ຄະນະຊາວໜຸ່ມແຕ່ລະຂັ້ນ ໄດ້ຈັດກອງປະຊຸມກວດກາປະເມີນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກຂັ້ນແຂວງ ປະຈໍາປີ 2022 ສໍາເລັດໃນທົ່ວແຂວງ ແລະ ໄດ້ຄົ້ນຄວ້າອອກໃບຍ້ອງຍໍ 4 ບຸກໃຫ້ຄະນະ ຊປປລ ເມືອງໄດ້ 11 ເມືອງ, 11 ຄະນະ ຊປປລ ຮາກຖານ ແລະ 21 ໜ່ວຍຮາກຖານ ທັງຄົ້ນຄວ້າອອກທຸງໄຊນໍາໜ້າ 4 ບຸກ ໄດ້ຈໍານວນ 43 ຜືນ ໃຫ້ຄະນະ ຊປປລ ເມືອງ, ຄະນະ ຊປປລ ຮາກຖານ ແລະ ໜ່ວຍຮາກຖານຊາວໜຸ່ມພະແນກການອ້ອມຂ້າງແຂວງ ທີ່ໄດ້ຮັບການຍ້ອງຍໍ 4 ບຸກ 3 ປີ ຕິດຕໍ່ກັນ 2018-2020 ແລະ ໄດ້ປະເມີນການຈັດຕັ້ງຂໍ້ແຂ່ງຂັນ 4 ບຸກ ປີ 2023 ໄດ້ຈໍານວນ 2 ຄະນະ ຊປປລ ເມືອງ, 1 ພະແນກຊາວໜຸ່ມກອງບັນຊາການທະຫານແຂວງ, 1 ຄະນະ ຊປປລ ຮາກຖານ ແລະ 5 ໜ່ວຍຮາກຖານຊາວໜຸ່ມ. ນອກຈາກນັ້ນ ກໍ່ຍັງໄດ້ຕິດຕາມກວດກາການດໍາເນີນກອງປະຊຸມໃຫຍ່ຂອງໜ່ວຍຮາກຖານຊາວໜຸ່ມ, ຄະນະ ຊປປລ ຮາກຖານ, ຂັ້ນເມືອງ ແລະ ພະແນກການອ້ອມຂ້າງແຂວງ ແລະ ຕິດຕາມການເກັບເງິນສະຕິຊາວໜຸ່ມຢ່າງເປັນປົກກະຕິ ເຊິ່ງປະຈຸບັນຄະນະ ຊປປລ ແຂວງພວກເຮົາໄດ້ເກັບເງິນສະຕິຊາວໜຸ່ມ ຈາກບັນດາຄະນະ ຊປປລ ເມືອງ, ຄະນະ ຊປປລ ຮາກຖານ ແລະ ໜ່ວຍຮາກຖານຊາວໜຸ່ມ ປະຈໍາປີ 2023 ໄດ້ທັງໝົດ 7.333.000 ກີບ.

ວຽກງານເຍົາວະຊົນ-ອະນຸຊົນທັນວາ: ທົ່ວແຂວງມີຜູ້ຮັບຜິດຊອບວຽກງານເຍົາວະຊົນ-ອະນຸຊົນ ຈໍານວນ 696 ສະຫາຍ, ຍິງ 439 ສະຫາຍ , ພາກລັດ 681 ສະຫາຍ, ພາກເອກະຊົນ 15 ສະຫາຍ, ຍິງ 13 ສະຫາຍ, ໃນນັ້ນຂັ້ນແຂວງ 3 ສະຫາຍ, ຍິງ 1 ສະຫາຍ, ຂັ້ນເມືອງ 25 ສະຫາຍ, ຍິງ 11 ສະຫາຍ, ຂັ້ນໂຮງຮຽນ 665 ສະຫາຍ, ຍິງ 414 ສະຫາຍ, ມີໄວເຍົາວະຊົນທັງໝົດຈໍານວນ 32.450 ນ້ອງ, ຍິງ 16.960 ນ້ອງ, ໃນນີ້ ເຂົ້າເປັນສະມາຊິກເຍົາວະຊົນທັນວາແລ້ວ 26.848 ນ້ອງ, ຍິງ 14.477 ນ້ອງ; ມີໄວອະນຸຊົນທັງໝົດ 16.663 ນ້ອງ, ຍິງ 9.411 ນ້ອງ,

ໃນນີ້ ເຂົ້າເປັນສະມາຊິກອະນຸຊົນທັນວາແລ້ວ 10.646 ນ້ອງ, ຍິງ 5.778 ນ້ອງ; ຂະຫຍາຍກອງເຍົາວະຊົນທັນວາໃໝ່ໄດ້ 109 ກອງ, ຂະຫຍາຍໝວດເຍົາວະຊົນທັນວາໄດ້ 1.118 ໝວດ, ຂະຫຍາຍໝູ່ເຍົາວະຊົນທັນວາໄດ້ 2.815 ໝູ່, ປະຈຸບັນ ທົ່ວແຂວງມີກອງເຍົາວະຊົນທັນວາ 313 ກອງ, ມີ 2.310 ໝວດ ແລະ ມີ 6.496 ໝູ່ ໃນນີ້, ມີກອງເຍົາວະຊົນທັນວານຳໜ້າ ຈຳນວນ 64 ກອງ ແລະ ກອງເຍົາວະຊົນທັນວາ 3 ດີ 4 ຮູ້ ຈຳນວນ 131 ກອງ.

ຄຽງຄູ່ກັບຜົນງານ ແລະ ການເຄື່ອນໄຫວວຽກງານຊາວໜຸ່ມຢູ່ແຂວງໄຊຍະບູລີໃນໄລຍະຜ່ານມາເຫັນວ່າຍັງມີບາງບັນຫາທີ່ຕ້ອງໄດ້ເອົາໃຈໃສ່ປັບປຸງແກ້ໄຂເຊັ່ນ:

1). ການສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ-ລັດຖະກອນ, ສະມາຊິກຊາວໜຸ່ມ-ເຍົາວະຊົນຍັງເຮັດບໍ່ໄດ້ເລິກເຊິ່ງ, ການຈັດຝຶກອົບຮົມທິດສະດີການເມືອງ-ການປົກຄອງ, ການຈັດເຜີຍແຜ່ກົດໝາຍ ແລະ ກົດລະບຽບຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ບາງບ່ອນຍັງເຮັດບໍ່ທັນໄດ້ດີ, ຍັງບໍ່ທັນທົ່ວເຖິງ ແລະ ເລິກເຊິ່ງ, ບໍ່ທັນລົງເລິກເຖິງເປົ້າໝາຍ ເຮັດໃຫ້ການເຄື່ອນໄຫວວຽກງານຊາວໜຸ່ມບໍ່ແຂງແຮງເທົ່າທີ່ຄວນ.

2). ການປັບປຸງ, ສັບຊ້ອນການຈັດຕັ້ງພາຍໃນຄະນະຊາວໜຸ່ມແຂວງໄຊຍະບູລີໄດ້ສຳເລັດໂດຍພື້ນຖານກໍ່ຕາມ ແຕ່ບາງໜ້າວຽກຍັງມີລັກສະນະຊັກຊ້າ, ພະນັກງານຈຳນວນໜຶ່ງຍັງຂາດຄວາມຮູ້ຄວາມສາມາດ, ຫົວຄິດປະດິດສ້າງ, ບົດຮຽນປະສົບປະການໃນການປະຕິບັດວຽກງານຍັງບໍ່ຫຼາຍເຮັດໃຫ້ປະສິດທິພາບຂອງວຽກງານບໍ່ສູງເປັນຕົ້ນແມ່ນວຽກງານເຕົ້າໂຮມ ແລະ ສຶກສາອົບຮົມຊາວໜຸ່ມ-ເຍົາວະຊົນ.

3). ການສ້າງພະນັກງານສືບທອດປ່ຽນແທນຍັງບໍ່ທັນເປັນລະບົບຕໍ່ເນື່ອງເຮັດໃຫ້ການປະຕິບັດທິດທັນເປັນໜຸ່ມພົບຄວາມຫຍຸ້ງຍາກ, ພະນັກງານໜຸ່ມມີຫຼາຍແຕ່ປະສົບການວຽກງານຍັງບໍ່ທັນສູງ ແລະ ບໍ່ທັນມີຄວາມເຂັ້ມແຂງພຽງພໍເທື່ອ.

4). ກົນໄກປະສານງານລະຫວ່າງຄະນະຊາວໜຸ່ມແຂວງກັບຄະນະຊາວໜຸ່ມແຕ່ລະຂັ້ນ ແລະ ຍັງເຮັດບໍ່ທັນໄດ້ດີເຮັດໃຫ້ການເຄື່ອນໄຫວວຽກງານຊາວໜຸ່ມກໍ່ຄືຂະບວນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 4 ບຸກບໍ່ທັນເປັນຂະບວນຟົດພື້ນເທົ່າທີ່ຄວນ.

5). ການເຄື່ອນໄຫວວຽກງານຂະບວນການຍັງບໍ່ມີຜົນສະທ້ອນທີ່ແຂງແຮງຕໍ່ການພັດທະນາປະເທດຊາດ ແລະ ວຽກງານພົວພັນຮ່ວມມືກັບຕ່າງປະເທດຍັງບໍ່ສະແດງໃຫ້ເຫັນຜົນງານອັນພົ້ນເດັ່ນຕໍ່ກັບການພັດທະນາຊາວໜຸ່ມ-ເຍົາວະຊົນໃນປະຈຸບັນເທົ່າທີ່ຄວນ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຊາວໜຸ່ມຢູ່ແຂວງໄຊຍະບູລີເຄື່ອນໄຫວຢ່າງມີປະສິດທິພາບ ແລະ ປະສິດທິຜົນແນໃສ່ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມ, ສ້າງຊາວໜຸ່ມເປັນຜູ້ສືບທອດທີ່ໄວ້ເນື້ອເຊື່ອໃຈຂອງພັກຢ່າງແທ້ຈິງ, ໃນຕໍ່ໜ້າຄວນເອົາໃຈໃສ່ບາງວຽກດັ່ງນີ້:

**ໜຶ່ງ:** ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ພັກ-ພະນັກງານພາຍໃນຄະນະຊາວໜຸ່ມແຂວງໄຊຍະບູລີ ຢ່າງເປັນປົກກະຕິຕໍ່ເນື່ອງຂອງຕົນໂດຍຖືເອົາການຄົ້ນຄວ້າເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ, ກົດລະບຽບ ຂອງ ຄຊປປລ, ຮໍ່າຮຽນມູນເຊື້ອຂອງພັກ, ຂອງຊາດ ແລະ ຂອງ

ຊາວໜຸ່ມດ້ວຍຮູບການປາຖະກະຖາ, ເລົ່ານູນເຊື້ອ, ສຳມະນາວິທະຍາສາດ, ທັດສະນະສຶກສາ ແລະ ອື່ນໆ ໃຫ້ແທດເໝາະກັບສະພາບການໃນໄລຍະໃໝ່.

**ສອງ:** ປັບປຸງການຈັດຕັ້ງຂອງຄະນະຊາວໜຸ່ມແຂວງໄຊຍະບູລີ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ, ພັດທະນາພະນັກງານນຳພາ, ຄຸ້ມຄອງໃຫ້ມີຄຸນສົມບັດດີ, ມີຄວາມຮູ້, ຄວາມສາມາດໃນການຄຸ້ມຄອງບໍລິຫານ, ນຳພາ-ຊີ້ນຳຈັດຕັ້ງປະຕິບັດວຽກງານທີ່ຕົນຮັບຜິດຊອບມີປະສິດທິພາບ ແລະ ປະສິດທິຜົນ, ພັດທະນາພະນັກງານວິຊາການທີ່ເຮັດວຽກງານຊາວໜຸ່ມ-ເຍົາວະຊົນໃຫ້ມີຄຸນສົມບັດດີ, ມີຄວາມຮູ້, ຄວາມສາມາດ, ມີຄວາມຊຳນານງານ, ມີຈຳນວນພຽງພໍຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານໃນແຕ່ລະໄລຍະ.

**ສາມ:** ສືບຕໍ່ສຸມໃສ່ສ້າງພະນັກງານພາຍໃນຄະນະຊາວໜຸ່ມແຂວງໄຊຍະບູລີໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ກາຍເປັນຄົນທີ່ຮັກມັກໃນອາຊີບຂອງຕົນ; ເອົາໃຈໃສ່ກໍ່ສ້າງ ແລະ ບຳລຸງພະນັກງານພາຍໃນຄະນະຊາວໜຸ່ມແຂວງໄຊຍະບູລີ ໃຫ້ມີຄວາມຮູ້ທາງດ້ານທິດສະດີ ແລະ ມີຄວາມສາມາດວິຊາສະເພາະເພື່ອຮັບປະກັນບົດບາດການນຳພາໃນແຕ່ລະຂົງເຂດວຽກງານ; ພ້ອມທັງຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ໃນຖັນແຖວສະມາຊິກພັກ-ພະນັກງານຂອງຄະນະຊາວໜຸ່ມແຂວງໄຊຍະບູລີໃຫ້ຫຼຸດໜ້ອຍຖອຍລົງ.

**ສີ່:** ປັບປຸງກົນໄກປະສານງານລະຫວ່າງຄະນະຊາວໜຸ່ມແຂວງໄຊຍະບູລີ ກັບຄະນະຊາວໜຸ່ມແຕ່ລະຂັ້ນໃຫ້ນັບມື້ດີຂຶ້ນ ແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານຊາວໜຸ່ມກາຍເປັນຂະບວນການຟົດຟື້ນ, ມີຜົນສະທ້ອນທີ່ແຂງແຮງຕໍ່ການພັດທະນາປະເທດຊາດ.

**ຫ້າ:** ປັບປຸງຮູບການ ແລະ ວິທີການເຄື່ອນໄຫວວຽກງານພົວພັນ-ຮ່ວມມືກັບຕ່າງປະເທດໂດຍເອົາໃຈໃສ່ຜັນຂະຫຍາຍຍຸດທະສາດການເຊື່ອມໂຍງ ແລະ ການເຊື່ອມຈອດພາກພື້ນກັບສາກົນຂອງພັກ ແລະ ລັດ, ເພີ່ມມິດໃນສາກົນຢ່າງກວ້າງຂວາງ, ການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍເພື່ອຍາດແຍ່ງບົດຮຽນ, ທຶນຮອນ, ວັດຖຸອຸປະກອນເຂົ້າໃນວຽກງານຊາວໜຸ່ມໃຫ້ນັບມື້ຫຼາຍຂຶ້ນ.

**ສັງລວມແລ້ວ,** ຊາວໜຸ່ມແມ່ນກຳລັງການຜະລິດຕົ້ນຕໍຂອງສັງຄົມ, ແມ່ນກຳລັງທີ່ໄວ້ເນື້ອເຊື່ອໃຈຂອງພັກ, ເປັນກຳລັງແຂນຂວາທີ່ເອົາການເອົາງານ, ເປັນກຳລັງໜູນທີ່ແຂງແກ່ນໜຸ່ມແໜ້ນ, ວ່ອງໄວ, ສະຫຼາດສະຫຼຽວຂອງຊາດເປັນຜູ້ສືບທອດພາລະກິດຂອງພັກ. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວແມ່ນໜຶ່ງໃນອົງການຈັດຕັ້ງມະຫາຊົນໃນລະບົບການເມືອງຂອງລະບອບປະຊາທິປະໄຕ ປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ສະນັ້ນ, ການຍົກສູງຄຸນນະພາບການຈັດຕັ້ງປະຕິບັດວຽກງານຊາວໜຸ່ມແມ່ນວຽກງານໜຶ່ງທີ່ສຳຄັນ, ແນໃສ່ພັດທະນາຄວາມຮູ້, ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດໃຫ້ແກ່ຖັນແຖວຊາວໜຸ່ມ-ເຍົາວະຊົນ ແລະ ອະນຸຊົນໃນຂອບເຂດທົ່ວແຂວງໃຫ້ກາຍເປັນກຳລັງແຮງສຳຄັນໃນການຂັບເຄື່ອນວຽກງານຊາວໜຸ່ມ ໃຫ້ບັນລຸຕາມເປົ້າໝາຍຢ່າງເນື່ອງນິດລຽນຕິດ, ມີຜົນສຳເລັດ ແລະ ກາຍເປັນກຳລັງທີ່ເຂັ້ມແຂງ, ເປັນກຳລັງທີ່ໄວ້ເນື້ອເຊື່ອໃຈ ແລະ ກາຍເປັນຜູ້ສືບພາລະກິດປະຕິວັດຂອງພັກຢ່າງແທ້ຈິງ...ຯ

# ເພີ່ມທະວີຄວາມຮັບຜິດຊອບ ຂອງຄະນະພັກແຕ່ລະຂັ້ນ ຕໍ່ວຽກງານປ້ອງກັນພັກ ຢູ່ແຂວງສາລະວັນ

ໂດຍ: ສຸກສະເຫຼີມພອນ ໄມມະນີ

ປະຈຸບັນ, ສະພາບການຂອງໂລກ ແລະ ພາກພື້ນ ໄດ້ສົ່ງຜົນສະທ້ອນໃຫ້ແກ່ການກໍ່ສ້າງສັງຄົມນິຍົມ ແລະ ມີການຜັນແປໄປຢ່າງສັບສົນມີທ່າອ່ຽງ ເພື່ອແບ່ງໂລກອອກເປັນຫຼາຍຂົ້ວ, ຫຼາຍກຸ່ມ ແລະ ບັນດາຂະບວນການຕ່າງໆ. ພ້ອມດຽວກັນນັ້ນ, ພວກຈັກກະພັດ ແລະ ພວກອິດທິກຳລັງປໍລະປັກ ຍັງສືບຕໍ່ບິດເບືອນລັດທິມາກ-ເລນິນ ຢ່າງບັງອາດເປີດແປນ ທັງເພີ່ມທະວີເລ່ລ່ຽມກົນອຸບາຍ ດ້ວຍຫຼາຍຮູບ, ຫຼາຍສີ ຫຼາຍວິທີ ເພື່ອຫວັງລົບລ້າງບັນດາປະເທດທີ່ຍັງເດີນຕາມເສັ້ນທາງສັງຄົມນິຍົມໃຫ້ໝົດໄປ. ສຳລັບ ສປປ ລາວ ພວກສັດຕູ ແລະ ພວກອິດທິກຳລັງປໍລະປັກຍັງອອກແຮງເຄື່ອນໄຫວມ້າງເພທຳລາຍລະບອບໃໝ່ ຂອງພວກເຮົາໃນທຸກດ້ານເປັນຕົ້ນ ແມ່ນພວກເຂົາໄດ້ໂຄສະນາທັບຖົມ ແລະ ໃສ່ຮ້າຍປ້າຍສີການນຳພາຂອງພັກ, ການຄຸ້ມຄອງຂອງລັດ, ແບ່ງແຍກຄວາມສາມັກຄີພາຍໃນ, ສວຍໃຊ້ບັນຫາສິດທິມະນຸດ, ບັນຫາປະຊາທິປະໄຕ, ບັນຫາຊົນເຜົ່າ-ສາສະໜາ ເປັນເຄື່ອງມືຍຸຍົງສົ່ງເສີມໃຫ້ກະທຳສິ່ງຫຍໍ້ທໍ້ຕ່າງໆ, ນຳໃຊ້ກົນໄກເສດຖະກິດຕະຫຼາດ ເພື່ອສ້າງຄວາມວຸ້ນວາຍສັບສົນ ແລະ ບັນຫາອື່ນໆ.

ວຽກງານປ້ອງກັນພັກ ແມ່ນວຽກງານທີ່ມີຄວາມສຳຄັນຕັດສິນ ໃນການນຳພາຂອງພັກກໍຄືການປັບປຸງກໍ່ສ້າງພັກໃຫ້ປອດໃສ, ໜັກແໜ້ນ ທາງດ້ານການເມືອງ, ແນວຄິດ, ແມ່ນໜ້າທີ່ພື້ນຖານຍາວນານ ແລະ ເປັນວຽກງານສຳຄັນຕົ້ນຕໍ ຂອງຄະນະພັກທຸກຂັ້ນ; ວຽກງານປ້ອງກັນພັກ ແມ່ນໜຶ່ງໃນບັນດາວຽກງານກໍ່ສ້າງພັກ ມີໜ້າທີ່ເຮັດວຽກງານປົກປ້ອງ ແລະ ກວດກາ ການປະຕິບັດແນວທາງ ແລະ ນຳເອົາແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ໄປສຶກສາອົບຮົມໃຫ້ຖັນແຖວສະມາຊິກພັກ, ພະນັກງານ-ລັດຖະກອນ ໃຫ້ມີຄວາມຮັບຮູ້ເຊື່ອມຊຶມ ເພື່ອປັບປຸງຍົກສູງລະດັບຄວາມຮູ້ ດ້ານການເມືອງ, ດ້ານຄຸນສົມບັດສິນທຳປະຕິວັດ ກຽມພ້ອມຕອບຕ້ານທຸກກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ ເປັນຕົ້ນ ແມ່ນການພັດທະນາເສດຖະກິດ-ສັງຄົມ ໂດຍສະເພາະແມ່ນໃນເງື່ອນໄຂປະຈຸບັນ ເຊິ່ງພວກເຮົາກຳລັງຢູ່ໃນໄລຍະ ສືບຕໍ່ດຳເນີນພາລະກິດປ່ຽນແປງໃໝ່ຢ່າງຮອບດ້ານທີ່ມີຫຼັກການຂອງພັກ ເຊິ່ງລວມມີທັງການປ່ຽນແປງໃໝ່ທາງດ້ານເສດຖະກິດ-ການເມືອງໃນທ່າມກາງທີ່ສະຖານະການຂອງໂລກ ມີການຜັນແປຢ່າງສັບສົນ ເຊິ່ງມັນໄດ້ກາຍ ເປັນທັງກາລະໂອກາດ ອັນ

ດີທີ່ເອື້ອຍອຳນວຍຄວາມສະດວກ ແລະ ພ້ອມດຽວກັນນີ້ຊ້ຳພັດກາຍເປັນອຸປະສັກ, ຂໍ້ຫຍຸ້ງຍາກ, ເປັນສິ່ງທ້າທາຍຕໍ່ບາດກ້າວເດີນ ຂອງການປະຕິວັດຂອງພັກເຮົາ ເວົ້າລວມ, ເວົ້າສະເພາະ ແມ່ນການປົກປັກຮັກສາ ແລະ ສ້າງສາພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ແລະ ໃນນັ້ນ, ແຂວງສາລະວັນກໍ່ແມ່ນແຂວງໜຶ່ງທີ່ໄດ້ຮັບຜົນກະທົບຈາກສະພາບດັ່ງກ່າວ.

ໂດຍຢືນຕໍ່ໜ້າສະພາບການດັ່ງກ່າວ, ໃນໄລຍະຜ່ານມາ ຄະນະບໍລິຫານງານພັກແຂວງສາລະວັນ ໄດ້ເອົາໃຈໃສ່ຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນນັ້ນກໍ່ໄດ້ເນັ້ນແລະເອົາໃຈໃສ່ເປັນສຳຄັນຕໍ່ວຽກງານປ້ອງກັນພັກ-ພະນັກງານ ໃນໄລຍະໃໝ່, ປະຕິບັດຢ່າງເຄັ່ງຄັດຕໍ່ກົດລະບຽບພັກ, ຄຳສັ່ງເລກທີ 01/ກມສພ, ລົງວັນທີ 03 ມັງກອນ 2018 ວ່າດ້ວຍ ການເພີ່ມທະວີການກໍ່ສ້າງໜ່ວຍພັກ ປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຄຳສັ່ງເລກທີ 064/ກມສພ, ລົງວັນທີ 09 ເມສາ 2019 ວ່າດ້ວຍ ວຽກງານຂະຫຍາຍພັກ; ພ້ອມກັນນັ້ນກໍ່ໄດ້ຊຸກຍູ້ຄະນະພັກແຕ່ລະຂັ້ນ ເອົາໃຈໃສ່ສຶກສາອົບຮົມຖັນແຖວພະນັກງານ-ສະມາຊິກພັກ ໃຫ້ມີສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບວິໄນຂອງພັກ, ກົດໝາຍຂອງລັດ ແລະ ເປັນເຈົ້າການປ້ອງກັນແນວທາງນະໂຍບາຍຂອງພັກ, ສາມາດຕ້ານໄດ້ການບິດເບືອນໃສ່ຮ້າຍ ຂອງພວກສັດຕູ ແລະ ຄົນບໍ່ດີທີ່ຫວັງທຳລາຍພັກ ພ້ອມທັງເປັນການຍົກສູງບົດບາດນຳໜ້າ ເປັນແບບຢ່າງຂອງຄະນະພັກ, ສະມາຊິກພັກ ເຮັດໃຫ້ກົງຈັກການຈັດຕັ້ງຂອງພັກ ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ນຳພາເຄື່ອນໄຫວຖືກຕ້ອງຕາມແນວທາງແຜນນະໂຍບາຍ ຂອງພັກ ວາງອອກໃນແຕ່ລະໄລຍະ. ແຂວງສາລະວັນປະກອບມີ 08 ອົງຄະນະພັກເມືອງ, 02 ຄະນະພັກກຳລັງປະກອບອາວຸດ (ກອງບັນຊາການທະຫານແຂວງ ແລະ ປກສແຂວງ), ມີການຈັດຕັ້ງຮາກຖານພັກທັງໝົດ 1.063 ຮາກຖານ, ໃນນັ້ນ: ຄະນະພັກຮາກຖານມີ 43 ຮາກຖານ ແລະ ໜ່ວຍພັກມີ 1.020 ໜ່ວຍພັກ; ຜ່ານການຕີລາຄາຈັດປະເພດໜ່ວຍພັກ ປີ 2022 ສາມາດຢັ້ງຢືນເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໄດ້ທັງໝົດ 733 ໜ່ວຍ; ທົ່ວແຂວງ ມີສະມາຊິກພັກທັງໝົດ 15.733 ສະຫາຍ, ຍິງ 3.739 ສະຫາຍ, ໃນນັ້ນ ສະມາຊິກພັກສົມບູນມີ 14.538 ສະຫາຍ, ຍິງ 3.353 ສະຫາຍ ແລະ ສຳຮອງມີ 1.195 ສະຫາຍ, ຍິງ 386 ສະຫາຍ; ອອກບັດ-ມອບບັດ ໃຫ້ສະມາຊິກພັກສົມບູນໄດ້ທັງໝົດ 11.886 ສະຫາຍ ຍິງ 2.320 ສະຫາຍ; ຕີລາຄາຈັດປະເພດ ສະມາຊິກພັກ ປະເພດແຂງ 13.113 ສະຫາຍ, ຍິງ 3.133 ສະຫາຍ; ປະເພດກາງ 1.869 ສະຫາຍ, ຍິງ 445 ສະຫາຍ; ປະເພດອ່ອນ 49 ສະຫາຍ, ຍິງ 5 ສະຫາຍ; ບໍ່ໄດ້ຈັດປະເພດ 702 ສະຫາຍ, ຍິງ 142 ສະຫາຍ ( ສ່ວນຫຼາຍ ແມ່ນໜ່ວຍຮາກຖານບ້ານ).

ໄປຄຽງຄູ່ກັບດ້ານດີ ແລະ ຜົນສຳເລັດທີ່ຍາດມາໄດ້ນັ້ນ, ວຽກງານປ້ອງກັນພັກຢູ່ແຂວງສາລະວັນ ຍັງມີຂໍ້ຄົງຄ້າງຈຳນວນໜຶ່ງ ທີ່ຕ້ອງເອົາໃຈໃສ່ແກ້ໄຂໃນຕໍ່ໜ້າ ເປັນຕົ້ນ: ການສຶກສາອົບຮົມດ້ານການເມືອງ-ແນວຄິດໃຫ້ພະນັກງານ, ສະມາຊິກພັກ, ປ້ອງກັນລັດທິມາກ-ເລນິນ ແລະ ແນວທາງ, ແຜນນະໂຍບາຍຂອງພັກ ຍັງບໍ່ທັນໄດ້ດີ, ຍັງບໍ່ທັນເລິກເຊິ່ງ ແລະ ບໍ່ທັນທົ່ວເຖິງແຕ່ລະເປົ້າໝາຍ; ການຈັດຕັ້ງນຳພາຂອງຄະນະພັກແຕ່ລະຂັ້ນ ໂດຍສະເພາະ ແມ່ນຂັ້ນຮາກຖານ ຍັງບໍ່ທັນໄດ້ເສີມຂະຫຍາຍ, ກຳແໜ້ນຄວາມສຳຄັນຂອງວຽກງານການນຳພາ, ການປ້ອງກັນພັກ, ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ວຽກງານຂະຫຍາຍພັກ,

ຄວາມເປັນເຈົ້າການໃນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ພາຍໃນພັກ, ພາຍໃນຖັນແຖວສະມາຊິກພັກ ຍັງບໍ່ທັນໄດ້ມີການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ເຊິ່ງສະແດງອອກ:

1). ວຽກງານຂະຫຍາຍພັກ ບາງບ່ອນບໍ່ຖືກຕາມກົດລະບຽບພັກ, ການຄົ້ນຄວ້າ, ການເລືອກເຟັ້ນເປົ້າໝາຍຂະຫຍາຍເຂົ້າພັກບໍ່ຖືກຕ້ອງຕາມລະບຽບຫຼັກການທີ່ໄດ້ກຳນົດໄວ້ ໃນກົດລະບຽບພັກ, ມີລັກສະນະຄົນເຈົ້າຄົນຂ້ອຍ, ເບິ່ງແຕ່ຜູ້ໃກ້ຊິດຕົນເອງ, ບໍ່ອີງໃສ່ມາດຕະຖານ, ເງື່ອນໄຂ; ການສຶກສາອົບຮົມສ້າງຄວາມຮັບຮູ້ເຂົ້າໃຈທີ່ຖືກຕ້ອງເຖິງວັດຖຸປະສົງເຂົ້າພັກບໍ່ເລິກເຊິ່ງເຖິງຖອງ, ຈຳນວນໜຶ່ງເຂົ້າພັກແລ້ວຂາດຄວາມບຸກບືນ.

2). ເກີດມີປະກົດການ ການຈັດຕັ້ງພັກ ແລະ ສະມາຊິກພັກຢູ່ຮາກຖານພັກບາງຮາກຖານ ເຄື່ອນໄຫວບໍ່ສອດຄ່ອງກັບກົດລະບຽບພັກ, ກະທຳຜິດ, ຝ່າຝືນ, ລະເມີດຕໍ່ລະບຽບຫຼັກການ, ລະບຽບກົດໝາຍ ເຮັດໃຫ້ມະຫາຊົນ ກໍ່ຄືພໍ່ແມ່ປະຊາຊົນ ຂາດຄວາມເຊື່ອໝັ້ນໄວ້ວາງໃຈຕໍ່ບົດບາດການນຳພາຂອງພັກ.

ເພື່ອປັບປຸງແກ້ໄຂ, ຕ້ານ ແລະ ສະກັດກັ້ນບໍ່ໃຫ້ເກີດບັນຫາຕ່າງໆທີ່ກະທົບຕໍ່ແນວທາງລວມຂອງພັກທັງຕອບສະໜອງໄດ້ກັບໜ້າທີ່ການເມືອງ ຂອງພັກໃນສະເພາະໜ້າ ແລະ ຍາວນານ, ດັ່ງນັ້ນ ຈຶ່ງມີຄວາມຈຳເປັນຕ້ອງເລັ່ງທວງໃຫ້ຄະນະພັກແຕ່ລະຂັ້ນ ຕ້ອງສຸມໃສ່ປັບປຸງວຽກງານປ້ອງກັນພັກໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ຢ່າງຕໍ່ເນື່ອງ ແລະ ຮັບປະກັນທາງດ້ານຄຸນນະພາບ. ເພື່ອເຮັດສຳໜ້າທີ່ດັ່ງ ກ່າວຜູ້ຂຽນມີບາງທັດສະນະດັ່ງນີ້:

1). ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ສຶກສາອົບຮົມໃຫ້ຖັນແຖວພະນັກງານ-ສະມາຊິກພັກ ຄົ້ນຄວ້າກຳແໜ້ນບັນຫາພື້ນຖານທິດສະດີມາກ-ເລນິນ, ແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍຂອງລັດ, ຕິດພັນກັບການເປີດບັ້ນດຳເນີນຊີວິດການເມືອງໃຫ້ທົ່ວເຖິງ ແລະ ກວ້າງຂວາງ ເພື່ອແນໃສ່ປັບປຸງພາຍໃນພັກ, ພະນັກງານ-ສະມາຊິກພັກ ໃຫ້ໜັກແໜ້ນເປັນເອກະພາບ ທາງດ້ານການເມືອງ-ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ຍົກສູງສະຕິຄວາມເປັນແບບຢ່າງນຳໜ້າ ຂອງພະນັກງານ, ສະມາຊິກພັກ, ຍົກສູງສະຕິຕໍ່ການຈັດຕັ້ງລະບຽບວິໄນ ແລະ ຕໍ່ກົນອຸບາຍ "ຫັນປ່ຽນໂດຍສັນຕິ" ຂອງສັດຕູ, ສະມາຊິກພັກມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ຕໍ່ອຸດົມການສັງຄົມນິຍົມ, ມີຄວາມຊື່ສັດບໍລິສຸດ, ຈົງຮັກພັກດີຕໍ່ຊາດ ແລະ ຕໍ່ປະຊາຊົນຢ່າງແທ້ຈິງ.

2). ການປະຕິບັດວຽກງານປ້ອງກັນພັກ ຕ້ອງໄປພ້ອມກັບການປັບປຸງກົງຈັກການຈັດຕັ້ງ ໃນລະບົບການເມືອງ, ການປັບປຸງກົງຈັກການຈັດຕັ້ງພັກ ຕ້ອງຖືເອົາວຽກງານປັບປຸງກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນຂອດໃຈກາງເພື່ອກໍ່ສ້າງຮາກຖານພັກໃຫ້ເຂັ້ມແຂງ, ເນື້ອໃນການປັບປຸງໜ່ວຍພັກມີຫຼາຍບັນຫາເຊັ່ນ: ການກຳນົດໜ້າທີ່ການເມືອງ ຂອງໜ່ວຍພັກ, ບັນຫາຮັບປະກັນລະບອບ ແລະ ຄຸນນະພາບການດຳເນີນຊີວິດການເມືອງ ປະຕິບັດບັນດາຫຼັກການກໍ່ສ້າງພັກເຊິ່ງແກນໃນຂອງພັກ ແມ່ນຫຼັກການລວມສູນປະຊາທິປະໄຕ, ການຍົກສູງຄຸນນະພາບ ຂອງສະມາຊິກພັກ ແລະ ອື່ນໆ ແມ່ນມີຄວາມຈຳເປັນສຳຄັນຕໍ່ການປັບປຸງໜ່ວຍພັກ.

3). ວຽກງານປ້ອງກັນພັກ ຕ້ອງປະຕິບັດຢ່າງເຂັ້ມງວດຕໍ່ຫຼັກການຂອງພັກ ກໍ່ຄືຫຼັກການລວມສູນປະຊາທິປະໄຕ ເປັນເອກະພາບແຕ່ເທິງລົງລຸ່ມ ໃນການປ້ອງກັນ

ແນວທາງແຜນນະໂຍບາຍຂອງພັກ, ການຈັດຕັ້ງພັກ ແລະ ສະມາຊິກຂອງຕົນ ຕາມການແບ່ງສິດຄຸ້ມຄອງ ໃຫ້ແໜ້ນ ດ້ວຍວິທີກຳການເຄື່ອນໄຫວປະຕິບັດໜ້າທີ່ການເມືອງ, ຍິ່ງເປັນພະນັກງານ; ສະມາຊິກພັກຫຼັກແຫຼ່ງສຳຄັນເທົ່າໃດກໍ່ຍິ່ງຄຸ້ມຄອງຕິດຕາມ, ກວດກາຢ່າງເຂັ້ມງວດ ໝາຍຄວາມວ່າຄຸ້ມຄອງທັງວຽກຄຸ້ມຄອງທັງຄົນໄປພ້ອມໆກັນ, ຕັ້ງໜ້າປະຕິບັດການກວດກາຂອງການຈັດຕັ້ງ ຕໍ່ບຸກຄົນ, ການກວດກາລະຫວ່າງການຈັດຕັ້ງດ້ວຍກັນ ແລະ ການກວດກາຂອງຂັ້ນລຸ່ມຕໍ່ຂັ້ນເທິງ.

4). ວຽກງານປ້ອງກັນພັກ ຕ້ອງຕິດແໜ້ນກັບການກວດກາ; ກວດການ ເມື່ອເຫັນບັນຫາແລ້ວຕ້ອງແກ້ໄຂໃຫ້ຕົກຢ່າງຂາດຕົວ ທັງບໍ່ປະໃຫ້ແກ່ຍືດແກ່ຍາວໄປ ທັງນີ້ກໍ່ເພື່ອສຶກສາອົບຮົມຊ່ວຍເຫຼືອກໍ່ສ້າງກັນ ແນໃສ່ປົກປັກຮັກສາ ແລະ ປ້ອງກັນການຈັດຕັ້ງ, ຖັນແຖວພະນັກງານ, ສະມາຊິກພັກ. ການປ້ອງກັນແມ່ນການກຳແໜ້ນທາງດ້ານສະຖິຕິ, ຊີວະປະຫວັດຕົ້ນກຳເນີດ, ຄຸນນະພາບການເຄື່ອນໄຫວ, ຈຸດພິເສດດ້ານການເມືອງ ແນວຄິດ, ຄວາມຮູ້, ຄວາມສາມາດ ເພື່ອບໍ່ໃຫ້ພວກສວຍໂອກາດເລັດລອດ ເຂົ້າໃນການຈັດຕັ້ງຂອງພັກ ທັງເປັນການຕອບຕ້ານສັດຕູພາຍໃນ ທີ່ເກີດນຳກະໂຕສະມາຊິກພັກ ແລະ ສັດຕູພາຍນອກ.

**ສັງລວມແລ້ວ** ວຽກງານປ້ອງກັນພັກ ແມ່ນໜຶ່ງໃນວຽກງານກໍ່ສ້າງພັກ ທີ່ມີຄວາມໝາຍສຳຄັນໃນການປ້ອງກັນແນວທາງການເມືອງຂອງພັກ, ອົງການຈັດຕັ້ງພັກ ເຮັດໃຫ້ລະບົບການຈັດຕັ້ງພັກ ມີຄວາມປອດໃສ, ໜັກແໜ້ນ ແລະ ເຂັ້ມແຂງ, ຖັນແຖວພະນັກງານ-ສະມາຊິກພັກ ມີທາດແທ້ຫຼັກໝັ້ນຊຶນຊັ້ນ, ມີຈຸດີມການການເມືອງທີ່ໜັກແໜ້ນ, ມີຄວາມຈົງຮັກພັກດີຕໍ່ປະເທດຊາດ ແລະ ພາລະກິດຂອງພັກ, ມີນ້ຳໃຈຮັບໃຊ້ຊາດ ແລະ ຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດໃຈ, ທັງມີການປະພຶດຖືກຕ້ອງຕາມກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ, ພ້ອມກັນນັ້ນ ວຽກງານປ້ອງກັນພັກຍັງໄດ້ປ້ອງກັນບໍ່ໃຫ້ອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ ທີ່ຫວັງເລັດລອດແຊກຊຶມເຂົ້າໃນການຈັດຕັ້ງຂອງພັກ, ມ້າງເພທຳລາຍພັກ; ຍົກສູງສະຕິລະວັງຕົວ ເພື່ອສະກັດກັ້ນ ແລະ ຕອບຕ້ານຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູຢ່າງທັນການ, ພິເສດແມ່ນສະກັດກັ້ນການເສື່ອມຖອຍ ແລະ ປ້ອງກັນການຫັນປ່ຽນດ້ວຍຕົນເອງ, ແນໃສ່ສຶກສາອົບຮົມຖັນແຖວພະນັກງານ-ສະມາຊິກພັກ ໃຫ້ມີສະຕິປະຕິວັດປ້ອງກັນຕົນເອງ ເຮັດສຳເລັດໜ້າທີ່ການເມືອງຂອງຕົນຮັບຜິດຊອບ.

ເພີ່ມທະວີວຽກງານປ້ອງກັນພັກ ເນື້ອແທ້ກໍ່ແມ່ນຍຶດໝັ້ນລັດທິມາກ-ເລນິນ, ຍົກສູງບົດບາດຄວາມສາມາດນຳພາຂອງພັກ, ໂດຍຖືເອົາຄຸນນະພາບເປັນກົກດ້ວຍການປັບປຸງການຈັດຕັ້ງໃຫ້ໜັກແໜ້ນເຂັ້ມແຂງ, ຮັກສາບົດບາດນຳໜ້າເປັນແບບຢ່າງຂອງສະມາຊິກພັກຢູ່ໃນຂະບວນການຂອງມະຫາຊົນ, ກວດກາເຂັ້ມງວດໃນການຮັບເອົາຄົນເຂົ້າພັກ ທັງແກ້ໄຂຜູ້ທີ່ຝ່າຝືນ ລະບຽບວິໄນຂອງພັກ ແລະ ກົດໝາຍຂອງລັດຢ່າງທັນການ, ເດັດດ່ຽວຕ້ານລັດທິສວຍໂອກາດທຸກຮູບແບບ. ສະນັ້ນ ຄະນະພັກແຕ່ລະຂັ້ນ ຈຶ່ງມີຄວາມຈຳເປັນ ແລະ ມີຄວາມຮັບຜິດຊອບເຮັດວຽກງານປ້ອງກັນພັກໃຫ້ເຖິງຖອງ...ຯ

# ຄະນະພັກຫ້ອງພະລາທິການ ປກສ ແຂວງຈຳປາສັກ ຖືເອົາການຍົກສູງຄຸນນະພາບສະມາຊິກພັກ ເພື່ອຮັບປະກັນ ບົດບາດການນຳພາຂອງພັກ

ໂດຍ: ແກ້ວປະສິດ ຈັນທະພິມ

ໃນກົດລະບຽບພັກ ສະໄໝທີ XI ຂອງພັກປະຊາຊົນປະຕິວັດລາວ ໄດ້ລະບຸໃນໝວດທີ 1, ມາດຕາ 1 ກ່ຽວກັບມາດຕະຖານຂອງສະມາຊິກພັກໄວ້ວ່າ: ສະມາຊິກພັກປະຊາຊົນປະຕິວັດລາວ ແມ່ນນັກຮົບປະຕິວັດໃນກອງນຳໜ້າຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານ ແລະ ປະຊາຊົນລາວບັນດາເຜົ່າ, ແມ່ນຜູ້ມີນ້ຳໃຈເສຍສະຫຼະສູງ ເພື່ອປະເທດຊາດ, ເພື່ອປະຊາຊົນ, ມີຄວາມຮັບຜິດຊອບສູງ ຕໍ່ໜ້າທີ່ວຽກງານ, ບຸກບືນສູ້ຊົນ ເພື່ອບັນລຸອຸດົມການຂອງພັກ; ແມ່ນຜູ້ທີ່ດຸໝັ່ນ, ປະຢັດ, ບໍລິສຸດ, ສັດຊື່, ຮັບໃຊ້ປະຊາຊົນ, ຈົງຮັກພັກດີ ຕໍ່ອຸດົມການຂອງພັກ ແລະ ປົກປັກຮັກສາຄວາມສາມັກຄີເປັນເອກະພາບພາຍໃນພັກ; ແມ່ນຜູ້ທີ່ຖືເອົາຜົນປະໂຫຍດລວມຂອງຊາດ, ຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານ ແລະ ປະຊາຊົນລາວບັນດາເຜົ່າ ສູງກວ່າຜົນປະໂຫຍດສ່ວນຕົວ; ແມ່ນຜູ້ທີ່ມີທັດສະນະມະຫາຊົນ, ພົວພັນສະໜິດແໜ້ນກັບມະຫາຊົນ, ເຄື່ອນໄຫວຕາມແນວທາງມະຫາຊົນຂອງພັກ, ໄດ້ຮັບຄວາມເຊື່ອຖື, ໄວ້ວາງໃຈຈາກການຈັດຕັ້ງພັກ ແລະ ມະຫາຊົນ; ແມ່ນຜູ້ທີ່ເປັນແບບຢ່າງທີ່ດີໃນການປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ ຢ່າງເຂັ້ມງວດ; ແມ່ນຜູ້ທີ່ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງໃນທຸກດ້ານ, ບຸກບືນຮ່ຳຮຽນຍົກລະດັບ, ຫ້າວຫັນປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ; ເຄົາລົບ, ປະຕິບັດກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ; ດຸໝັ່ນອອກແຮງງານ, ມີແບບແຜນດຳລົງຊີວິດຖືກຕ້ອງ ແລະ ປອດໃສ.

ເພື່ອຮັບປະກັນເຮັດໃຫ້ພັກປະຕິບັດໜ້າທີ່ຂອງຕົນຢ່າງສົມກຽດ ເຮັດລ້ອນໜ້າທີ່ ທີ່ປະເທດຊາດ ແລະ ປະຊາຊົນມອບໝາຍໃຫ້ປະກົດຜົນເປັນຈິງນັ້ນ. ພັກປະຊາຊົນປະຕິວັດລາວ ຕ້ອງຖືເອົາການກໍ່ສ້າງ, ປັບປຸງຕົນເອງ ຕາມ 5 ຫຼັກການ ແລະ 3 ທິດນຳ ໃນການກໍ່ສ້າງພັກ ຕ້ອງຖືເອົາຄຸນນະພາບເປັນກົກ, ຮັບເອົາຜູ້ດີເດັ່ນ, ມີມາດຕະຖານ ແລະ ເງື່ອນໄຂຄົບຖ້ວນເຂົ້າເປັນສະມາຊິກພັກໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້ ເພື່ອກາຍເປັນກຳລັງແຮງທີ່ສຳຄັນໃຫ້ແກ່ການຊີ້ນຳ-ນຳພາ ຂອງການຈັດຕັ້ງພັກແຕ່ລະຂັ້ນ ເຮັດຫຼ້ອນໜ້າທີ່ທີ່ພັກ-ລັດ ແລະ ປະຊາຊົນມອບໝາຍໃຫ້ມີຜົນສຳເລັດເຊິ່ງໃນນັ້ນ, ເພື່ອເປັນທິດໃນການຈັດຕັ້ງປະຕິບັດ ໃນມະຕິກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ ໄດ້ວາງທິດທາງເພື່ອສືບຕໍ່ສ້າງຄວາມເຂັ້ມແຂງ ຂອງການຈັດຕັ້ງພັກແຕ່ລະຂັ້ນ ແລະ ຍົກສູງຄຸນນະພາບສະມາຊິກພັກໄວ້ວ່າ: ເອົາໃຈໃສ່ຍົກສູງຄຸນນະພາບຂອງສະມາຊິກພັກ ຕິດພັນກັບເພີ່ມທະວີການຄຸ້ມຄອງດ້ານລະບຽບວິໄນ, ຊຸກຍູ້ສົ່ງເສີມຂະບວນການຝຶກຝົນຫຼໍ່ຫຼອມດ້ານຄຸນທາດການເມືອງ ແລະ ຄຸນສົມບັດສິນທຳ

ປະຕິວັດຕິດພັນກັບການສຶກສາອົບຮົມແນວຄິດ ແລະ ຄຸນສົມບັດສິນທໍາປະຕິວັດ ຂອງປະທານ ໄກສອນ ພົມວິຫານ, ພັດທະນາດ້ານຄວາມຮູ້ ແລະ ປະສົບການໃນການເຄື່ອນໄຫວນໍາພາການເມືອງ ແລະ ວິຊາສະເພາະໃຫ້ສະມາຊິກພັກສູງຂຶ້ນເລື້ອຍໆ. ໃນການຂະຫຍາຍສະມາຊິກພັກໃໝ່ ຕ້ອງຖືຄຸນນະພາບເປັນກົກ, ເດັດດ່ຽວແກ້ໄຂສະມາຊິກພັກ ທີ່ເສຍທາດຂາດຄຸນ, ຂາດສະຕິຮັບຜິດຊອບຕໍ່ໜ້າທີ່ ແລະ ຂາດຄວາມເປັນແບບຢ່າງໃນການດໍາລົງຊີວິດ ຫຼື ມີການລະເມີດວິໄນຂອງພັກ ແລະ ກົດໝາຍຂອງລັດ ອອກຈາກການຈັດຕັ້ງດ້ວຍວິທີການ ແລະ ມາດຕະການຕົວຈິງຢ່າງເດັດຂາດ, ເໝາະສົມ ແລະ ທັນການ.

ເພື່ອຈັດຕັ້ງຜັນຂະຫຍາຍເນື້ອໃນຈິດໃຈດັ່ງກ່າວ ຄະນະພັກຮາກຖານຫ້ອງການພະລາທິການ ປ້ອງກັນຄວາມສະຫງົບແຂວງຈໍາປາສັກ ເວລາໃດກໍໄດ້ໃຫ້ຄວາມສໍາຄັນໃນການຍົກສູງຄຸນນະພາບຂອງສະມາຊິກພັກ ເພື່ອຮັບປະກັນເຮັດຫຼ້ອນໜ້າທີ່ ທີ່ພັກ-ລັດມອບໝາຍໃຫ້ ໂດຍສະເພາະແມ່ນ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ອົງຄະນະພັກ ກອງບັນຊາການ ປກສ ແຂວງຈໍາປາສັກ ກໍຄືມະຕິກອງປະຊຸມໃຫຍ່ ຄະນະພັກຮາກຖານ ຄັ້ງທີ I ຂອງຕົນວາງອອກໃຫ້ມີຜົນສໍາເລັດຕາມຄາດໝາຍ.

ຄະນະພັກຮາກຖານ ຫ້ອງພະລາທິການເປັນຄະນະພັກຮາກຖານໜຶ່ງທີ່ຂຶ້ນກັບ ແລະ ຢູ່ພາຍໃຕ້ການຊີ້ນໍາໂດຍກົງ, ເດັດຂາດ, ຮອບດ້ານ ຈາກອົງຄະນະພັກກອງບັນຊາການ ປ້ອງກັນຄວາມສະຫງົບ ແຂວງຈໍາປາສັກ ມີບົດບາດຊີ້ນໍາ-ນໍາພາເລົ່າຮົບວິຊາສະເພາະພະລາທິການ, ໜ້າທີ່ໃນຈັດຕັ້ງປະຕິບັດແຜນງານ, ແຜນການ ເປັນເສນາທິການເປັນເຈົ້າການຄຸ້ມຄອງບໍລິຫານບັນດາວຽກປົ່ນອ້ອມ ຮັບປະກັນການເຄື່ອນໄຫວວຽກງານວິຊາສະເພາະ, ຂຶ້ນແຜນງົບປະມານ, ຄຸ້ມຄອງລາຍຮັບ-ລາຍຈ່າຍງົບປະມານ, ຂຸດຄົ້ນຊອກແຫຼ່ງລາຍຮັບຈາກການຜະລິດ-ທຸລະກິດ, ຄຸ້ມຄອງວັດຖຸອຸ ປະກອບເຕັກນິກ-ພາຫະນະ, ເຄື່ອງຍຸດໂທປະກອນ, ນໍ້າມັນເຊື້ອໄຟ, ເຄື່ອງອຸປະໂພກ-ບໍລິໂພກ, ປິ່ນປົວສຸຂະພາບ-ໂຄສະນາກັນ ແລະ ສະກັດກັ້ນພະຍາດ, ຕອບສະໜອງບ່ອນພັກເຊົາ, ຫ້ອງການເຮັດວຽກ, ຫໍພັກ, ຫ້ອງຮຽນ ແລະ ອື່ນໆ ທັງໝົດເພື່ອຮັບປະກັນໃຫ້ແກ່ການເຄື່ອນໄຫວວຽກງານວິຊາສະເພາະ ຂອງເລົ່າຮົບຕ່າງໆ ເຄື່ອນໄຫວຕາມພາລະບົດບາດປ້ອງກັນຄວາມສະຫງົບ ແຂວງຈໍາປາສັກ ເຮັດໃຫ້ສັງຄົມມີຄວາມສະຫງົບປອດໄພ ເສດຖະກິດຂະຫຍາຍຕົວເປັນກ້າວໆ.

ຄະນະພັກຮາກຖານຫ້ອງພະລາທິການ ປະກອບມີ 4 ໜ່ວຍພັກຂຶ້ນກັບ ຄື: ໜ່ວຍພັກພະແນກກໍ່ສ້າງ-ອຸປະໂພກ; ໜ່ວຍພັກພະແນກເຕັກນິກ-ຍຸດໂທ; ໜ່ວຍພັກພະແນກແຜນການ-ການເງິນ-ຫ້ອງການບໍລິຫານ-ຈັດຕັ້ງ ແລະ ໜ່ວຍພັກພະແນກຄຸ້ມຄອງການຜະລິດ, ທຸລະກິດ-ໂຮງໝໍ-ເສນາຮັກ; ມີ 07 ພະແນກການ ແລະ 01 ໂຮງໝໍ ປກສ 30 ຕຽງ; ມີຄະນະພັກ 05 ສະຫາຍ, ມີສະມາຊິກພັກທັງໝົດ 89 ສະຫາຍ, ຍິງ 25 ສະຫາຍ; ສະມາຊິກພັກສົມບູນ 71 ສະຫາຍ, ຍິງ 21 ສະຫາຍ; ສະມາຊິກພັກສໍາຮອງ 18 ສະຫາຍ, ຍິງ 04 ສະຫາຍ, ມີຈໍານວນພົນທັງໝົດ 117 ສະຫາຍ, ຍິງ 43 ສະຫາຍ.

ຄະນະພັກ, ຄະນະບັນຊາເວລາໃດ ກໍຍຶດໝັ້ນຕາມ 5 ຫຼັກການ 3 ທິດນໍາໃນການກໍ່ສ້າງ, ປັບປຸງຕົນເອງ ຖືເປັນປັດໄຈສໍາຄັນໃນການຂະຫຍາຍພັກໃຫ້ຮັບປະກັນໄດ້ທາງດ້ານປະລິມານ ແລະ ຄຸນນະພາບເປັນກົກ, ໄປພ້ອມກັບການຊຸກຍູ້, ນໍາພາການກໍ່ສ້າງກົມກອງປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ເອົາໃຈໃສ່ຍົກສູງຄຸນນະພາບ ສະມາຊິກພັກ, ເພີ່ມທະວີຄວາມເປັນແບບຢ່າງຂອງສະມາຊິກພັກ, ສ້າງໃຫ້ໄດ້ສະມາຊິກພັກເຂັ້ມແຂງໃຫ້ມີປະລິມານຫຼາຍຂຶ້ນເພື່ອເຮັດໃຫ້ພາຍໃນພັກມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ໄປພ້ອມກັບການປັບປຸງກົງຈັກການຈັດຕັ້ງໃຫ້ສອດຄ່ອງເໝາະສົມ, ຄົ້ນຄວ້າເລືອກເຟັ້ນເອົານາຍ ແລະ ພົນຕໍາຫລວດຜູ້ທີ່ມີເງື່ອນໄຂມາດຖານແຕ່ລະປະເພດ ເພື່ອບໍາລຸງ-ກໍ່ສ້າງ

ໃຫ້ເປັນຜູ້ນຳພາ-ສືບທອດປ່ຽນແທນ ແລະ ບັນຈຸສັບຊ້ອນໃນຕຳແໜ່ງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນສະພາບໃໝ່ ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ໃນຖັນແຖວກຳລັງໃຫ້ຄ່ອຍໆຫຼຸດລົງ ແລະ ໝົດໄປເທື່ອລະກ້າວ ຜ່ານການຊີ້ນຳ-ນຳພາການຈັດຕັ້ງປະຕິບັດ ເຊິ່ງສະແດງອອກໃນຜົນສຳເລັດທີ່ພົ້ນເດັ່ນເຊັ່ນ:

ດ້ານການເມືອງ-ແນວຄິດ, ຄະນະພັກ, ຄະນະບັນຊາໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ກ່ຽວກັບການເພີ່ມທະວີບົດບາດການນຳພາ ຂອງພັກເຂົ້າໃນທຸກຂົງເຂດວຽກງານ, ໂດຍຖືເອົາວຽກງານ ສຶກສາອົບຮົມການເມືອງ-ແນວຄິດເປັນກົກ, ເຮັດໃຫ້ນາຍ ແລະ ພົນຕຳຫຼວດ ມີແນວຄິດການເມືອງໜັກແໜ້ນ, ຍຶດໝັ້ນອຸດົມການຂອງພັກ, ມີຄວາມຈົງຮັກພັກດີຕໍ່ພັກ-ຕໍ່ປະເທດຊາດ, ສາມາດເຄື່ອນໄຫວປະຕິບັດໜ້າທີ່ການເມືອງທີ່ພັກ-ລັດມອບໝາຍໃຫ້ດ້ວຍຄວາມຮັບຜິດຊອບສູງ ເປັນຕົ້ນ: ຈັດຕັ້ງການເຊື່ອມຊຶມຜັນຂະຫຍາຍມະຕິ XI ຂອງສູນກາງພັກ, ມະຕິ VII ຂອງອົງຄະນະພັກແຂວງ, ມະຕິ III ອົງຄະນະພັກກອງບັນຊາການ ປກສ ແຂວງ ແລະ ບັນດາມະຕິ, ຄຳສັ່ງ. ໃນເວລາດຳເນີນຊີວິດການເມືອງແຕ່ລະເດືອນຮັບປະກັນໄດ້ 03 ລັກສະນະ. ໃນນັ້ນ, ໄດ້ນຳພາຮ່ວມຊີວິດການເມືອງປະຈຳເດືອນຂອງຄະນະພັກຮາກຖານ 06 ຄັ້ງ ມີສະມາຊິກພັກເຂົ້າຮ່ວມ 52 ເທື່ອສະຫາຍ, ຍິງ 03 ເທື່ອສະຫາຍ, ເຂົ້າຮ່ວມກອງປະຊຸມບັ້ນດຳເນີນຊີວິດການເມືອງທີ່ຄະນະພັກຂັ້ນເທິງຈັດຂຶ້ນ ແລະ ເຂົ້າຮ່ວມຮັບຟັງວັນສຳຄັນຕ່າງໆຂອງຊາດລວມ 05 ຄັ້ງ ມີສະມາຊິກພັກເຂົ້າຮ່ວມ 46 ເທື່ອສະຫາຍ, ຍິງ 10 ເທື່ອສະຫາຍ; ຄະນະພັກ, ຄະນະບັນຊາ ຍັງໄດ້ເຂົ້າຮ່ວມການເດີນທາງກັບຄະນະນຳກອງບັນຊາການ ປກສ ແຂວງໄປເຮັດວຽກ ຢູ່ປະເທດ ສ ສ ຫວຽດນາມ ຈຳນວນ 04 ຄັ້ງ, ມີຈຳນວນ 07 ເທື່ອສະຫາຍ.

ໄປຄຽງຄູ່ກັບວຽກງານດັ່ງກ່າວ ຄະນະພັກ, ຄະນະບັນຊາຫ້ອງພະລາທິການ ໄດ້ຍົກສູງຄວາມຮັບຜິດຊອບ ໃນການຊີ້ນຳ-ນຳພາບັນດາໜ່ວຍພັກທີ່ຂຶ້ນກັບຕົນໃນວຽກງານກໍ່ສ້າງພັກ ໂດຍສະເພາະແມ່ນວຽກງານຂະຫຍາຍພັກຕິດພັນກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແນໃສ່ຍົກລະດັບຄວາມສາມາດຕົວຈິງໃນການນຳພາ ໂດຍເລີ່ມຈາກການຄຸ້ມຄອງ, ຕິດຕາມການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ, ການພົວພັນສັງຄົມ, ຄວາມເປັນແບບຢ່າງ, ການເຄື່ອນໄຫວທີ່ຕິດພັນກັບຂະບວນການມະຫາຊົນ ໂດຍມອບໝາຍໃຫ້ຄະນະໜ່ວຍພັກ, ສະມາຊິກພັກພາຍ ໃນໜ່ວຍເປັນເຈົ້າການໃນການຄົ້ນຄວ້າ ແລະ ໄດ້ຕີລາຄາຊອກໃຫ້ເຫັນຜົນໄດ້, ຜົນເສຍທ່າຂະຫຍາຍຕົວໃນອະນາຄົດຂອງມະຫາຊົນ ຕິດພັນກັບການສ້າງຜູ້ສືບທອດປ່ຽນແທນ, ມະຫາຊົນທີ່ມີເປົ້າໝາຍຂະຫຍາຍເຂົ້າພັກ ຕ້ອງໄດ້ເຂົ້າຮ່ວມຂະບວນການຝຶກຝົນຫຼໍ່ຫຼອມ ແລະ ທົດສອບໃນຂະບວນການ ຂອງອົງການຈັດຕັ້ງມະຫາຊົນ, ໄດ້ຮັບຄວາມເຊື່ອຖືໄວ້ວາງໃຈ, ມີຄວາມຕື່ນຕົວທາງດ້ານການເມືອງ, ເຊື່ອມຊຶມ, ກຳແໜ້ນອຸດົມການຂອງພັກ, ຜ່ານການທົດສອບ ໃນວຽກງານຕົວຈິງ ສາມາດຮັບປະກັນໄດ້ ດ້ານຄຸນນະພາບ ເຊິ່ງສະແດງອອກໃນປີ 2022 ໄດ້ຄົ້ນຄວ້າ ແລະ ນຳສະເໜີຄະນະພັກຂັ້ນເທິງຂະຫຍາຍມະຫາຊົນກ້າວໜ້າເຂົ້າຮຽນສະໜັບສະໜູນໄດ້ 03 ສະຫາຍ, ຍິງ 01 ສະຫາຍ, ສ້າງມະຫາຊົນກ້າວໜ້າເຂົ້າຮຽນລະບຽບພັກໄດ້ 10 ສະຫາຍ, ຍິງ 02 ສະຫາຍ, ເລື່ອນມະຫາຊົນກ້າວໜ້າເປັນສະມາຊິກພັກສຳຮອງມີ 09 ສະຫາຍ ແລະ ໄດ້ເລື່ອນສະມາຊິກພັກສຳຮອງຂຶ້ນເປັນສະມາຊິກພັກສົມບູນ 08 ສະຫາຍ, ຍິງ 03 ສະຫາຍ; ເອົາໃຈໃສ່ຕິດຕາມກວດກາການປະຕິບັດພາລະບົດບາດ, ໜ້າທີ່, ສິດຂອງຄະນະພັກ, ໜ່ວຍພັກ ແລະ ສະມາຊິກພັກ ຕາມຂໍ້ກຳນົດໃນລະບຽບພັກການປະຕິບັດມະຕິ, ຄຳສັ່ງ ຂອງຄະນະພັກຂັ້ນເທິງ ແລະ ການປະຕິບັດກົດລະບຽບພັກເປັນຕົ້ນ: ການກໍ່ສ້າງພັກ, ການຮ່ວມຊີວິດພັກ, ການຂະຫຍາຍພັກ, ການລົງວິໄນພາຍໃນພັກ,

ເສຍເງິນສະຕິພັກ, ກວດກາດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນນຳພາ, ວິທີເຮັດວຽກ ແລະ ແບບແຜນດຳລົງຊີວິດ ຂອງຄະນະໜ່ວຍພັກ, ສະມາຊິກພັກ.

ດ້ານວິຊາສະເພາະ ໄດ້ເອົາໃຈໃສ່ກວດກາ, ຕິດຕາມ ແລະ ແນະນຳລະບອບແບບແຜນວິທີເຮັດວຽກ ແລະ ການຈັດຕັ້ງປະຕິບັດວຽກງານຢູ່ຂັ້ນພະແນກ, ໜ່ວຍງານເພື່ອໃຫ້ຮູ້ເຮັດໜ້າທີ່ນຳພາ-ຄຸ້ມຄອງ ແລະ ເຄື່ອນໄຫວຈັດຕັ້ງປະຕິບັດວຽກງານໃນຄວາມຮັບຜິດຊອບຕາມລະບຽບຫລັກການ. ໄປຄຽງຄູ່ກັນນັ້ນ, ວຽກງານຄຸ້ມພະນັກງານ ກໍໄດ້ມີການມອບໝາຍຄວາມຮັບຜິດຊອບວຽກງານ, ຕິດພັນກັບການຕິດຕາມ, ກວດກາຊຸກຍູ້ຢ່າງເປັນປົກກະຕິ ເພື່ອເລືອກເຟັ້ນເອົາພະນັກງານຜູ້ທີ່ມີຄວາມບຸກບືນ, ຫ້າວຫັນ, ມີຄວາມຮູ້ຄວາມສາມາດ ມີຄຸນສົມບັດສິນທຳປະຕິວັດ ເຮັດສຳເລັດໜ້າທີ່ການເມືອງຂອງຕົນຕາມການມອບຫມາຍເປັນເປົ້າໝາຍ ສືບທອດປ່ຽນແທນຂັ້ນຫ້ອງ, ພະແນກ ແລະ ໜ່ວຍງານ ເຊິ່ງຜ່ານມາແມ່ນໄດ້ສຳເລັດແຜນກຳນົດພະນັກງານຂັ້ນຫ້ອງ, ຂັ້ນພະແນກ ແລະ ໄດ້ປັບປຸງກົງຈັກການຈັດຕັ້ງຂັ້ນພະແນກ ແລະ ໜ່ວຍງານ 01 ຄັ້ງ.

ທັງໝົດນັ້ນ ແມ່ນຜົນສຳເລັດໃນການຍົກສູງຄຸນນະພາບສະມາຊິກພັກຢູ່ຫ້ອງພະລາທິການ ປກສ ແຂວງຈຳປາສັກ ແຕ່ເຖິງຢ່າງໃດກໍຕາມ ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ກໍຍັງເຫັນວ່າມີບາງດ້ານທີ່ເປັນຂໍຄົງຄ້າງ ຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂດັ່ງນີ້:

1. ການນຳພາສຶກສາອົບຮົມການເມືອງ-ນຳພາແນວຄິດ ບາງໜ່ວຍພັກ ບໍ່ເປັນປົກກະຕິ, ເຖິງຈະໄດ້ເຮັດແຕ່ຍັງເຮັດບໍ່ທັນເລິກເຊິ່ງ, ແທດເຖິງເປົ້າໝາຍ, ບາງຄັ້ງການຮ່ວມຊີວິດພັກເອົາວຽກພັກ-ວຽກລັດ ປະຕິບັດພ້ອມກັນເຮັດໃຫ້ເນື້ອໃນຂອງການຮ່ວມຊີວິດພັກຍັງບໍ່ທັນຮັບປະກັນໄດ້ 3 ລັກສະນະຄື: ລັກສະນະນຳພາ, ລັກສະນະຕໍ່ສູ້ ແລະ ລັກ ສະນະສຶກສາອົບຮົມ ເຮັດໃຫ້ວຽກງານດັ່ງກ່າວບໍ່ທັນປະຕິບັດໄດ້ຢ່າງເປັນປົກກະຕິ, ຕໍ່ເນື່ອງ ແລະ ບໍ່ຮັບປະກັນໄດ້ທາງດ້ານຄຸນນະພາບ.

2. ການກໍ່ສ້າງ-ບຳລຸງສະມາຊິກພັກ-ນາຍ ແລະ ພົນຕຳຫຼວດ, ບໍ່ທັນຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການຕົວຈິງ ໂດຍສະເພາະແມ່ນການສົ່ງໄປຍົກລະດັບທາງດ້ານວິຊາສະເພາະ ແລະ ທາງດ້ານທິດສະດີ-ການເມືອງຍັງມີຈຳກັດ.

3. ສະມາຊິກພັກ-ນາຍ ແລະ ພົນຕຳຫຼວດ ຈຳນວນໜຶ່ງຍັງບໍ່ທັນມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ. ສະແດງອອກ ໃນການເຄື່ອນໄຫວຕິດຕາມກວດກາວຽກວິຊາສະເພາະທີ່ຖືກມອບໝາຍ ເຮັດໃຫ້ວຽກບໍ່ໄປຕາມແຜນ, ມີຄວາມຊັກຊ້າ ແລະ ບໍ່ສຳເລັດຕາມການກຳນົດເວລາ.

4. ສະມາຊິກພັກບາງສະຫາຍ ຍັງບໍ່ທັນຮັກສາໄດ້ຄວາມເປັນແບບຢ່າງນຳໜ້າ ສະແດງອອກຢູ່ບ່ອນວ່າ: ຄວາມກະຕືລືລົ້ນ, ຄວາມຫ້າວຫັນຫຼຸດໜ້ອຍຖອຍລົງ, ຄວາມເປັນເຈົ້າການປະຕິບັດລະບຽບວິໄນບໍ່ທັນເຂັ້ມງວດ ເຮັດໃຫ້ຄວາມເຊື່ອໝັ້ນຂອງມະຫາຊົນຫຼຸດລົງ.

5. ບາງໜ່ວຍພັກ ຈຳນວນສະມາຊິກພັກເພີ່ມຂຶ້ນແຕ່ການປະຕິບັດໜ້າທີ່ການເມືອງຂອງພັກຍັງບໍ່ທັນມີການຫັນປ່ຽນຄຽງຄູ່ກັບປະລິມານທີ່ເພີ່ມຂຶ້ນ, ບໍ່ສາມາດຕອບສະໜອງໄດ້ກັບຄວາມຮຽກຮ້ອງຕ້ອງການ ສະແດງອອກເວລາມອບໜ້າທີ່ວຽກງານ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ. ໜ່ວຍພັກ, ສະມາຊິກພັກ ນັບທັງອົງການຈັດຕັ້ງມະຫາຊົນຍັງບໍ່ທັນປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນຢ່າງເຕັມສ່ວນ ໃນການປະກອບສ່ວນວຽກງານປັບປຸງ, ກໍ່ສ້າງພັກ ໂດຍສະເພາະວຽກງານຂະຫຍາຍພັກ ຍັງບໍ່ທັນເປັນເຈົ້າການຕິດຕາມ, ກວດກາການເຄື່ອນໄຫວຂອງມະຫາຊົນທີ່ກ້າວໜ້າ ໃນຂະບວນການມະຫາຊົນທີ່ພົ້ນເດັ່ນ ເພື່ອຂະຫຍາຍເຂົ້າພັກ.

ເພື່ອຍົກສູງຄຸນນະພາບສະມາຊິກພັກ ຫ້ອງພະລາທິການ ປກສ ແຂວງຈຳປາສັກ ສາມາດຕອບສະໜອງ

ໄດ້ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ແລະ ຮັບປະກັນໄດ້ບົດບາດການນຳພາຂອງພັກ ນັ້ນຜູ້ຂຽນຂໍມີບາງຄຳເຫັນມາແລກປ່ຽນໃນການປັບປຸງແກ້ໄຂໃນຕໍ່ໜ້າ ດັ່ງນີ້:

**ໜຶ່ງ,** ຄະນະພັກ ກໍຄືບັນດາຄະນະໜ່ວຍພັກ ເອົາໃຈໃສ່ເພີ່ມທະວີ ການນຳພາວຽກງານການເມືອງ-ແນວຄິດຂອງສະມາຊິກພັກຢ່າງເປື່ອງນິດລຽນຕິດ ແລະ ເປັນປະຈຳ ເພື່ອເຮັດໃຫ້ສະມາຊິກພັກມີຄວາມຮັບຮູ້, ເຊື່ອມຊຶມຕໍ່ແນວທາງນະໂຍບາຍ, ແຜນນະໂຍບາຍຂອງພັກ, ຂໍ້ກຳນົດ, ກົດລະບຽບຂອງພັກ, ກົດໝາຍຂອງລັດ, ມີຄວາມຕື່ນຕົວ ແລະ ເປັນແບບຢ່າງໃນການນຳພາມະຫາຊົນ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກໃຫ້ປະກົດຜົນເປັນຈິງ.

**ສອງ,** ເອົາໃຈໃສ່ວຽກງານປັບປຸງ, ກໍ່ສ້າງພັກ ແລະ ຂະຫຍາຍພັກຕາມທິດກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນເຈົ້າການໃນການຄົ້ນຄວ້າ, ສ້າງເງື່ອນໄຂໃຫ້ໂອກາດໃຫ້ສະມາຊິກພັກ ບຳລຸງຍົກລະດັບຄວາມຮູ້ ແລະ ຝຶກຝົນຫຼໍ່ຫຼອມຕົນເອງເພື່ອຄວາມກ້າວໜ້າ.

**ສາມ,** ການຂະຫຍາຍພັກຕິດພັນກັບການປັບປຸງພັກ, ການຂະຫຍາຍພັກແມ່ນຂະຫຍາຍຕາມຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງໜ້າທີ່ການເມືອງໃນແຕ່ລະໄລຍະ, ຂະຫຍາຍພັກ ເພື່ອຍົກສູງຄຸນນະພາບຂອງຄະນະພັກ, ໜ່ວຍພັກ ແລະ ສະມາຊິກພັກ ໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນກຳລັງແຮງຂອງພັກ.

**ສີ່,** ເອົາໃຈໃສ່ວຽກງານຄຸ້ມຄອງປ້ອງກັນສະມາຊິກພັກ ນັບທັງກວດກາການປະຕິບັດໜ້າທີ່ວຽກງານຂອງສະມາຊິກພັກ ທີ່ໄດ້ຮັບການມອບໝາຍ ແລະ ກວດກາ, ຕິດຕາມ ຊີວິດການເປັນຢູ່ຂອງເຂົາເຈົ້າຢ່າງເປັນປົກກະຕິ. ພ້ອມດຽວກັນນັ້ນ, ເພີ່ມທະວີວຽກງານກວດກາຕໍ່ການປະຕິບັດໜ້າທີ່ວຽກງານ, ການນຳພາ ແລະ ການປະຕິບັດລະບຽບວິໄນຂອງພັກ, ການຈັດຕັ້ງປະຕິບັດ ມະຕິ, ຄຳສັ່ງ ຂອງຄະນະພັກຂັ້ນເທິງ, ການເຄື່ອນໄຫວ ແລະ ການຮ່ວມຊີວິດພັກຂອງການຈັດຕັ້ງຮາກຖານພັກ ແລະ ສະມາຊິກພັກແຕ່ລະບ່ອນ ໃນຂົງເຂດທີ່ຕົນເອງຮັບຜິດຊອບຢ່າງເປັນປະຈຳ.

**ຫ້າ,** ປະຕິບັດນະໂຍບາຍ ໃຫ້ນາຍ ແລະ ພົນຕຳຫຼວດ ໃຫ້ຖືກຕ້ອງ ແລະ ສອດຄ່ອງ ເປັນຕົ້ນ: ການເບິ່ງແຍງຊີວິດການເປັນຢູ່ເວລາເຈັບເປັນ ແລະ ໃນເວລາພວມປະຕິບັດໜ້າທີ່ໃຫ້ເໝາະສົມ, ສົ່ງໄປຍົກລະດັບທາງດ້ານວິຊາສະເພາະ ແລະ ທິດສະດີການເມືອງໃຫ້ມີຈຳນວນເພີ່ມຂຶ້ນ, ປະຕິບັດການເລື່ອນຊັ້ນພາວະວິໄສ, ບັນຈຸສັບຊ້ອນຕຳແໜ່ງງານໃຫ້ຖືກກັບວິຊາສະເພາະທີ່ຮຽນມາ.

**ຫົກ,** ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງຕາມທິດຂອງແຂວງ ກໍຄື ກອງບັນຊາການ ປກສ ແຂວງ ເພື່ອເຮັດໃຫ້ຮາກຖານມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**ເວົ້າລວມແລ້ວ,** ການຍົກສູງຄຸນນະພາບຂອງສະມາຊິກພັກ ແມ່ນໜ້າທີ່ຕົ້ນຕໍຂອງພັກ ກໍຄືຄະນະພັກແຕ່ລະຂັ້ນ ໃນການປັບປຸງ, ກໍ່ສ້າງພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ທັງແມ່ນບັນຫາກົກ ແລະ ບັນຫາສຳຄັນສຳລັບພັກກຳອຳນາດ. ສະນັ້ນ, ຄະນະພັກຮາກຖານຫ້ອງພະລາທິການ ປກສ ແຂວງ ກໍຄືແຕ່ລະຄະນະໜ່ວຍພັກທີ່ຂຶ້ນກັບ ຕ້ອງໄດ້ເອົາໃຈໃສ່ຕໍ່ວຽກງານດັ່ງກ່າວຢ່າງຕັ້ງໜ້າ ຖືເອົາວຽກງານດັ່ງກ່າວເປັນຄວາມຮັບຜິດຊອບຕົ້ນຕໍ ເພື່ອເຮັດໃຫ້ຄຸນນະພາບຂອງສະມາຊິກພັກ ແລະ ການຈັດຕັ້ງພັກຢູ່ຂົງເຂດທີ່ຕົນຮັບຜິດຊອບໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງຖັນແຖວສະມາຊິກພັກ-ນັກຮົບໄດ້ເຕີບໃຫຍ່ຂະຫຍາຍຕົວດ້ານປະລິມານ ແລະ ຄຸນນະພາບ. ຖ້າປະຕິບັດໄດ້ດັ່ງທີ່ກ່າວມານັ້ນ ກໍ່ຈະເຮັດໃຫ້ການຈັດຕັ້ງຮາກຖານພັກ ເພີ່ມກຳລັງແຮງສູ້ຮົບສາມາດເຮັດສຳເລັດໜ້າທີ່ ທີ່ພັກ-ລັດ ມອບໝາຍໃຫ້ຢ່າງມີຄຸນນະພາບ...ຯ

# ຜະລິດຕະພັນປຸງແຕ່ງຊາ ທາງອອກໜຶ່ງໃນການສ້າງລາຍຮັບທີ່ໝັ້ນຄົງ

ໂດຍ: ເຄນດີ ທຳມະວອນ

ໂດຍຍຶດໝັ້ນຕາມຕາມແນວທາງນະໂຍບາຍຂອງພັກທີ່ວ່າ: "ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອພັດທະນາຊີວິດການເປັນຢູ່ໃຫ້ດີຂຶ້ນ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ ເພື່ອບັນລຸຈຸດປະສົງດັ່ງກ່າວນັ້ນ, ການສ້າງເສດຖະກິດຄອບຄົວແມ່ນໜຶ່ງປັບໄຈທີ່ສຳຄັນທີ່ສຸດ ແລະ ແມ່ນຈຸດລິເລີ່ມໃນການຍົກລະດັບຊີວິດການເປັນຢູ່ເຊິ່ງການສ້າງເສດຖະກິດຄອບຄົວກໍ່ມີຫຼາຍຮູບແບບທີ່ແຕກຕ່າງກັນ ຂຶ້ນກັບສະພາບເງື່ອນໄຂຂອງໃຜລາວທີ່ສະແດງອອກໃນຫຼາກຫຼາຍອາຊີບຂຶ້ນກັບຄວາມ ມັກ, ຮັກ, ຄວາມຊຳນານຂອງແຕ່ລະຄົນ ເວົ້າລວມ, ເວົ້າສະເພາະຢູ່ທ້ອງຖິ່ນ, ຊົນນະບົດ ສ່ວນໃຫຍ່ແມ່ນການຜະລິດກະສິກຳເປັນສິນຄ້າ ດ້ວຍການປູກຝັງ-ການລ້ຽງສັດເປັນຕົ້ນຕໍ ໂດຍອີງໃສ່ສະພາບດິນຟ້າອາກາດ, ເງື່ອນໄຂ ແລະ ທ່າແຮງບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ ຫຼາຍຄອບຄົວກໍ່ສາມາດສ້າງລາຍຮັບຂອງຕົນເອງຈາກການຍຶດຖືອາຊີບດັ່ງກ່າວ ກາຍເປັນຄອບຄົວອຸດົມສົມບູນ, ຮັ່ງມີ, ເຂັ້ມແຂງ ເຊິ່ງສິ່ງດັ່ງກ່າວ ກໍ່ລ້ວນແຕ່ຕ້ອງໄດ້ໃຊ້ຄວາມດຸໝັ່ນ, ອົດທົນ ແລະ ຄວາມພະຍາຍາມໃນການພັດທະນາຕົນເອງ ດັ່ງຄອບຄົວຂອງ ທ່ານ ບຸນໄຊ ທັດສະພອນ ໄດ້ຍຶດຖືອາຊີບການປຸງແຕ່ງຊາສັນພູມົງເຈົາ ຜະລິດເປັນສິນຄ້າສ້າງລາຍຮັບປີໜຶ່ງ 190 ລ້ານກວ່າກີບ.

ທ່ານ ບຸນໄຊ ທັດສະພອນ ອາຍຸ 46 ປີປະຈຸບັນຢູ່ບ້ານໂພນແກ້ວ, ເມືອງຜົ້ງສາລີ, ແຂວງຜົ້ງສາລີ ຊົນເຜົ່າພູນ້ອຍ ສາສະໜາພຸດ ໄດ້ແຕ່ງງານກັບ ນາງ ຄຳ ວັນນະວົງ ໃນປີ 2000 ມີລູກຮ່ວມກັນ 2 ຄົນ, ແຮງງານຕົ້ນຕໍໃນ 4 ຄົນ, ຍິງ 2 ຄົນ ໃນລະຫວ່າງປີ 1992 ເປັນພະນັກງານຢູ່ກຳລັງປະກອບອາວຸດກອງບັນຊາການທະຫານເມືອງຜົ້ງສາລີ, ປີ 1997 ໄດ້ຖືກສົ່ງໄປຮຽນຂັບລົດຢູ່ຫຼວງພະບາງ ແລະ ປີ 2000 ໄດ້ກັບມາຂັບລົດໃຫ້ກັບເຈົ້າເມືອງຜົ້ງສາລີ, ມາຮອດປີ 2016 ໃນເວລານັ້ນ ເຫັນວ່າຄອບຄົວມີຄວາມຫຍຸ້ງຍາກຂັດສົນຫຼາຍຢ່າງ ເພາະບໍ່ມີຜູ້ຊ່ວຍໃນການເບິ່ງແຍງກິດຈະການ ຈຶ່ງມີຄວາມຈຳເປັນໄດ້ຕັດສິນໃຈລາອອກຈາກການເປັນພະນັກງານ-ລັດຖະກອນ ມາເບິ່ງແຍງກິດຈະການດ້ວຍຕົນເອງແບບຈິງຈັງ.

ດ້ວຍຄວາມມັກຮັກທາງດ້ານການເຮັດຊາຈຶ່ງມາເຮັດທຸລະກິດກ່ຽວກັບການເຮັດຊາ ຈຶ່ງໄດ້ແນວຄິດລິເລີ່ມຢາກສ້າງໂຮງງານປຸງແຕ່ງ ຂອງຕົນເອງ ເພາະເຫັນໄດ້ວ່າຕົນເອງກໍ່ມີສວນຊາທີ່ໄດ້ເກັບຂາຍໃນທຸກປີ ແລະ ປະຊາຊົນພາຍໃນເມືອງອາຊີບຫຼັກແມ່ນການປູກຊາ ແລະ ຄິດວ່າທຸລະກິດດັ່ງກ່າວ ແມ່ນຈະປະສົບຜົນສຳເລັດໄດ້ແນ່ນອນ ຈຶ່ງໄດ້ເລີ່ມລົງມືເຮັດດ້ວຍຕົນເອງໂດຍການລອງຜິດລອງຖືກ ເພາະບໍ່ໄດ້ໄປຮຽນເຮັດຢູ່ໃສມາກ່ອນພຽງແຕ່ໄລຍະຜ່ານມາກໍ່ໄດ້ໄປແລກປ່ຽນຖອດຖອນບົດຮຽນນຳ ສປ ຈີນ ທີ່ເຫັນເຂົາເຈົ້າເຮັດມາເທົ່ານັ້ນ ຈຶ່ງໄດ້ປຶກສາຫາລື ແລະ ເຫັນດີເປັນເອກະພາບກັບຄອບຄົວສ້າງຕັ້ງໂຮງງານປຸງແຕ່ງຊາ ຊື່ວ່າ: ໂຮງງານປຸງແຕ່ງຊາສັນພູມົ່ງເຈົາຂຶ້ນ ໂດຍໄດ້ນຳໃຊ້ທຶນຮອນທີ່ຄອບຄົວໄດ້ເກັບທ້ອນໄວ້ໃນຈຳນວນ 150 ລ້ານກີບ ເພື່ອເປັນທຶນໃນການເກັບຊື້ໃບຊາດິບ ໂດຍ ເລີ່ມເຮັດເປັນລັກສະນະເຕົາຂົ້ວໃບຊາແບບພື້ນເມືອງ ເພື່ອຂົ້ວຊາຂາຍ ເຫັນວ່າການຂາຍແມ່ນໄດ້ຂາຍດີສົມຄວນ, ຕົກມາຮອດໃນປີ 2017 ຈຶ່ງໄດ້ຫັນມາໃຊ້ການຂົ້ວໃບຊາແບບກົນຈັກ ແລະ ປີ 2020 ຈຶ່ງໄດ້ມີແນວຄິດຢາກທົດລອງປະດິດການຫຸ້ມຫໍ່ເປັນຊາສຳເລັດຮູບ.

ສຳລັບວັດຖຸດິບ (ໃບຊາ) ແມ່ນ: ເກັບຈາກສວນຕົນເອງສະເລ່ຍໃນປີໜຶ່ງໄດ້ປະມານ 11 ໂຕນ ແລະ ເກັບຊື້ໃບຊາດິບນຳຊາວສວນຊາ ໂດຍເລີ່ມຊື້ແຕ່ເດືອນ 2 ຈົນຮອດເດືອນ 11 ແລະ ການຊື້ໃບຊາກໍ່ມີຈຸດພິເສດສະເພາະຄື: ການຊື້ຊ່ວງເດືອນ 2-4 ເປັນຊາດີປະເພດທີ 1, ເດືອນ 9-11 ເປັນຊາດີປະເພດທີ 2 ແລະ ເດືອນ 5-8 ເປັນຊາດີປະເພດທີ 3 ເຊິ່ງໃນແຕ່ລະໄລຍະຄວາມແຊບ, ຄວາມຫອມຂອງຊາຈະແຕກຕ່າງກັນ.

ໃນການຫຸ້ມຫໍ່ ຊາສັນພູມົ່ງເຈົາ ແມ່ນມີ 2 ແບບຄື: ບັນຈຸຫຸ້ມຫໍ່ແບບເປັນຖົງທັນສະໄໝ ແລະ ບັນຈຸຫຸ້ມຫໍ່ແບບພື້ນເມືອງດ້ວຍການຈັກສານໃສ່ໄມ້ ເຊິ່ງແບບພື້ນເມືອງນີ້ເປັນການປະຍຸກຈາກເຄື່ອງໃຊ້ສອຍທົ່ວໄປດ້ວຍການອັດແໜ້ນຊາ ສາມາດຮັກສາໄດ້ຫຼາຍປີ ແລະ ຍັງຄົງຄວາມຫອມ, ແຊບ ແລະ ຄົງຄຸນນະພາບໄດ້ຄືເກົ່າຕະຫຼອດໄປ ການຫຸ້ມຫໍ່ດັ່ງກ່າວມີຜະລິດຕະພັນປະມານ 26 ລາຍການ; ຊາສັນພູມົ່ງເຈົາ ມີ 2 ປະເພດຄື: ຊາແດງ ແລະ ຊາຂຽວ ເຊິ່ງຜ່ານການຜະລິດປີໜຶ່ງສາມາດຜະລິດໄດ້ປະມານ 20 ໂຕນ ສົ່ງອອກຂາຍພາຍໃນປະເທດຈຳນວນໜຶ່ງ ແລະ ສົ່ງອອກຕ່າງປະເທດເປັນສ່ວນຫຼາຍເປັນຕົ້ນແມ່ນ: ສປ ຈີນ ແລະ ສສ ຫວຽດນາມ, ຜ່ານການຈຳໜ່າຍສາມາດສ້າງລາຍຮັບທີ່ຫັກອອກຈາກຕົ້ນທຶນແລ້ວ 1 ເດືອນ ໄດ້ 16.500.000 ກີບ ເຊິ່ງໃນ 1 ປີ ໄດ້ປະມານ 198.000.000 ກີບ. ພາຍຫຼັງທີ່ໄດ້ຈັດຕັ້ງປະຕິບັດຜົນໄດ້ຮັບຄື: ມີລົດລີໂວ 1 ຄັນ, ລົດຣຸນໄດ 1 ຄັນ, ມີລົດຈັກ, ມີເຮືອນແໜ້ນໜາຖາວອນ, ສາມາດສົ່ງລູກ

ທັງ 2 ຄົນໄດ້ຮ່ຳຮຽນໜັງສື, ມີເງິນເກັບຈຳນວນໜຶ່ງ ເພື່ອ ນຳໃຊ້ໃນເວລາຈຳເປັນ ແລະ ໝູນໃຊ້ເຂົ້າໃນການປຸງ ແຕ່ງຊາ.

ຕໍ່ກັບຜົນສຳເລັດດັ່ງກ່າວ ຍັງມີຄວາມຫຍຸ້ງຍາກຈຳນວນໜຶ່ງເປັນຕົ້ນແມ່ນ ຍັງຂາດທຶນຮອນໃນການລົງທຶນເພີ່ມຂຶ້ນ, ໃນການຈ່າຍຊື້ຄ່າຍອດໃບຊາດິບກັບພໍ່ແມ່ປະຊາຊົນຊາວສວນເພາະວ່າແຕ່ລະມື້ໄດ້ໃຊ້ງົບປະມານຫຼາຍພໍສົມຄວນ, ບ່ອນຈຳໜ່າຍຍັງຈຳກັດ ເພາະໄດ້ຊອກຕະຫຼາດເອງ ແລະ ຍັງບໍ່ທັນມີຕົວແທນຈຳໜ່າຍ.

ໃນປະຈຸບັນ ໂຮງງານປຸງແຕ່ງຊາສັນພູມົ່ງເຈົາ ແມ່ນໄດ້ຮັບ GI ຄືເຂົ້າສະມາຄົມຊາຕ່າງປະເທດ, ມີໂລໂກສະເພາະຂອງຕົນເອງ ແລະ ກຳລັງສະເໜີເປັນສິນຄ້າໂອດ໊ອບແລະ ອຢ ນຳການຈັດຕັ້ງຂັ້ນເທິງ ແລະ ເຫັນວ່າຈະໄດ້ຮັບໄວໆນີ້ ຖ້າໄດ້ຮັບທັງໝົດ 4 ປະເພດຄົບຖ້ວນແລ້ວແມ່ນຊາສັນພູມົ່ງເຈົາຈະເຮັດຖືກຕ້ອງຕາມມາດຕະຖານ ແລະ ຈະໄດ້ສຸມໃສ່ການສົ່ງອອກໄປໃນທົ່ວປະເທດໃຫ້ຫຼາຍຂຶ້ນເປັນຕົ້ນແມ່ນແຕ່ລະເມືອງ, ແຕ່ລະແຂວງ ແລະ ຊອກຕົວແທນຈຳໜ່າຍ ເພື່ອຊ່ວຍໃນການຈຳໜ່າຍຂາຍໃຫ້ຫຼາຍຂຶ້ນກວ່າເກົ່າ ແລະ ອີກຢ່າງໜຶ່ງແຜນການໃນຕໍ່ໜ້າໃນການປັບປຸງການຜະລິດຊາໃຫ້ດີຂຶ້ນກວ່າເກົ່າແມ່ນ: ຈະສືບຕໍ່ຜະລິດຊາໃຫ້ຫຼາຍຂຶ້ນ ເພື່ອຂາຍເປັນສິນຄ້າ ໃຫ້ກາຍເປັນທີ່ນິຍົມຊົມຊອບ ແລະ ໄວ້ວາງໃຈຈາກມະຫາຊົນຕະຫຼອດໄປ, ສືບຕໍ່ເຂົ້າຮ່ວມວາງສະແດງຜະລິດຕະພັນຊາຕາມການເຊື້ອເຊີນຢູ່ພາຍໃນ ແລະ ຕ່າງປະເທດໃຫ້ຫຼາຍຂຶ້ນ, ນອກນັ້ນກໍ່ຈະຂະຫຍາຍສະຖານທີ່ຕາກຊາເພີ່ມຂຶ້ນອີກ 1 ຫຼັງ.

ຜົນສຳເລັດທີ່ກ່າວມາທັງໝົດນັ້ນ ຍ້ອນມີກ້າເຮັດ, ກ້າຕັດສິນໃຈ, ກ້າທົດລອງ ແລະ ມີຄວາມດຸໝັ່ນ, ຂະຫຍັນພຽນ ແລະ ຄວາມມັກຮັກສ່ວນຕົວໃນການຜະລິດຊາ, ການເປັນແບບຢ່າງທີ່ດີໃຫ້ແກ່ສັງຄົມ,ປະເທດຊາດ ແລະ ບວກກັບການມີແນວຄິດໃໝ່ໆຢູ່ຕະຫຼອດ ຈຶ່ງກາຍເປັນຄອບຄົວຕົວແບບໃຫ້ແກ່ບ້ານ, ເມືອງຜົ້ງສາລີ ແລະ ຍ້ອນການຈັດຕັ້ງຂັ້ນເທິງໄດ້ລົງຊີ້ນຳ-ນຳພາເພື່ອຊຸກຍູ້ສົ່ງເສີມຢ່າງໃກ້ຊິດຕິດແທດຕະຫຼອດມາ. ສຳລັບໃຜທີ່ຢາກສັ່ງຊາ ຫຼື ເປັນຕົວແທນຈຳໜ່າຍ ສາມາດຕິດຕໍ່ໄດ້ທີ່ເບີ 020 5460 3163...ຯ

# ຕ້ານ ແລະ ສະກັດກັ້ນກົນອຸບາຍ, ເລ່ຫຼ່ຽມ ທີ່ຫວັງທຳລາຍ ພື້ນຖານເພພັກ-ລັດ ຂອງພວກອິດທິກຳລັງປໍລະປັກ ພວກປະຕິການ ໃນສື່ສັງຄົມອອນລາຍ

ໂດຍ: ຄຳພອນ ລໍສະຫວັດ

ໃນໄລຍະເວລາ 4-5 ປີທີ່ຜ່ານມາ, ສື່ສັງຄົມອອນລາຍໄດ້ພັດທະນາ ແລະ ຂະຫຍາຍຕົວຢ່າງວ່ອງໄວກາຍເປັນຄວາມຕ້ອງການ ແລະ ສິ່ງຈຳເປັນຂອງປະຊາຊົນຈຳນວນຫຼວງຫຼາຍ; ເຖິງຢ່າງໃດກໍ່ຕາມ, ສື່ສັງຄົມອອນລາຍກໍ່ປຽບດັ່ງມີດສອງຄົມ, ດ້ານໜຶ່ງນຳຄວາມສະດວກສະບາຍມາໃຫ້ປະຊາຊົນ, ທັງຊຸກຍູ້ການພັດທະນາໃນຫຼາຍຂົງເຂດ; ແຕ່ອີກດ້ານ, ດ້ວຍລັກສະນະທີ່ເປີດກວ້າງສາມາດເຂົ້າເຖິງໄດ້ຫຼາຍຂົງເຂດ, ສື່ສັງຄົມອອນລາຍຈຶ່ງຕົກໄປເປັນເຄື່ອງມືຂອງພວກອິດທິກຳລັງປໍລະປັກ ແລະ ພວກປະຕິການ ໃນການວາງກົນອຸບາຍ, ເລ່ຫຼ່ຽມ ເພື່ອຫວັງທຳລາຍພື້ນຖານເພພັກ-ລັດ ແລະ ລະບອບໃໝ່ ຂອງພວກເຮົາ; ສື່ສັງຄົມອອນລາຍໄດ້ສ້າງຄວາມທ້າທາຍຫຼາຍຢ່າງ ໃນວຽກງານປ້ອງກັນພື້ນຖານແນວຄິດ ຂອງພັກ ແລະ ປ້ອງກັນຖັນແຖວພະນັກງານ-ສະມາຊິກພັກ, ແນວທາງ, ນະໂຍບາຍຂອງພັກ; ສະນັ້ນ, ໃນໄລຍະປະຈຸບັນນີ້ວຽກງານຕ້ານ ແລະ ສະກັດກັ້ນກົນອຸບາຍ, ເລ່ຫຼ່ຽມຂອງພວກອິດທິກຳລັງປໍລະປັກ ແລະ ພວກປະຕິການຈຶ່ງເປັນບັນຫາທີ່ສຳຄັນ ແລະ ຮີບດ່ວນ;

**❖ ບາງກົນອຸບາຍ ຂອງພວກອິດທິກຳລັງປໍລະປັກ ແລະ ພວກປະຕິການ:**

ປະຈຸບັນ, ສສ ຫວຽດນາມເປັນໜຶ່ງໃນບັນດາປະເທດທີ່ມີອັດຕາຜູ້ຊົມໃຊ້ສື່ສັງຄົມອອນລາຍສູງ, ປະຊາຊົນມີທ່າອ່ຽງມັກອ່ານຂໍ້ມູນຂ່າວສານຜ່ານສື່ສັງຄົມອອນລາຍນັບມື້ນັບເພີ່ມຂຶ້ນ, ນັບຕັ້ງແຕ່ໂລກລະບາດ Covid-19 ໄດ້ແຜ່ລະບາດ, ອັດຕາການຊົມໃຊ້ສື່ສັງຄົມອອນລາຍກໍ່ໄດ້ເພີ່ມຂຶ້ນຢ່າງກ້າວກະໂດດ; ມາຮອດຕົ້ນປີ 2023, ໂດຍອີງຕາມສະຖິຕິໃໝ່ຂອງ We are social (ບໍລິສັດຊ່ຽວຊານດ້ານການວິເຄາະສື່ສັງຄົມອອນລາຍທົ່ວໂລກ) ໃຫ້ຮູ້ວ່າ: ຫວຽດນາມມີຜູ້ຊົມໃຊ້ອິນເຕີເນັດ ທັງໝົດຈຳນວນ 77,93 ກວ່າລ້ານຄົນ (ກວມເອົາ 79,1% ຂອງຈຳນວນປະຊາກອນທັງໝົດ), ໃນນັ້ນ, ມີຈຳນວນຜູ້ຊົມໃຊ້ສື່ສັງຄົມອອນລາຍທະລຸ 70 ລ້ານຄົນ, ເທົ່າກັບ 71% ຂອງປະຊາກອນທັງໝົດ; ເວລາໃນການນຳໃຊ້ສື່ສັງຄົມອອນລາຍໃນແຕ່ລະວັນ, ໂດຍສະເລ່ຍ (ຜູ້ມີອາຍຸແຕ່ 16-64ປີ) ນຳໃຊ້ 6-10 ຊົ່ວໂມງຕໍ່ວັນ; ດ້ວຍການປັບປຸງໃໝ່ ແລະ ພັດທະນາຢ່າງຕໍ່ເນື່ອງ, ເຮັດໃຫ້ຜູ້ຊົມໃຊ້ສາມາດເຂົ້າເຖິງຂໍ້ມູນ, ພົວພັນ, ແລກປ່ຽນກັບຊຸມຊົນໄດ້ຢ່າງສະດວກສະບາຍ, ສາມາດສຳຫຼວດ ແລະ ຄົ້ນຫາປະສົບການຊີວິດໄດ້ທຸກບ່ອນ, ທຸກເວລາ, ສື່ສັງຄົມອອນລາຍຈຶ່ງໄດ້ກາຍເປັນ "ອາຫານທາງຈິດໃຈ" ຂອງປະຊາຊົນຈຳນວນຢ່າງຫຼວງຫຼາຍ.

ສະພາບຄວາມເປັນຈິງໃນປະຈຸບັນໄດ້ສະແດງໃຫ້ເຫັນວ່າ: ສື່ສັງຄົມອອນລາຍມີຜົນກະທົບສອງດ້ານ

ຕໍ່ການດຳລົງຊີວິດຂອງປະຊາຊົນ, ນອກຈາກຈະນຳຜົນປະໂຫຍດມາໃຫ້ຜູ້ຊົມໃຊ້ແລ້ວ, ສື່ສັງຄົມອອນລາຍຍັງສົ່ງຜົນກະທົບດ້ານລົບຫຼາຍຢ່າງເປັນຕົ້ນແມ່ນ ພວກກຳລັງອິດທິປໍລະປັກ ແລະ ພວກປະຕິການມັກຈະສວຍໃຊ້ສື່ສັງຄົມອອນລາຍເປັນຊ່ອງທາງໃນການໂຄສະນາ, ເຜີຍແຜ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງໃຫ້ປະຊາຊົນຜູ້ທີ່ຊົມໃຊ້ສື່ສັງຄົມອອນລາຍໄດ້ອ່ານເພື່ອຫວັງໃຫ້ປະຊາຊົນມີແນວຄິດຕໍ່ຕ້ານພັກ-ລັດ.

ໃນການວາງກົນອຸບາຍ, ເລ່ລ່ຽມເພື່ອຫວັງທຳລາຍມ້າງເພພັກ-ລັດໃນສື່ສັງຄົມອອນລາຍ, ພວກອິດທິກຳລັງປໍລະປັກ ແລະ ພວກປະຕິການມັກຈະນຳໃຊ້ກົນອຸບາຍ, ເລ່ລ່ຽມດັ່ງນີ້:

**1.** ພວກອິດທິກຳລັງປໍລະປັກ ແລະ ພວກປະຕິການມັກຈະສວຍໃຊ້ປະໂຫຍດຈາກສື່ສັງຄົມອອນລາຍທີ່ພົ້ນເດັ່ນ, ມີຜູ້ຊົມໃຊ້ເປັນຈຳນວນຫຼາຍເຊັ່ນ: Facebook, Zalo, Tiktok, Youtube ... ເປັນເຄື່ອງມືໃນການວາງກົນອຸບາຍ, ເລ່ລ່ຽມເພື່ອໃກ້ຊິດຕິດແທດ, ຕິດຕາມສະພາບການດຳລົງຊີວິດຂອງປະຊາຊົນຫວຽດນາມ, ຊອກຫາບັນຫາ "ເຄັ່ງຮ້ອນ" ທີ່ເກີດຂຶ້ນໃນສັງຄົມທີ່ມະຫາຊົນ ແລະ ປະຊາຊົນ ໃຫ້ຄວາມສົນໃຈເປັນຈຳນວນຫຼາຍ; ຄົ້ນຫາຊ່ອງວ່າງ, ຄວາມຜິດພາດ ແລະ ບັນຫາອັນຮີບດ່ວນຂອງສັງຄົມ ເພື່ອນຳມາຂຽນເປັນບົດຄວາມ, ຂ່າວສານບິດເບືອນຄວາມຈິງ, ເສກສັນປັ້ນແຕ່ງ, ປ່ຽນສີຂາວເປັນສີດຳ; ຫຼາຍແນວທາງ, ນະໂຍບາຍຂອງພັກ-ລັດ ທີ່ພົວພັນເຖິງການຕ້ານການສໍ້ລາດບັງຫຼວງ, ທີ່ດິນ, ວຽກງານປ້ອງກັນຊາດ-ປ້ອງກັນສະຫງົບ ໄດ້ຖືກພວກອິດທິກຳລັງປໍລະປັກ ແລະ ພວກປະຕິການຕັດຕໍ່ເອົາຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງຕື່ມໃສ່ ເພື່ອປັ່ນປ່ວນຂໍ້ມູນ, ສ້າງຄວາມສັບສົນ ໃຫ້ແກ່ຜູ້ອ່ານ, ຍຸຍົງສົ່ງເສີມໃຫ້ເກີດຄວາມຂັດແຍ່ງ, ສ້າງຄວາມບໍ່ສະຫງົບ, ບໍ່ເປັນລະບຽບຢູ່ພາຍໃນ;

**2.** ສ້າງບັນຊີ ຫຼື ເວັບໄຊປອມຂອງການຈັດຕັ້ງພັກ, ສຳນັກງານ, ກະຊວງ-ອົງການ, ບຸກຄົນ ເພື່ອອັບໂຫຼດຂໍ້ມູນບິດເບືອນສະພາບເຫດການຂອງການເມືອງ, ເສດຖະກິດ ແລະ ສັງຄົມ; ສ້າງບັນຊີສື່ສັງຄົມອອນລາຍເພື່ອປອມຕົວເປັນການນຳຂອງພັກ-ລັດ ໂດຍການຕັດຕໍ່ເອົາຮູບຂອງພະນັກງານຂັ້ນສູງເພື່ອສ້າງພາບຖະແຫຼງການມີເນື້ອໃນບິດເບືອນຄວາມຈິງເຮັດໃຫ້ປະຊາຊົນຕົກໃຈ, ເຂົ້າໃຈໄປໃນທາງທີ່ຜິດ, ສັບສົນຕໍ່ຂໍ້ມູນຂ່າວສານດັ່ງກ່າວ; ເມື່ອປະຊາຊົນຈຳນວນຫຼາຍທີ່ບໍ່ຮູ້ວ່າເປັນບັນຊີ ຫຼື ເວັບໄຊປອມ ກໍ່ເຂົ້າອ່ານ ແລະ ກົດຕິດຕາມເປັນຈຳນວນຫຼາຍ, ຫຼັງຈາກນັ້ນພວກອິດທິກຳລັງປໍລະປັກ ແລະ ພວກປະຕິການກໍ່ດຳເນີນການວາງກົນອຸບາຍ, ເລ່ລ່ຽມ ເພື່ອເຮັດໃຫ້ປະຊາຊົນມີແນວຄິດຕໍ່ຕ້ານພັກ-ລັດ, ສະແດງທັດສະນະ, ປະກອບຄຳເຫັນຕໍ່ພັກ-ລັດໄປໃນທາງທີ່ບໍ່ດີ;

**3.** ສວຍໃຊ້ບັນຫາທີ່ພົວພັນເຖິງສິດທິມະນຸດ, ປະຊາທິປະໄຕ, ຄວາມເຊື່ອຖື, ສາສະໜາ ເພື່ອສ້າງບັນຊີ ແລະ ແຟນເພດ (fanpage) ເພື່ອແຈກຢາຍ ເອກະສານ, ຜະລິດຕະພັນວັດທະນະທຳໂດຍມີເນື້ອໃນທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງ ເພື່ອດຶງດູດ ແລະ ຮຽກຮ້ອງໃຫ້ໃຫ້ປະຊາຊົນເຕົ້າໂຮມປະທ້ວງ, ສົ່ງຜົນກະທົບຕໍ່ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ພາຍໃນ, ຍຸຍົງສົ່ງເສີມໃຫ້ມີການປະທະກັນ ແລະ ການກະທຳທີ່ລະເມີດກົດໝາຍ; "ໃຊ້ຄວາມໄດ້ປຽບຈາກຄະດີຄວາມທີ່ມີລັກສະນະສັບສົນ ແລະ ອ່ອນໄຫວເພື່ອປຸກລະດົມ, ບິດເບືອນ, ກ່າວຫາ, ໃສ່ຮ້າຍປ້າຍສີພັກ-ລັດ ເຮັດໃຫ້ພັກ-ລັດອ່ອນແອ ແລະ ທັບທົມໂຈມ

ຕີອົງການຕຸລາການ, ຍຸຍົງສົ່ງເສີມໃຫ້ສັງຄົມບໍ່ເຊື່ອຟັງ, ບໍ່ໄວ້ວາງໃຈພັກ-ລັດ"(1).

4. ຊອກຫາຊ່ອງວ່າງຄວາມປອດໄພ (Hack) ຂອງເວັບໄຊ້ ແລະ ຖານຂໍ້ມູນເອເລັກໂຕຣນິກ ເພື່ອດັດແກ້, ເພີ່ມຕົນເອງເຂົ້າເປັນຜູ້ຄວບຄຸມເວັບໄຊ ແລະ ຖານຂໍ້ມູນເອເລັກໂຕຣນິກດັ່ງກ່າວເພື່ອອັບໂຫຼດເນື້ອຫາ ແລະ ຂໍ້ມູນບິດເບືອນຄວາມຈິງ; ຕັດຕໍ່ຮູບພາບ, ປັບປຸງເນື້ອໃນບົດຄວາມໃນເວັບໄຊ ແລະ ຖານຂໍ້ມູນເອເລັກໂຕຣນິກດັ່ງກ່າວເຮັດໃຫ້ຜູ້ອ່ານຄຸມເຄືອ, ບໍ່ທັນລະວັງຕົວ, ຫຼົງເຊື່ອຂໍ້ມູນບິດເບືອນດັ່ງກ່າວ; ພວກອິດທິກຳລັງປໍລະປັກ ແລະ ພວກປະຕິການ ມັກຈະຕັດຕໍ່, ດັດແປງທັດສະນະ, ປັບປຸງ, ເພີ່ມເຕີມເນື້ອໃນບິດເບືອນໃສ່ລັດທິມາກ-ເລນິນ, ແນວຄິດໂຮ່ຈີມິນຢ່າງແນບນຽນທີ່ສຸດ ເພື່ອເຮັດໃຫ້ຜູ້ອ່ານສັບສົນ, ບໍ່ສາມາດຈຳແນກໄດ້ວ່າເນື້ອໃນໂຕໃດແມ່ນແນວທາງ, ນະໂຍບາຍຂອງພັກ-ລັດ, ໂຕໃດເປັນເນື້ອໃນບິດເບືອນ ທີ່ພວກອິດທິກຳລັງປໍລະປັກ ແລະ ພວກປະຕິການດັດແກ້, ຕື່ມໃສ່;

❖ ***ເປົ້າໝາຍຂອງພວກອິດທິກຳລັງປໍລະປັກແລະພວກປະຕິການ:*** ພວກເຂົາມັກຈະແນໃສ່ຊົນຊັ້ນປັນຍາຊົນ, ຖັນແຖວພະນັກງານ-ສະມາຊິກພັກ, ໂດຍສະເພາະແມ່ນພະນັກງານ-ສະມາຊິກພັກຜູ້ທີ່ເສື່ອມຄຸນ, ປ່ຽນທາດທາງດ້ານແນວຄິດ, ການເມືອງ, ວັດທະນະທຳ, ອະລິຍາທຳ; ເຍົາວະຊົນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາເພາະພວກເຂົາແມ່ນລຸ້ນສືບທອດໃນອະນາຄົດຂອງປະເທດຊາດ; ສວຍໃຊ້ສະພາບການເປີດກວ້າງຂອງປະເທດ ແລະ ການເຊື່ອມໂຍງກັບສາກົນເພື່ອໂຄສະນາ, ເຜີຍແຜ່ແນວຄິດຂອງຝ່າຍຕາເວັນຕົກ, ເປັນຕົ້ນແມ່ນ "ການຮຽນ-ການສຶກສາ", "ວັດທະນະທຳ, ອາລິຍະທຳ" ເພື່ອສົ່ງເສີມໃຫ້ເຍົາວະຊົນ, ຊາວໜຸ່ມ, ນັກຮຽນ, ນັກສຶກສາຫັນໄປຍຶດໝັ້ນອຸດົມການຂອງຝ່າຍຕາເວັນຕົກ ແລະ ຫວັງເຮັດໃຫ້ອຸດົມການປະຕິວັດຂອງພັກ-ລັດຈາງລົງ.

❖ **ບາງມາດຕະການຕ້ານ ແລະ ສະກັດກັ້ນກົນອຸບາຍ, ເລ່ຫຼ່ຽມຂອງພວກອິດທິກຳລັງປໍລະປັກ ແລະ ພວກປະຕິການ:**

1. ເພີ່ມທະວີການນຳພາ-ຊີ້ນຳຂອງພັກ-ລັດ, ຍົກສູງປະສິດທິພາບວຽກງານຄຸ້ມຄອງ-ປ້ອງກັນຄວາມສະຫງົບທາງອິນເຕີເນັດ; ປັບປຸງກົນໄກ, ນະໂຍບາຍ ແລະ ກົດໝາຍທີ່ກ່ຽວຂ້ອງກັບການຄຸ້ມຄອງສື່ສັງຄົມອອນລາຍໃຫ້ສອດຄ່ອງກັບທ່າອ່ຽງພັດທະນາ, ສ້າງສະພາບແວດລ້ອມ ຂອງສື່ສັງຄົມອອນລາຍໃຫ້ເຂັ້ມແຂງ.

ໃນສະພາບປະຈຸບັນ, ຖ້າຢາກຄຸ້ມຄອງສື່ສັງຄົມອອນລາຍໃຫ້ໄດ້ດີແມ່ນຕ້ອງມີການສົມທົບແໜ້ນ ແລະ ເປັນເອກະພາບລະຫວ່າງການຈັດຕັ້ງພັກ, ກະຊວງ-ອົງການ ແລະ ທ້ອງຖິ່ນກ່ຽວກັບວຽກງານປ້ອງກັນຄວາມສະຫງົບ-ຄວາມປອດໄພ ໃນສື່ສັງຄົມອອນລາຍ; ພ້ອມກັນນັ້ນ, ສຳນັກງານ-ອົງການຄຸ້ມຄອງສື່ສັງຄົມອອນລາຍກໍ່ຕ້ອງຄົ້ນຄວ້າສ້າງ ແລະ ປັບປຸງກົນໄກ, ນະໂຍບາຍ, ກົດໝາຍທີ່ກ່ຽວຂ້ອງຢ່າງຮອບດ້ານ ແລະ ໂປ່ງໃສ, ທັງຮັບປະກັນສະພາບແວດລ້ອມ ຂອງສື່ສັງຄົມອອນລາຍໃຫ້ປອດໃສ ແລະ ເຂັ້ມແຂງ; ຕ້ອງຕິດຕາມ, ກວດກາວິສາຫະກິດທີ່ເຄື່ອນໄຫວໃນສື່ສັງຄົມອອນລາຍໃຫ້ເປັນປົກກະຕິ ໂດຍສະເພາະແມ່ນວິສາຫະກິດທີ່ໃຫ້ບໍລິການດ້ານອິນເຕີເນັດ, ວັດທະນະທຳສັງຄົມຕ້ອງຮັບປະກັນ ແລະ ມີເງື່ອນໄຂໃນການຄຸ້ມຄອງການເຄື່ອນໄຫວທາງອິນເຕີເນັດ, ຮັບປະກັນຜົນປະ

ໂທດ ແລະ ຄວາມສະຫງົບຂອງຊາດ ພ້ອມທັງຕ້ອງຈັດຕັ້ງການຕິດຕາມ, ກວດກາການປະຕິບັດຂໍ້ກໍານົດຂອງກົດໝາຍຢ່າງເປັນປົກກະຕິ.

ຕ້ອງມີກົດລະບຽບ ແລະ ມາດຕະການລົງໂທດຢ່າງເຂັ້ມງວດ, ມີລັກສະນະນາບຂູ່ ເພື່ອຕັກເຕືອນຜູ້ທີ່ຄິດຈະລະເມີດກົດລະບຽບ ແລະ ມາດຕະການດັ່ງກ່າວ ແລະ ລົງໂທດຕໍ່ຜູ້ທີ່ລະເມີດກົດລະບຽບ ແລະ ມາດຕະການດັ່ງກ່າວຢ່າງເຂັ້ມງວດ, ທັນການ; ມີມາດຕະການສະກັດກັ້ນ ແລະ ລຶບລ້າງບັນຊີ ຫຼື ເວັບໄຊ້ ທີ່ນໍາສະເໜີຂໍ້ມູນຂ່າວສານບິດເບືອນຄວາມຈິງ ມີລັກສະນະຕໍ່ຕ້ານພັກ-ລັດ; ສົມທົບກັບຜູ້ທີ່ນໍາສະເໜີຂໍ້ມູນຂ່າວສານໃນສື່ສັງຄົມອອນລາຍ ເພື່ອເພີ່ມທະວີການການອະທິບາຍ, ແລກປ່ຽນ ແລະ ແກ້ໄຂຂໍ້ຍຸ້ງຍາກ, ບັນຫາຄົງຄ້າງທີ່ປະຊາຊົນຂ້ອງໃຈຢ່າງທັນການ; ແກ້ໄຂຂໍ້ຈໍາກັດ, ບັນຫາເຄັ່ງຮ້ອນບໍ່ປ່ອຍໃຫ້ປະກົດເປັນຈຸດຮ້ອນໃນສັງຄົມ.

2. ວິເຄາະ ແລະ ຈໍາແນກໃຫ້ຈະແຈ້ງເຖິງລັກສະນະທັງສອງດ້ານ ຂອງສື່ສັງຄົມອອນລາຍ, ໂດຍສະເພາະແມ່ນດ້ານລົບ ເພື່ອນໍາມາແກ້ໄຂ, ຕ້ານ ແລະ ສະກັດກັ້ນການສວຍໃຊ້ສື່ສັງຄົມອອນລາຍກໍ່ໃຫ້ເກີດຄວາມບໍ່ສະຫງົບທາງດ້ານການເມືອງ; ຍົກສູງສະຕິລະວັງຕົວ, ຄວາມຮັບຮູ້ ແລະ ຄວາມຮັບຜິດຊອບໃຫ້ຜູ້ຊົມໃຊ້; ເພື່ອເສີມຂະຫຍາຍຄວາມເຂັ້ມແຂງກໍ່ຄືການແກ້ໄຂດ້ານອ່ອນຂອງສື່ສັງຄົມອອນລາຍ, ຕ້ອງຮັບຮູ້ກ່ຽວກັບສື່ສັງຄົມອອນລາຍຢ່າງເລິກເຊິ່ງທັງດ້ານດີ ແລະ ດ້ານລົບ, ກໍານົດ ແລະ ຄຸ້ມຄອງຜູ້ທີ່ມີບົດບາດໃນສື່ສັງຄົມອອນລາຍໃຫ້ນໍາໃຊ້ຢ່າງເໝາະສົມ, ເປັນເຈົ້າການໃນການໂຄສະນາ, ເຜີຍແຜ່, ຂຽນຂ່າວທີ່ດີ, ປອດໄພ ແລະ ມີປະສິດທິພາບ; ສຸມໃສ່ເພີ່ມທະວີມາດຕະການໂຄສະນາ, ເຜີຍແຜ່ຄວາມຮູ້ທາງດ້ານກົດໝາຍ, ປູກຈິດສໍານຶກ ແລະ ຄວາມຮັບຜິດຊອບໃຫ້ຜູ້ທີ່ຊົມໃຊ້ສື່ສັງຄົມອອນລາຍ; ປະຕິບັດກົດໝາຍວ່າດ້ວຍຄວາມປອດໄພທາງອິນເຕີເນັດ ແລະ ລະບຽບການນໍາໃຊ້ສື່ສັງຄົມອອນລາຍຂອງນັກຂ່າວຫວຽດນາມ (ຂອງສະມາຄົມນັກຂ່າວຫວຽດນາມ), ກົດລະບຽບກ່ຽວກັບການນໍາໃຊ້ສື່ສັງຄົມອອນລາຍຕາມ (ຂໍ້ຕົກລົງສະບັບເລກທີ **874/QĐ-BTTTT**, ລົງວັນທີ **17/06/2021**, ຂອງກະຊວງຖະແຫຼງຂ່າວ ແລະ ການສື່ສານ, ສຶກສາອົບຮົມທິດທາງໃນການນໍາໃຊ້ໃຫ້ປະຊາຊົນຜູ້ທີ່ຊົມໃຊ້ສື່ສັງຄົມອອນລາຍເປັນຕົ້ນແມ່ນເຍົາວະຊົນໃຫ້ມີຄວາມລະມັດລະວັງ, ເປັນເຈົ້າການກວດກາຂໍ້ມູນຂ່າວສານວ່າແມ່ນຂໍ້ມູນຂ່າວສານແທ້ ຫຼື ຂໍ້ມູນບິດເບືອນຄວາມຈິງ ເພື່ອປ້ອງກັນຕົນເອງ, ຊຸມຊົນ ແລະ ປະຊາຊົນຕໍ່ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງ; ປັບປຸງກົດລະບຽບ ແລະ ຄວາມເປັນລະບຽບຮຽບຮ້ອຍຢ່າງທັນການ, ເປັນເຈົ້າການຕໍ່ສູ້ຕ້ານຂໍ້ມູນຂ່າວສານທີ່ມີເນື້ອຫາຕໍ່ຕ້ານພັກ-ລັດ, ຕ້ອງປະຕິບັດວິໄນຕໍ່ຜູ້ທີ່ສວຍໃຊ້ສື່ສັງຄົມອອນລາຍຂຽນຂ່າວເພື່ອທັບຖົມໂຈມຕີພັກ-ລັດຢ່າງເຂັ້ມງວດ, ມີມາດຕະການຕ້ານ ແລະ ສະກັດກັ້ນຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງ.

3. ນໍາໃຊ້ຄວາມໄດ້ປຽບຈາກສື່ສັງຄົມອອນລາຍເພື່ອເປັນເຄື່ອງມືໃນການຕໍ່ສູ້ຕ້ານ ແລະ ສະກັດກັ້ນຂໍ້ມູນທີ່ບໍ່ຖືກຕ້ອງ, ບໍ່ເປັນຄວາມຈິງໃນສື່ສັງຄົມອອນລາຍ, ໝູນໃຊ້ປະໂຫຍດ, ເສີມຂະຫຍາຍດ້ານດີ ຂອງສື່ສັງຄົມອອນລາຍ ເພື່ອຕໍ່ສູ້ຕ້ານທັດສະນະທີ່ບໍ່ຖືກຕ້ອງ, ບໍ່ເປັນຄວາມຈິງ ຂອງພວກສັດຕູ; ການຈັດຕັ້ງແຕ່ລະຂັ້ນຕ້ອງເປັນເຈົ້າການສະໜອງຂໍ້ມູນທີ່ຖືກຕ້ອງຢ່າງທັນການ ພ້ອມທັງກໍານົດທິດທາງໃນການ "ລຶບລ້າງ"

ຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງ, ຜິດເຂວແນວທາງຂອງພັກ ເພື່ອເປັນທ່າແຮງໃນການຕ້ານ ແລະ ສະກັດກັ້ນກົນອຸບາຍ, ເລ່ລ່ຽມ ຂອງພວກສັດຕູໃນສົງຄາມອິນເຕີເນັດ; ເສີມຂະຫຍາຍບົດບາດຂອງບຸກຄົນ ແລະ ການຈັດຕັ້ງ, ໂດຍສະເພາະແມ່ນຜູ້ທີ່ເປັນເຈົ້າຂອງເວັບໄຊ້, blogs, fanpages, ບຸກຄົນທີ່ມີຊື່ສຽງ ແລະ ມີອິດທິພົນໃນສື່ສັງຄົມອອນລາຍ, ມີຄວາມສາມາດດຶງດູດຜູ້ຊົມ, ຜູ້ຟັງມາສົນທະນາແລກປ່ຽນ ເພື່ອສ້າງສະພາບແວດລ້ອມ ຂອງສື່ສັງຄົມອອນລາຍໃຫ້ເຂັ້ມແຂງ; ເພີ່ມທະວີ ແລະ ຜັນຂະຫຍາຍຮູບແບບໂຄສະນາ, ເຜີຍແຜ່ຂໍ້ມູນຂ່າວສານດ້ານຜົນສຳເລັດໃນຂະບວນການປ່ຽນໃໝ່ຂອງປະເທດ;ບຸກຄົນ ແລະ ວຽກງານທີ່ເປັນແບບຢ່າງ; ຮີດຄອງປະເພນີອັນດີງາມຂອງຊາດເພື່ອແນ່ໃສ່ເຜີຍແຜ່ສິ່ງທີ່ດີໃຫ້ແກ່ທຸກຄົນດ້ວຍຄຳຂວັນທີ່ວ່າ: "ລຶບລ້າງຄວາມຊົ່ວດ້ວຍຄວາມສວຍງາມ" ຕ້ານ ແລະ ສະກັດກັ້ນການປ່ຽນທາດໂດຍຜົນກະທົບດ້ານລົບຈາກທັດສະນະທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງຂອງພວກສັດຕູ; ເປີດເວທີປາໄສ, ສະມາຄົມ, ກຸ່ມ, ສ້າງກຳລັງປ້ອງກັນຄວາມສະຫງົບໃນສື່ສັງຄົມອອນລາຍ; ສ້າງຮູບພາບ ແລະ ຄລິບວິດີໂອ ທີ່ມີເນື້ອຫາດ້ານບວກ ເພື່ອປຸກລະດົມປະຊາຊົນກໍ່ຄືຜູ້ຊົມໃຊ້ສື່ສັງຄົມອອນລາຍໃຫ້ເປັນເຈົ້າການ, ມີສະຕິລະວັງຕົວຕໍ່ການໂຄສະນາ, ເຜີຍແຜ່ທິດສະດີທີ່ບໍ່ຖືກຕ້ອງ, ບໍ່ມີມູນຄວາມຈິງຂອງພວກສັດຕູ; ພະນັກງານ-ສະມາຊິກພັກຜູ້ທີ່ຊົມໃຊ້ສື່ສັງຄົມອອນລາຍຕ້ອງຮັກສາບົດບາດໃນການໂຄສະນາ, ເຜີຍແຜ່ຂໍ້ມູນຂ່າວສານດ້ານບວກຢ່າງເປັນປົກກະຕິ.

4. ຖືສຳຄັນຕໍ່ການລົງທຶນງົບປະມານໃນການເຄື່ອນໄຫວຕ້ານ ແລະ ສະກັດກັ້ນຂໍ້ມູນຂ່າວສານບິດເບືອນ, ບໍ່ມີມູນຄວາມຈິງທີ່ພວກອິດທິກຳລັງປໍລະປັກ ແລະ ພວກປະຕິການໂຄສະນາ, ເຜີຍແຜ່ໃນສື່ສັງຄົມອອນລາຍ; ຍົກສູງຄວາມຮັບຮູ້ກ່ຽວກັບລະບົບການເມືອງໃຫ້ປະຊາຊົນປະຊາຊົນ, ໂດຍສະເພາະແມ່ນກຳລັງຫຼັກແຫຼ່ງໃນການປ້ອງກັນຄວາມສະຫງົບໃນສື່ສັງຄົມອອນລາຍ; ມີນະໂຍບາຍທີ່ດຶງດູດໃຈ, ນຳໃຊ້ ແລະ ໃຫ້ລາງວັນແກ່ຜູ້ທີ່ມີຄວາມສາມາດດ້ານຄວາມປອດໄພທາງສື່ສັງຄົມອອນລາຍ, ນັກຮຽນ, ນັກສຶກສາທີ່ກຳລັງສຶກສາວິຊາຄວາມປອດໄພດ້ານຂໍ້ມູນຂ່າວສານ ແລະ ຄວາມປອດທາງສື່ສັງຄົມອອນລາຍ.

5. ເພີ່ມທະວີ, ເປີດກວ້າງການຮ່ວມມືກັບສາກົນໃນຂົງເຂດເຕັກໂນໂລຊີ, ຂໍ້ມູນຂ່າວສານ ແລະ ຄວາມປອດໄພທາງອິນເຕີເນັດ; ແລກປ່ຽນບົດຮຽນປະສົບການກັບບັນດາປະເທດ ແລະ ອົງການຈັດຕັ້ງໃນທົ່ວໂລກໃນການສ້າງນະໂຍບາຍ, ຂໍ້ກຳນົດກ່ຽວກັບການຄຸ້ມຄອງ,ຊຸກຍູ້ການນຳໃຊ້,ພັດທະນາເຕັກໂນໂລຊີ ແລະ ຄວາມປອດໄພດ້ານຂໍ້ມູນຂ່າວສານ ເພື່ອຕໍ່ສູ້ຕ້ານສົງຄາມຂໍ້ມູນຂ່າວສານໃນສື່ສັງຄົມອອນລາຍ...ຯ

**<u>ແຫຼ່ງຂໍ້ມູນ:</u>**

(1) ປຶ້ມແນວຄິດ, ທິດສະດີກ່ຽວກັບການປ່ຽນແປງໃໝ່ແລະພັດທະນາປະເທດຊາດ (ສາດສະດາຈານ ປອ.ຫງວຽນ ຊວນ ແທ່ງ, Nguyễn Xuân Thanh), ຕີພິມໂດຍ: ໂຮງພິມແຫ່ງຊາດຊືເທິດ (N.X.B Sư Thật), H.2021, ໜ້າ 473.

(2) ເອກະສານກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີXIII ຂອງພັກກອມມູນິດຫວຽດນາມ, ຕີພິມໂຮງພິມແຫ່ງຊາດຊືເທິດ (N.X.B Sư Thật), H.2021, ເຫຼັ້ມ 2, ໜ້າ 172.

(3) Sách đã dẫn, ເລ່ມ 1, ໜ້າ.277.

# ວາລະສານກໍ່ສ້າງພັກ, ສະບັບ 262 ທັນວາ 2023

**ຜູ້ຊີ້ນຳ**

ທ່ານ ປອ ວິສຸກ ພົມພິທັກ
ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ

**ຄະນະບັນນາທິການ**

ທ່ານ ພອນສະຫວັນ ໄຊຊະນະ ຫົວໜ້າ
ທ່ານ ວິລັດ ສຸມິຈັນ ຮອງ
ທ່ານ ນ. ແກ້ວໃຈ ແສງມີໄຊ ຮອງ
ທ່ານ ນ. ແກ້ວຕາ ພັນດານຸວົງ ຮອງ
ທ່ານ ຄອນຄຳ ໂສລັດຕະນະວົງ ຮອງ

**ບັນນາທິການ, ອອກແບບ ແລະ ຈັດໜ້າ**

ທ່ານ ແສງອາລຸນ ຈັນທາທອນ
ທ່ານ ນ. ພິດສະໄໝ ວິໄລຮັກ
ທ່ານ ບານ ມູນປະເສີດ
ທ່ານ ນ. ແສງຄຳ ຈິດຕະວົງ

- ຂໍ້ຕົກລົງ 02/ ຄຈສພ, ທະບຽນພິມ 255/ສມຊ.
- ບກ ໂທ: (021) 840420, 840421.
- E-Mail: Korsangphakmagazine@gmail.com
- ແຈ້ງບົດສົ່ງທາງ E-Mail: 020 59846399

**ຮັບຜິດຊອບບໍລິຫານ-ຈຳໜ່າຍ**

ທ່ານ ນ. ແສງອອນ ແກ້ວມີມັນລັດ
ທ່ານ ນ. ແສງແກ້ວ ພົມມະວົງ
ທ່ານ ພອນສະຫວັນ ລາຊະບັນເທົາ (ຈຳໜ່າຍ)
ທ່ານ ນ. ຈັນອາລີຈິດ ສົມພາບມີໄຊ
ທ່ານ ນ. ອານຸລັກ ຈິດຕິລາດ

## ສາລະບານ

| ນາມປາກກາ | ຫົວຂໍ້ບົດ | ໜ້າ |
|---|---|---|
| | **ບົດນຳ** | |
| ພິດສະໄໝ | -ຊົມເຊີຍວັນສ້າງຕັ້ງ ສປປ ລາວ ຄົບຮອບ 48ປີຢ່າງສຸດໃຈ | 1 |
| ວຽງພັນ ຈິດສະດີ | -ໝູນໃຊ້ແນວຄິດໄກສອນ ພົມວິຫານ ກ່ຽວກັບການກໍ່ສ້າງ-ບຳລຸງ | 5 |
| | **ທັດສະດີ ແລະ ພຶດຕິກຳ** | |
| ສູນທອນ ທອງຊະນະ | -ວຽກງານການເມືອງ-ແນວຄິດ ຈະດີ, ຂະບວນການຈະຟົດຟື້ນ, ພະນັກງານ | 9 |
| ຮັກກັນຕະນາ ໂດຍສີປະເສີດ | -ແຂວງຫຼວງນ້ຳທາ ເອົາໃຈໃສ່ວຽກງານແຂ່ງຂັນ-ຍ້ອງຍໍ ເປັນວຽກງານໜຶ່ງ | 13 |
| ໄຊຊະນະ ສຸວັນນະເມທີ | -ອົງຄະນະພັກແຂວງຈຳປາສັກ ເອົາໃຈໃສ່ໃນການປັບປຸງ, ກໍ່ສ້າງການຈັດຕັ້ງ | 17 |
| ເຊີຍເມືອງຊຳ | - ເມືອງແບງ ແບບຢ່າງໃນການແກ້ໄຂບັນຫາຢາເສບຕິດ | 23 |
| ຂຸນທະວີ ບຸນທະວົງ | - ປັບປຸງວຽກງານກໍ່ສ້າງ-ບຳລຸງພະນັກງານ ຢູ່ພະແນກສຶກສາທິການ ແລະ ກິລາ | 27 |
| ຈິນດາ ກະທາທອງ | -ຍົກສູງຄຸນນະພາບການຈັດຕັ້ງປະຕິບັດວຽກງານຊາວໜຸ່ມ ຢູ່ແຂວງໄຊຍະບູລີ | 31 |
| | **ຄົ້ນຄວ້າ-ແລກປ່ຽນ** | |
| ສຸກສະເຫຼີມພອນ ໄນມະນີ | -ເພີ່ມທະວີຄວາມຮັບຜິດຊອບ ຂອງຄະນະພັກແຕ່ລະຂັ້ນ ຕໍ່ວຽກງານປ້ອງກັນພັກ | 37 |
| ແກ້ວປະສິດ ຈັນທະພົມ | -ຄະນະພັກຫ້ອງພະລາທິການ ປກສ ແຂວງຈຳປາສັກ ຖືເອົາການຍົກສູງຄຸນນະພາບ | 41 |
| | **ວຽກດີຄົນເດັ່ນ** | |
| ເຄນດີ ທຳມະວອນ | -ຜະລິດຕະພັນປຸງແຕ່ງຊາ ທາງອອກໜຶ່ງໃນການສ້າງລາຍຮັບທີ່ໝັ້ນຄົງ | 46 |
| | **ບົດຮຽນຕ່າງປະເທດ** | |
| ຄຳພອນ ລໍສະຫວັດ | -ຕ້ານ ແລະ ສະກັດກັ້ນກົນອຸບາຍ, ເລ່ຫຼ່ຽມ ທີ່ຫວັງທຳລາຍມ້າງເພພັກ-ລັດ | 49 |
| | -ສາລະບານ | 54 |